**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ 381 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 21-12-2023

# ດຳລັດ

## ວ່າດ້ວຍການກຳນົດໜ້າວຽກ ແລະ ແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ທ້າຍສະໄໝ ຮອດປີ 2025, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2024 ແລະ ແຜນການແກ້ໄຂຜົນການກວດສອບ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 30/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 118/ສພຊ ລົງວັນທີ 21 ພະຈິກ 2023 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX (2021-2025), ທິດທາງແຜນພັດທະນາເສດຖະກິດ-ສັງຄົມ ທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024;
- ອີງຕາມ ມະຕິ ສະບັບເລກທີ 119/ສພຊ, ລົງວັນທີ 21 ພະຈິກ 2023 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ ແລະ ແຜນເງິນຕາ ໃນໄລຍະກາງສະໄໝ 5 ປີ IX (2021-2025) ແລະ ທິດທາງທ້າຍສະໄໝຮອດປີ 2025, ການຈັດຕັ້ງປະຕິບັດແຜນງົບປະມານ ແລະ ແຜນເງິນຕາ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 113/ສພຊ, ລົງວັນທີ 21 ພະຈິກ 2023 ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ແຜນການປະຈຳປີ 2024 ແລະ ມະຕິ ສະບັບເລກທີ 114/ສພຊ, ລົງວັນທີ 21 ພະຈິກ 2023 ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ ຮອດປີ 2025 ແລະ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2024;
- ອີງຕາມ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນພະຈິກ ປີ 2023 ໃນລະຫວ່າງວັນທີ 23-24 ພະຈິກ 2023.

ເພື່ອສືບຕໍ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ທ້າຍສະໄໝ ຮອດປີ 2025, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2024 ທັງເປັນການສືບຕໍ່ບຸກທະລຸການຫັນປ່ຽນຢ່າງຮອບດ້ານ, ແຂງແຮງກວ່າເກົ່າ ແລະ ໃຫ້ບັນລຸຕາມແຜນທີ່ກຳນົດໄວ້.

## ນາຍົກລັດຖະມົນຕີ ອອກດຳລັດ:
## ໝວດທີ 1
## ຈຸດປະສົງ, ທິດທາງລວມ ແລະ ຄາດໝາຍສູ້ຊົນ

**ມາດຕາ 1 ຈຸດປະສົງ**

1. ເພື່ອຜັນຂະຫຍາຍ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 118/ສພຊ, ລົງວັນທີ 21 ພະຈິກ 2023 ວ່າດ້ວຍ ການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX (2021-2025), ທິດທາງແຜນພັດທະນາເສດຖະກິດ-ສັງຄົມ ທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024, ມະຕິ ສະບັບເລກທີ 119/ສພຊ, ລົງວັນທີ 21 ພະຈິກ 2023 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ ແລະ ແຜນເງິນຕາ ໃນໄລຍະກາງສະໄໝ 5 ປີ IX (2021-2025) ແລະ ທິດທາງທ້າຍສະໄໝຮອດປີ 2025, ການຈັດຕັ້ງປະຕິບັດແຜນງົບປະມານ ແລະ ແຜນເງິນຕາ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ມະຕິ ສະບັບເລກທີ 113/ສພຊ, ລົງວັນທີ 21 ພະຈິກ 2023 ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ແຜນການປະຈຳປີ 2024 ແລະ ມະຕິ ສະບັບເລກທີ 114/ສພຊ, ລົງວັນທີ 21 ພະຈິກ 2023 ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ ຮອດປີ 2025 ແລະ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2024.

2. ເພື່ອແຈ້ງທິດທາງລວມ, ຄາດໝາຍສູ້ຊົນ ແລະ ວຽກງານຈຸດສຸມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ທ້າຍສະໄໝຮອດປີ 2025, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2024 ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ຕາມສິດ ແລະ ພາລະບົດບາດຂອງຕົນ ໃຫ້ບັນລຸຜົນຕາມຈຸດປະສົງຄາດໝາຍທີ່ກຳນົດໄວ້.

**ມາດຕາ 2 ທິດທາງລວມ**

ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ທ້າຍສະໄໝຮອດປີ 2025, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງຊາດ ແລະ ແຜນເງິນຕາ ປະຈຳປີ 2024 ມີຄື:

1. ທິດທາງລວມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແຕ່ນີ້ຮອດທ້າຍປີ 2025 ຕ້ອງໄດ້ສືບຕໍ່ຍຶດໝັ້ນ ແລະ ຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍ ແລະວຽກງານຈຸດສຸມທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ບົນຈິດໃຈສືບຕໍ່ສ້າງການຫັນປ່ຽນໃໝ່ຢ່າງແຂງແຮງ ແລະ ເລິກເຊິ່ງໃນທຸກດ້ານ. ກ່ອນອື່ນໝົດແມ່ນຕ້ອງຮັບປະກັນໃຫ້ປະເທດຊາດສືບຕໍ່ມີຄວາມສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດສືບຕໍ່ຂະຫຍາຍຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ສາມາດແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນໄດ້ເປັນກ້າວໆ, ຍົກສູງສະຕິປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ແລະ ການພົວພັນຮ່ວມມືກັບຕ່າງປະເທດ ນັບມື້ໄດ້ຮັບການພັດທະນາຕາມທິດເຊື່ອມໂຍງ, ເຊື່ອມຈອດກັບພາກພື້ນ ແລະ ສາກົນ ໃນເງື່ອນໄຂໃໝ່ ແລະ ສາມາດສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030).

2. ທິດທາງລວມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2024 ມີດັ່ງນີ້:

1) ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2024 ແມ່ນເປັນແຜນບຸກບືນສູ້ຊົນການປະຕິບັດຄາດໝາຍຮອບດ້ານສົມທົບກັບການບຸກທະລຸໃນການແກ້ໄຂບັນຫາເຄັ່ງຮ້ອນທີ່ນອນຢູ່ໃນແຜນແກ້

ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນຈຳນວນໜຶ່ງ ເພື່ອໃຫ້ປີ 2024 ຊຶ່ງເປັນປີທີ່ ສປປ ລາວ ເຮົາເປັນປະທານອາຊຽນ, ເປັນປີທ່ອງທ່ຽວລາວ, ທັງເປັນປີທີ່ຈະມີຫຼາຍເຫດການສຳຄັນ ຂອງພັກ ແລະ ຂອງຊາດ, ສະນັ້ນ ຕ້ອງໄດ້ສູ້ຊົນເຮັດໃຫ້ປີ 2024 ສືບຕໍ່ມີຄວາມສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດສືບຕໍ່ຂະຫຍາຍຕົວຕໍ່ເນື່ອງ ແລະ ມີຄວາມໝັ້ນທ່ຽງຕາມທິດທີ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກກຳນົດໄວ້.

2) ສືບຕໍ່ພັດທະນາ ຊັບພະຍາກອນມະນຸດໃຫ້ໄດ້ຕາມຄາດໝາຍຂອງແຜນການ 5 ປີ ຄັ້ງທີ IX.
3) ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ຢ່າງມີຈຸດສຸມ ຕິດພັນກັບວຽກງານ 3 ສ້າງໃຫ້ແຂງແຮງ ແລະ ແທດຕົວຈິງກວ່າເກົ່າ.
4) ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ຕາມທິດສີຂຽວ ແລະ ຍືນຍົງ.
5) ປັບປຸງການຄຸ້ມຄອງບໍລິຫານລັດຕາມກົດໝາຍໃຫ້ແຂງແຮງຂຶ້ນ ທັງຮັບປະກັນຕາມທິດກະທັດຮັດ, ໂປ່ງໃສ, ທັນສະໄໝ ແລະ ມີປະສິດທິພາບສູງ; ແກ້ໄຂຂອດຂັ້ນອຸດຕັນ-ອຸປະສັກຕໍ່ການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ໃຫ້ມີຄວາມຄ່ອງຕົວ ແລະ ວ່ອງໄວກວ່າເກົ່າ.
6) ເພີ່ມທະວີການຮ່ວມມືກັບບັນດາປະເທດເພື່ອນມິດສາກົນ ແລະ ຄູ່ຮ່ວມພັດທະນາ ຕາມຫຼັກການຕ່າງຝ່າຍໄດ້ຮັບຜົນປະໂຫຍດ; ສ້າງສະພາບແວດລ້ອມທີ່ເອື້ອອຳນວຍແກ່ການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ ເພື່ອຍາດແຍ່ງເອົາການສະໜັບສະໜູນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມແຜນການ 5 ປີ ຄັ້ງທີ IX ໄດ້ກຳນົດໄວ້;. ເອົາໃຈໃສ່ຢ່າງສຸດຂີດ ແລະ ໃຫ້ມີຜົນສຳເລັດຢ່າງຈົບງາມ ຕໍ່ການກະກຽມ ແລະ ເປັນປະທານອາຊຽນກໍຄືເປີດປີທ່ອງທ່ຽວ.

ມາດຕາ 3 ຄາດໝາຍສູ້ຊົນຕົ້ນຕໍ

**1. ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ທ້າຍສະໄໝ ຮອດປີ 2025.**

1) ຮັກສາລະດັບການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດໃຫ້ມີຄວາມຕໍ່ເນື່ອງ ແລະ ມີສະຖຽນລະພາບຕາມມະຕິ XI ຂອງພັກ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025).
2) ສະກັດກັ້ນ ແລະ ແກ້ໄຂຜົນກະທົບຈາກຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ເງິນຕາຕໍ່ຊີວິດສັງຄົມ ແລະ ຊີວິດການເປັນຢູ່ປະຊາຊົນບັນດາເຜົ່າ ກໍຄືຊາວຜູ້ອອກແຮງງານໂດຍຈຳກັດຢ່າງສຸດຂີດບໍ່ໃຫ້ເກີດບັນຫາຫຍໍ້ທໍ້ວຸ້ນວາຍໃນສັງຄົມ.
3) ຫັນວິກິດການຂອງພາຍນອກໃຫ້ເປັນໂອກາດສຳລັບການປັບປຸງພາຍໃນ ໂດຍຍົກລະດັບຄວາມສາມາດ ແລະ ປະສິດທິພາບດ້ານການປະຕິບັດໜ້າທີ່ ທີ່ກ່ຽວຂ້ອງຂອງບໍລິຫານລັດ ກໍ່ຄືພາກທຸລະກິດ ຂຶ້ນອີກກ້າວໜຶ່ງ.

**2. ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2024.**

**2.1. ຄາດໝາຍດ້ານເສດຖະກິດມະຫາພາກ:**

1) ຄາດໝາຍດ້ານການເຕີບໂຕເສດຖະກິດ: ສູ້ຊົນໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍ ຕົວ 4,5% ຂຶ້ນໄປ, ຄິດເປັນມູນຄ່າລາຄາໃນປີ 293.786 ຕື້ກີບ, ລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນ ເທົ່າກັບ 1.787 ໂດລາສະຫະລັດຕໍ່ຄົນ, ລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນ ເທົ່າກັບ 1.668 ໂດລາສະຫະລັດ, ໃນນີ້:

- ຂະແໜງກະສິກຳ ຂະຫຍາຍຕົວ 2,6%, ກວມເອົາ 20,8% ຂອງ GDP;
- ຂະແໜງອຸດສາຫະກຳ ຂະຫຍາຍຕົວ 5,0%, ກວມເອົາ 32,4% ຂອງ GDP;
- ຂະແໜງບໍລິການ ຂະຫຍາຍຕົວ 4,8%, ກວມເອົາ 36,1% ຂອງ GDP;

- ຂະແໜງພາສີ-ອາກອນຜະລິດຕະພັນສຸດທິ ຂະຫຍາຍຕົວ 3,9%, ກວມເອົາ 10,7% ຂອງ GDP.

2) **ຄາດໝາຍດ້ານງົບປະມານລັດ**: ສູ້ຊົນເກັບລາຍຮັບງົບປະມານທັງໝົດ ໃຫ້ໄດ້ 50.107 ຕື້ກີບ ເທົ່າກັບ 17% ຂອງ GDP; ຄາດຄະເນລາຍຈ່າຍງົບປະມານທັງໝົດ ຢູ່ໃນລະດັບ 58.914 ຕື້ກີບ ເທົ່າກັບ 20% ຂອງ GDP ແລະ ການຂາດດຸນງົບປະມານ 8.807 ຕື້ກີບ ເທົ່າກັບປະມານ 3% ຂອງ GDP.

3) **ຄາດໝາຍດ້ານເງິນຕາ**: ສູ້ຊົນຄວບຄຸມອັດຕາເງິນເຟີ້ໃຫ້ຫຼຸດລົງ ໃຫ້ຢູ່ໃນລະດັບບໍ່ເກີນ 9% ໃນທ້າຍປີ 2024; ຄວບຄຸມປະລິມານເງິນ M2 ໃຫ້ຂະຫຍາຍຕົວ ບໍ່ເກີນ 25% ທຽບໃສ່ປີຜ່ານມາ; ຄຸ້ມຄອງອັດຕາແລກປ່ຽນເໝັ້ງຕີງຢູ່ໃນລະດັບບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້; ສູ້ຊົນເຮັດໃຫ້ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າ ໄດ້ຢ່າງຕ່ຳ 5 ຫາ 6 ເດືອນຂຶ້ນໄປ; ຄຸ້ມຄອງລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກຜ່ານລະບົບທະນາຄານ ໃຫ້ໄດ້ບໍ່ຫຼຸດ 70% ຂອງການສົ່ງອອກທັງໝົດ; ຊຸກຍູ້ທະນາຄານທຸລະກິດສືບຕໍ່ລະດົມເງິນຝາກຂອງ ທະນາຄານທຸລະກິດ ບັນລຸໄດ້ 85% ຂອງ GDP; ຊຸກຍູ້ໃຫ້ທະນາຄານທຸລະກິດປ່ອຍສິນເຊື່ອ ໃຫ້ໂຄງການທີ່ມີປະສິດທິຜົນ ໂດຍສຸມໃສ່ສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກເປັນບູລິມະສິດ, ສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ເຮັດໃຫ້ຍອດເຫຼືອສິນເຊື່ອຂອງຂະແໜງການທະນາຄານຮັບປະກັນຄຸນນະພາບ ບັນລຸໄດ້ 65% ຂອງ GDP ແລະ ຄວບຄຸມອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຂອງທະນາຄານທຸລະກິດ ໃຫ້ຢູ່ໃນລະດັບບໍ່ເກີນ 3%.

4) **ຄາດໝາຍດ້ານຂາອອກ-ຂາເຂົ້າ**: ສູ້ຊົນໃຫ້ມູນຄ່າການສົ່ງອອກ ບັນລຸໄດ້ 8.724,33 ລ້ານໂດລາສະຫະລັດ, ມູນຄ່າການນຳເຂົ້າ 7.285,76 ລ້ານໂດລາສະຫະລັດ ແລະ ເກີນດຸນການຄ້າ 1.438,57 ລ້ານໂດລາສະຫະລັດ.

5) **ຄາດໝາຍດ້ານການລົງທຶນທົ່ວສັງຄົມ**: ສູ້ຊົນລະດົມການລົງທຶນລວມທັງໝົດ ໃຫ້ໄດ້ 56.784 ຕື້ກີບເທົ່າກັບ 19,33% ຂອງ GDP, ໃນນີ້ ທຶນຈາກງົບປະມານພາຍໃນ ໃຫ້ໄດ້ 5.000 ຕື້ກີບ, ທຶນຈາກຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໃຫ້ໄດ້ 15.449 ຕື້ກີບ, ທຶນຈາກພາກສ່ວນເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ໄດ້ 32.435 ຕື້ກີບ ແລະ ທຶນຈາກແຫຼ່ງອື່ນໆ (ການລົງທຶນຈາກຊຸມຊົນ) ໃຫ້ໄດ້ 3.900 ຕື້ກີບ.

**2.2. ຄາດໝາຍດ້ານເສດຖະກິດ:**

1) **ຄາດໝາຍດ້ານກະສິກຳ ແລະ ປ່າໄມ້**: ສູ້ຊົນການຜະລິດເຂົ້າເປືອກລວມ ໃຫ້ໄດ້ 3,86 ລ້ານໂຕນ; ການຜະລິດພືດສະບຽງອາຫານ ໃຫ້ໄດ້ 2,62 ລ້ານໂຕນ; ການຜະລິດພືດເປັນສິນຄ້າ ໃຫ້ໄດ້ 8,66 ລ້ານໂຕນ; ການຜະລິດຊີ້ນ, ໄຂ່ ແລະ ປາ ໃຫ້ໄດ້ 554.000 ໂຕນ; ມູນຄ່າການສົ່ງອອກຜະລິດຕະພັນດ້ານກະສິກຳ ໃຫ້ໄດ້ 1.200 ລ້ານໂດລາສະຫະລັດ, ໃນນີ້ ການສົ່ງອອກພືດ ແລະ ຜະລິດຕະພັນພືດ 1.100 ລ້ານໂດລາສະຫະລັດ ແລະ ການສົ່ງອອກສັດ ແລະ ຜະລິດຕະພັນສັດ 100 ລ້ານໂດລາສະຫະລັດ.

2) **ຄາດໝາຍດ້ານອຸດສາຫະກຳ ແລະ ການຄ້າ**: ສູ້ຊົນສ້າງມູນຄ່າການຜະລິດອຸດສາຫະກຳປຸງແຕ່ງແລະຫັດຖະກຳ ໃຫ້ບັນລຸ 17.900,10 ຕື້ກີບ ແລະ ສ້າງມູນຄ່າການຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ບໍລິການ) ໃຫ້ບັນລຸ 91.375 ຕື້ກີບ.

3) **ຄາດໝາຍດ້ານພະລັງງານ ແລະ ບໍ່ແຮ່**: ສູ້ຊົນການຜະລິດກະແສໄຟຟ້າ ໃຫ້ໄດ້ 51.112 ລ້ານກິໂລວັດໂມງ, ຄິດເປັນມູນຄ່າ ເທົ່າກັບ 56.564 ຕື້ກີບ, ໃນນີ້: ສົ່ງອອກໄປຕ່າງປະເທດ 41.867 ລ້ານກິໂລວັດໂມງ, ຄິດເປັນມູນຄ່າ ເທົ່າກັບ 2.812 ລ້ານໂດລາສະຫະລັດ ແລະ ຈຳໜ່າຍພາຍໃນປະເທດ 11.502 ລ້ານກິໂລວັດໂມງ, ຄິດເປັນມູນຄ່າ ເທົ່າກັບ 747 ລ້ານໂດລາສະຫະລັດ; ສູ້ຊົນໃຫ້ມູນຄ່າການຜະລິດແຮ່ທາດ ບັນລຸໄດ້ 27.013 ຕື້ກີບໃນນັ້ນ: ມູນຄ່າການສົ່ງອອກໄປຕ່າງປະເທດ 1.685 ລ້ານໂດລາສະຫະລັດ ແລະ ມູນຄ່າຈຳໜ່າຍແຮ່ທາດພາຍໃນປະເທດ 319 ລ້ານໂດລາສະຫະລັດ.

4) **ຄາດໝາຍດ້ານການຂົນສົ່ງ**: ສູ້ຊົນການບໍລິການຂົນສົ່ງສິນຄ້າ ໃຫ້ໄດ້ 14.002 ລ້ານໂຕນ ແລະ ຂົນສົ່ງໂດຍສານ ໃຫ້ໄດ້ 104.724 ລ້ານເທື່ອຄົນ.

**2.3. ຄາດໝາຍດ້ານວັດທະນະທຳ-ສັງຄົມ:**

(1) **ຄາດໝາຍດ້ານສຶກສາທິການ ແລະ ກິລາ:** ສູ້ຊົນໃຫ້ອັດຕາເຂົ້າຮຽນຂອງເດັກ 5 ປີໃນຊັ້ນການສຶກສາກ່ອນໄວຮຽນສະເລ່ຍໃນທົ່ວປະເທດໃຫ້ບັນລຸໄດ້ 82% ຂຶ້ນໄປ; ອັດຕາເຂົ້າຮຽນໃໝ່ ປ.1 ບັນລຸໄດ້ 98% ຂຶ້ນໄປ; ອັດຕາເຂົ້າຮຽນໃໝ່ລວມ ປ.5 ໃຫ້ບັນລຸໄດ້ 97% ຂຶ້ນໄປ; ອັດຕາປະລະການຮຽນຂອງນັກຮຽນ ປ.1 ບໍ່ໃຫ້ເກີນ 4,4%; ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ ບໍ່ໃຫ້ເກີນ 4,2%; ອັດຕາຈົບຊັ້ນປະຖົມ ໃຫ້ບັນລຸໄດ້ສູງກວ່າ 93,5%; ອັດຕາການເລື່ອນຊັ້ນ ປ.5 ຂຶ້ນ ມ.1 ໃຫ້ບັນລຸ 85%; ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ໃຫ້ບັນລຸໄດ້ລະຫວ່າງ 0,97-1,03; ອັດຕາເຂົ້າຮຽນໃໝ່ລວມ ມ.4 ໃຫ້ບັນລຸ 66,5% ຂຶ້ນໄປ; ອັດຕາປະລະການຮຽນຂອງນັກຮຽນ ຊັ້ນມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 11%; ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງ ຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບໃຫ້ບັນລຸໄດ້ຫຼາຍກວ່າ 25.000 ຄົນ; ຄູຊັ້ນປະຖົມ ແລະ ມັດທະຍົມສຶກສາໃຫ້ໄດ້ຮັບການຝຶກອົບຮົມ ບໍ່ໃຫ້ຫຼຸດ 10% ຂອງຈຳນວນຄູທັງໝົດ; ສົ່ງເສີມໃຫ້ນັກສຶກສາທີ່ສະໝັກເຂົ້າຮຽນຢູ່ມະຫາວິທະຍາໄລ ແລະ ສະຖານການສຶກສາຊັ້ນສູງຕ່າງໆ ໄດ້ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ໃຫ້ໄດ້ຫຼາຍກວ່າ 2.500 ຄົນ; ນັກຮຽນທີ່ຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບໃຫ້ບັນລຸ 2%; ສືບຕໍ່ສົ່ງເສີມມວນຊົນທຸກເພດ, ໄວເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາເພື່ອສຸຂະພາບ ໃຫ້ບັນລຸໄດ້ 44% ຂອງ ພົນລະເມືອງລາວ; ຊຸກຍູ້ ແລະ ສົ່ງເສີມການຄົ້ນຄວ້າວິທະຍາສາດໃຫ້ສຳເລັດບໍ່ໃຫ້ຫຼຸດ 40 ຫົວຂໍ້.

(2) **ຄາດໝາຍດ້ານສາທາລະນະສຸກ:** ສູ້ຊົນໃຫ້ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ ໃຫ້ຍັງເຫຼືອ 16% ຂອງປະຊາກອນໃນເປົ້າໝາຍ; ອັດຕາສ່ວນເດັກນ້ອຍ ລຸ່ມ 5 ປີ ທີ່ມີລວງສູງຕໍ່າກວ່າມາດຕະຖານ ໃຫ້ຍັງເຫຼືອ 28% ຂອງປະຊາກອນໃນເປົ້າໝາຍ; ອັດຕາການຕາຍຂອງເດັກລຸ່ມ 1 ປີ ໃຫ້ຍັງເຫຼືອ 22/1.000 ເດັກເກີດມີຊີວິດ; ອັດຕາການຕາຍຂອງເດັກລຸ່ມ 5 ປີ ໃຫ້ຍັງເຫຼືອ 32/ 1.000 ເດັກເກີດມີຊີວິດ; ອັດຕາສ່ວນການຕາຍຂອງແມ່ ໃຫ້ຍັງເຫຼືອ 120/100.000 ເດັກເກີດມີຊີວິດ; ອັດຕາການເກີດລູກມີແພດຊ່ວຍ ໃຫ້ໄດ້ 84% ຂອງປະຊາກອນເປົ້າໝາຍ; ອັດຕາການໃຫ້ວັກຊີນກັນພະຍາດໃນເດັກ ລຸ່ມ 1 ປີ ໃຫ້ໄດ້ 95% ຂອງປະຊາກອນເປົ້າໝາຍ; ອັດຕາຊົມໃຊ້ນໍ້າສະອາດ ໃຫ້ໄດ້ 94% ຂອງປະຊາກອນເປົ້າໝາຍ; ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ໃຫ້ໄດ້ 84% ຂອງຄອບຄົວທັງໝົດ; ອັດຕາການປົກຄຸມປະກັນສຸຂະພາບ ໃຫ້ໄດ້ 94,5% ຂອງປະຊາກອນທັງໝົດ; ອັດຕາການຮັບຮອງ ແລະ ປະກາດເປັນບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ 84% ຂອງບ້ານທັງໝົດ.

(3) **ຄາດໝາຍດ້ານແຮງງານ ແລະ ສະຫວັດດີການສັງຄົມ:** ສູ້ຊົນສຸມໃສ່ພັດທະນາສີມືແຮງງານໃຫ້ຜູ້ອອກແຮງງານທີ່ຈະເຂົ້າສູ່ຕຳແໜ່ງງານໃໝ່ໃຫ້ໄດ້ 8.000 ຄົນ; ສົ່ງເສີມການຈັດຫາວຽກເຮັດງານທຳເຂົ້າສູ່ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ ຕິດພັນກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃຫ້ໄດ້ 91.814 ຄົນ ແລະ ຄວບຄຸມອັດຕາວ່າງງານ ໃຫ້ຢູ່ໃນລະດັບບໍ່ເກີນ 5%; ຂະຫຍາຍການຄຸ້ມຄອງຫົວໜ່ວຍວິສາຫະກິດເພີ່ມໃໝ່ໃຫ້ໄດ້ 350 ຫົວໜ່ວຍ; ຂຶ້ນທະບຽນຜູ້ປະກັນຕົນໃໝ່ 31.500 ຄົນ, ໃນນີ້: ພາກລັດ 1.500 ຄົນ, ພາກວິສາຫະກິດ 27.000 ຄົນ ແລະ ຜູ້ສະໝັກໃຈ 3.000 ຄົນ; ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ໃຫ້ໄດ້ 691 ທ່ານ ເປັນເງິນທັງໝົດ 15 ຕື້ກີບ; ຊຸກຍູ້ສ້າງກອງທຶນຄຸ້ມຄອງໄພພິບັດໃຫ້ໄດ້ 15 ແຫ່ງ, ໃນນີ້ ຂັ້ນແຂວງ 03 ແຂວງ ແລະ ຂັ້ນເມືອງ 12 ເມືອງ; ສູ້ຊົນກວດກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ທຳການຜະລິດ ແລະ ເຂດຊຸມຊົນ, ເຂດຈຸດສຸມ ພັດທະນາ ໃຫ້ໄດ້ 7.500 ເຮັກຕາ; ຫຼຸດຜ່ອນຈຳນວນຜູ້ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກ ໃຫ້ຕໍ່າກວ່າ 40 ຄົນ.

(4) **ຄາດໝາຍດ້ານຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ:** ສູ້ຊົນສ້າງ ແລະ ຂະຫຍາຍວິທະຍຸຂັ້ນເມືອງ ໃຫ້ໄດ້ 1 ແຫ່ງ; ສູ້ຊົນຂະຫຍາຍລະບົບໂທລະໂຄ່ງໃຫ້ເຂົ້າເຖິງບ້ານຈຸດສຸມ 250 ບ້ານ; ສູ້ຊົນສ້າງຄອບຄົວວັດທະນະທຳໃຫ້ໄດ້ 26.000 ຄອບຄົວ ແລະ ບ້ານວັດທະນະທຳ ໃຫ້ໄດ້ 150 ບ້ານ; ສູ້ຊົນ ຂຶ້ນທະບຽນບັນຊີມໍຣະດົກວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຈາກຂັ້ນທ້ອງຖິ່ນໃຫ້ເປັນລະດັບຊາດ ຈຳນວນ 4 ແຫ່ງ; ສູ້ຊົນສຳຫຼວດ ແລະ ຂຶ້ນທະບຽນແຫຼ່ງບູຮານວິທະຍາໃຫ້ໄດ້ 4 ແຫຼ່ງ; ດຶງດູດນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ຽວພາຍໃນປະເທດ ໃຫ້ໄດ້ 3,51 ລ້ານເທື່ອຄົນ, ສ້າງລາຍຮັບປະມານ 742,04 ລ້ານໂດລາສະຫະລັດ; ສົ່ງເສີມການທ່ອງທ່ຽວ

ພາຍໃນ "ລາວທ່ຽວລາວ" ໃຫ້ໄດ້ 1,88 ລ້ານເທື່ອຄົນ, ເຮັດໃຫ້ເງິນສາມາດໝູນວຽນໄດ້ປະມານ 311,69 ລ້ານໂດລາສະຫະລັດ; ສູ້ຊົນສຳຫຼວດ, ຈັດສັນກຳນົດຂອບເຂດ, ອອກໃບຢັ້ງຢືນ ແລະ ປັກຫຼັກໝາຍຂອບເຂດແຫຼ່ງທ່ອງທ່ຽວ ໃຫ້ໄດ້ 3 ແຫ່ງ.

(5) **ຄາດໝາຍດ້ານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ**: ສ້າງຄອບຄົວພົ້ນທຸກ ໃຫ້ໄດ້ 35.000 ຄອບຄົວ; ສ້າງບ້ານພົ້ນທຸກ ໃຫ້ໄດ້ 500 ບ້ານ; ສ້າງເມືອງພົ້ນທຸກ ໃຫ້ໄດ້ 15 ເມືອງ; ສ້າງຄອບຄົວພັດທະນາ ໃຫ້ໄດ້ 33.000 ຄອບຄົວ; ສ້າງບ້ານພັດທະນາ ໃຫ້ໄດ້ 500 ບ້ານ; ສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ໃຫ້ໄດ້ 4 ບ້ານ; ສູ້ຊົນຈັດສັນທີ່ຢູ່ອາໃສໃຫ້ປະຊາຊົນ ໃຫ້ໄດ້ 433 ຄອບຄົວ, ຈັດສັນເຂດທຳການຜະລິດ ໃຫ້ໄດ້ 1.156 ຄອບຄົວ ແລະ ຈັດສັນອາຊີບ ໃຫ້ໄດ້ 6.000 ຄົນ; ສ້າງເມືອງເຂັ້ມແຂງຮອບດ້ານ ໃຫ້ໄດ້ 4 ເມືອງ; ຂະຫຍາຍກອງທຶນພັດທະນາບ້ານ ບ້ວງ 500 ລ້ານກີບ ຕໍ່ເມືອງທຸກຍາກຕາມເປົ້າໝາຍທີ່ກຳນົດ ໃຫ້ໄດ້ 14 ບ້ານ.

2.4. **ຄາດໝາຍດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**: ສູ້ຊົນຂຶ້ນທະບຽນອອກໃບຕາປົນໃຫ້ໄດ້ 300.000 ຕອນ ໃນຂອບເຂດທົ່ວປະເທດ; ສືບຕໍ່ສ້າງ ແລະ ປັບປຸງສະຖານີເຕືອນໄພລ່ວງໜ້າໃຫ້ໄດ້ 6 ແຫ່ງ, ສ້າງ ແລະ ຕິດຕັ້ງອຸປະກອນຕິດຕາມແຜ່ນດິນໄຫວ 4 ແຫ່ງ; ສືບຕໍ່ສ້າງ ແລະ ປັບປຸງສະຖານີອຸຕຸນິຍົມ ໃຫ້ໄດ້ 10 ແຫ່ງ ແລະ ສະຖານີອຸທົກກະສາດໃຫ້ໄດ້ 5 ແຫ່ງ; ສືບຕໍ່ສ້າງແຜນຄຸ້ມຄອງອ່າງຮັບນໍ້າຂະໜາດໃຫຍ່ ໃຫ້ໄດ້ 4 ອ່າງຮັບນໍ້າ ແລະ ສ້າງແຜນຄຸ້ມຄອງອ່າງນໍ້າໃຕ້ດິນ ໃຫ້ໄດ້ 2 ແຂວງ ຄື: ນະຄອນຫຼວງວຽງຈັນ ແລະ ສາລະວັນ; ສ້າງແຜນດຳເນີນງານເພື່ອຈັດຕັ້ງປະຕິບັດແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC Implementation plan), ສ້າງແຜນດຳເນີນງານໄລຍະຍາວ ການປ່ອຍທາດອາຍກາກບອນຕໍ່າຂອງ ສປປ ລາວ (LTLEDS)ສະບັບສຸດທ້າຍປີ 2024; ກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານ ສະໜາມຂີ້ເຫຍື້ອໃຫ້ໄດ້ມາດຕະຖານ ໃຫ້ໄດ້ 2 ຕົວເມືອງໃຫຍ່ ໃນຂອບເຂດທົ່ວປະເທດ.

2.5. **ຄາດໝາຍດ້ານເຕັກໂນໂລຊີ ແລະ ການສື່ສານ**: ຊຸກຍູ້ສົ່ງເສີມທຸກຂະແໜງການທັງພາກລັດ ແລະ ເອກະຊົນ ຫັນມານຳໃຊ້ສູນຂໍ້ມູນດິຈິຕ໋ອນ ໃຫ້ເພີ່ມຂຶ້ນຕື່ມ 10%; ສູ້ຊົນພັດທະນາ, ປັບປຸງ ແລະ ຂະຫຍາຍການນຳໃຊ້ບັນດາລະບົບຫ້ອງການທັນສະໄໝຂອງພາກລັດ ຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ໄດ້ຕື່ມ 18 ພາກສ່ວນ; ຂະຫຍາຍສະຖານີຮັບ-ສົ່ງສັນຍານໂທລະສັບມືຖື ລະບົບ 2G ຄວບຄຸມໃຫ້ໄດ້ 98%, ລະບົບ 3G ຄວບຄຸມໃຫ້ໄດ້ 87%, ລະບົບ 4G ຄວບຄຸມໃຫ້ໄດ້ 78% ຂອງພື້ນທີ່ບ້ານໃນຂອບເຂດທົ່ວປະເທດ ແລະ ລະບົບ 5G ຄວບຄຸມໃຫ້ໄດ້ 4% ໃນນະຄອນຫຼວງວຽງຈັນ; ຂະຫຍາຍຕາໜ່າງໄປສະນີ ໃຫ້ກວມເອົາ 90% ຂອງຕົວເມືອງໃນທົ່ວປະເທດ.

2.6. **ຄາດໝາຍດ້ານການຄຸ້ມຄອງ ແລະ ການບໍລິຫານລັດ**: ສູ້ຊົນສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ (ຕາມ 07 ດ້ານ) ໃຫ້ໄດ້ 02 ແຂວງ, ສ້າງເມືອງໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ (ຕາມ 05 ດ້ານ) ໃຫ້ໄດ້ 10 ເມືອງ ແລະ ສ້າງບ້ານໃຫ້ເປັນຫົວ ໜ່ວຍພັດທະນາ (ຕາມ 04 ດ້ານ) ໃຫ້ໄດ້ 514 ບ້ານ; ສູ້ຊົນສ້າງຕັ້ງເທດສະບານ ໃຫ້ໄດ້ 01 ແຫ່ງ ຄື: ເມືອງປາກຊັນ ແຂວງບໍລິຄຳໄຊ; ສູ້ຊົນປັບປຸງ ແລະ ສ້າງກົດໝາຍໃນການຄຸ້ມຄອງເສດຖະກິດ-ສັງຄົມ ໃຫ້ໄດ້ 25 ສະບັບ.

ນອກຈາກສຸມໃສ່ປະຕິບັດບັນດາຄາດໝາຍທີ່ກຳນົດໄວ້ໃນດຳລັດສະບັບນີ້, ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ສຸມໃສ່ປະຕິບັດບັນດາຄາດໝາຍຕ່າງໆ ທີ່ໄດ້ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2024 ທີ່ຕົນຮັບຜິດຊອບໃຫ້ບັນລຸຜົນຕາມຄາດໝາຍວາງໄວ້.

## ໝວດທີ 2
## ການກຳນົດວຽກງານ ແລະ ແບ່ງຄວາມຮັບຜິດຊອບ
## ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ທ້າຍສະໄໝ ຮອດປີ 2025

**ມາດຕາ 4 ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ, ແມ່ນມອບໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສຸມໃສ່ຈັດຕັ້ງປະຕິບັດວຽກງານ ດັ່ງນີ້:**

1. ສືບຕໍ່ຊຸກຍູ້ການຜະລິດ-ການບໍລິການ ຕາມທ່າແຮງບົ່ມຊ້ອນຂອງແຕ່ລະບໍລິເວນ ແລະ ທ້ອງຖິ່ນ ໂດຍເລັ່ງໃສ່ການຜະລິດກະສິກຳເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ການສົ່ງເສີມອຸດສາຫະກຳປຸງແຕ່ງ ຕາມ 8 ອຸດສາຫະກຳເປົ້າໝາຍ, ສົ່ງເສີມໂຄງການໄຟຟ້າພະລັງງານນ້ຳ, ພະລັງງານລົມ ແລະ ພະລັງງານສະອາດອື່ນໆ ແລະ ໂຄງການຂະໜາດໃຫຍ່ຈຳນວນໜຶ່ງທີ່ສາມາດຂັບເຄື່ອນເສດຖະກິດ ແລະ ເງິນຕາເຂົ້າມາປະເທດ ເປັນຕົ້ນ ທາງດ່ວນ, ທ່າບົກ, ເຂດເສດຖະກິດພິເສດ.

2. ປັບປຸງລະບົບຂົນສົ່ງ ໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານກວ່າເກົ່າ ເພື່ອເອື້ອອຳນວຍໃຫ້ແກ່ການຄ້າ ແລະ ການລົງທຶນ.

3. ເພີ່ມທະວີໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວຜ່ານສື່ຕ່າງໆ ເພື່ອດຶງດູດນັກທ່ອງທ່ຽວຕ່າງປະເທດ, ຈັດກິດຈະກຳການທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍ ແລະ ຊຸກຍູ້ພາກເອກະຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາວຽກງານນີ້ໃຫ້ຫຼາຍຂຶ້ນ.

4. ເລັ່ງໃສ່ແກ້ໄຂບັນຫາດ້ານເສດຖະກິດມະຫາພາກ ໂດຍສະເພາະ ອັດຕາເງິນເຟີ້, ອັດຕາແລກປ່ຽນ ດ້ວຍມາດຕະການຕ່າງໆທີ່ໄດ້ກຳນົດອອກໃນແຕ່ລະໄລຍະ, ລວມທັງການຜັນຂະຫຍາຍກົດໝາຍອອກເປັນລະບຽບການໃຫ້ລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ເຂັ້ມງວດ.

5. ສືບຕໍ່ຂະຫຍາຍຖານລາຍຮັບໃຫ້ເພີ່ມຂຶ້ນ ດ້ວຍການຂະຫຍາຍຖານລາຍຮັບໃໝ່ທີ່ຫຼາກຫຼາຍ ແລະ ມີຄວາມໝັ້ນຄົງ, ທັງຂະຫຍາຍການຫັນເປັນທັນສະໄໝໃຫ້ເພີ່ມຂຶ້ນ.

6. ສືບຕໍ່ແກ້ໄຂໜີ້ສິນສາທາລະນະໃຫ້ຫຼຸດລົງຕາມແຜນຍຸດທະຍາດທີ່ໄດ້ຮັບຮອງ, ສືບຕໍ່ປັບປຸງລັດວິສາຫະກິດ ໃຫ້ສຳເລັດໂດຍໄວ ໂດຍສະເພາະ ວິສາຫະກິດທີ່ເປັນຍຸດທະສາດ.

7. ສືບຕໍ່ພັດທະນາພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງຫຼາຍຂຶ້ນ.

**ມາດຕາ 5 ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ ແມ່ນມອບໃຫ້ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສຸມໃສ່ຈັດຕັ້ງປະຕິບັດວຽກງານ ດັ່ງນີ້:**

1. ສືບຕໍ່ພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ, ເອົາໃຈໃສ່ປັບປຸງການຮຽນ-ການສອນ, ທັກສະການອ່ານ, ການຂຽນພາສາລາວ ແລະ ທັກສະການຄິດໄລ່ເລກພື້ນຖານ; ຂະຫຍາຍການສຶກສາຊັ້ນມັດທະຍົມຕອນຕົ້ນ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ ແລະ ສົ່ງເສີມການຄົ້ນຄວ້າວິທະຍາສາດ.

2. ສຸມໃສ່ປັບປຸງວຽກງານສາທາລະນະສຸກ ໃຫ້ມີຄຸນນະພາບ ໂດຍການຫັນໄປສູ່ກຸ້ມຕົນເອງດ້ານການເງິນ, ເປັນຊ່ຽວຊານສະເພາະດ້ານໃນການປິ່ນປົວພະຍາດ, ປັບປຸງການບໍລິການປິ່ນປົວໃຫ້ກັບຄົນເຈັບ ຕາມມາດຖານ 5 ດີ 1 ພໍໃຈ; ສືບຕໍ່ປັບປຸງ ແລະ ກໍ່ສ້າງໂຮງໝໍຂັ້ນຕ່າງໆໃຫ້ຮັບປະກັນທາງດ້ານມາດຖານຄຸນນະພາບ.

3. ສືບຕໍ່ຝຶກ ແລະ ພັດທະນາສີມືແຮງງານໃນສາຂາວິຊາຊີບຕ່າງໆ ທີ່ມີຄວາມຕ້ອງການຂອງຕະຫຼາດ, ທັງສາມາດສະໜອງແຮງງານເພື່ອໄປເຮັດວຽກຢູ່ພາຍໃນ ແລະ ຕ່າງປະເທດ ແລະ ສາມາດປະກອບອາຊີບອິດສະຫຼະ, ພ້ອມທັງປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ຕາມກົນໄກການຮ່ວມອົງການສາມຝ່າຍ.

**ມາດຕາ 6 ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍຊີວິດການເປັນຢູ່ຂອງປະຊາຊົນທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ ແມ່ນມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສູນກາງສະຫະພັນແມ່ຍິງລາວ, ສູນກາງຊາວໜຸ່ມ, ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສຸມໃສ່ຈັດຕັ້ງປະຕິບັດວຽກງານ ດັ່ງນີ້:**

1. ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢ່າງຕັ້ງໜ້າ ດ້ວຍການສະໜອງພື້ນຖານໂຄງລ່າງທີ່ຈຳເປັນໃນເຂດຈຸດສຸມຂອງລັດຖະບານ, ຂອງທ້ອງຖິ່ນ ແລະ ເອົາໃຈໃສ່ວຽກງານຈັດສັນພູມລຳເນົາ ແລະ ອາຊີບຄົງທີ່; ສົ່ງເສີມພາກສ່ວນເສດຖະກິດຕ່າງໆ ປະກອບສ່ວນໃນການພັດທະນາຊົນນະບົດ ຕິດພັນກັບການສ້າງວຽກເຮັດງານທຳ ແລະ ລາຍໄດ້ໃຫ້ກັບປະຊາຊົນ ທີ່ໝັ້ນຄົງ.

2. ພັດທະນາລະບົບປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ ດ້ວຍການປັບປຸງ ແລະ ຂະຫຍາຍອັດຕາການປົກຄຸມປະກັນສັງຄົມພາກທຸລະກິດ ແລະ ຜູ້ສະໝັກໃຈໃຫ້ກວ້າງຂວາງ, ປັບປຸງການບໍລິຫານຄຸ້ມຄອງ ແລະ ການບໍລິການໃຫ້ວ່ອງໄວ, ຂະຫຍາຍການບໍລິການສູ່ບັນດາເມືອງຈຳນວນໜຶ່ງ ແລະ ບໍລິການເຄື່ອນທີ່.

3. ເອົາໃຈໃສ່ພັດທະນາວຽກງານປົກປ້ອງທາງສັງຄົມ ໃຫ້ກວ້າງຂວາງຫຼາຍຂຶ້ນ ເພື່ອໃຫ້ກຸ່ມຄົນດ້ອຍໂອກາດຕ່າງໆໄດ້ຮັບການຊ່ວຍເຫຼືອຢ່າງສົມເຫດສົມຜົນ.

4. ສຸມໃສ່ຊຸກຍູ້ວຽກງານແກ້ໄຂລະເບີດບໍ່ທັນແຕກ ໃຫ້ມີຄວາມຄ່ອງຕົວກວ່າເກົ່າຕິດພັນກັບການບັນລຸຄາດໝາຍ ແລະ ຕົວຊີ້ບອກຕາມເປົ້າໝາຍການພັດທະນາແບບຍືນຍົງ ທີ 18.

**ມາດຕາ 7 ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ ແມ່ນມອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສຸມໃສ່ຈັດຕັ້ງປະຕິບັດວຽກງານ ດັ່ງນີ້:**

1. ສືບຕໍ່ປົກປັກຮັກສາຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ, ສົ່ງເສີມເສດຖະກິດໝູນວຽນ, ການຜະລິດກະສິກຳສີຂຽວ, ການທ່ອງທ່ຽວສີຂຽວ ແລະ ໂຄງການພະລັງງານສະອາດ.

2. ຊຸກຍູ້ການສ້າງຍຸດທະສາດການນຳໃຊ້ທີ່ດິນຂັ້ນສູນກາງ ແລະ ຂັ້ນແຂວງ ພ້ອມທັງປັບປຸງນິຕິກຳ ແລະ ລະບຽບການຕ່າງໆກ່ຽວກັບທີ່ດິນໃຫ້ຄົບຖ້ວນ ແລະ ຮັດກຸມ; ສືບຕໍ່ຂຶ້ນທະບຽນອອກໃບຕາດິນໃຫ້ສຳເລັດຕາມຄາດໝາຍ ພ້ອມທັງສືບຕໍ່ທັນລະບົບການຄຸ້ມຄອງທີ່ດິນໃຫ້ເປັນທັນສະໄໝເພື່ອເຊື່ອມຖານຂໍ້ມູນທີ່ດິນ ແລະ ການເກັບລາຍຮັບຈາກທີ່ດິນ.

3. ປັບປຸງກົນໄກ, ຂັ້ນຕອນໃນການຈັດສັນ ແລະ ຕິດຕາມກວດກາການນຳໃຊ້ທີ່ດິນຂອງລັດໃນໂຄງການລົງທຶນຕ່າງໆ ທີ່ຈັບຈອງໄວ້ບໍ່ມີການພັດທະນາ ໂດຍສະເພາະໂຄງການເຊົ່າ-ສຳປະທານທີ່ດິນ, ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ ກ່ຽວກັບທີ່ດິນ ໃຫ້ຫຼຸດລົງຢ່າງຕໍ່ເນື່ອງ.

4. ສືບຕໍ່ຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ແນໃສ່ບັນລຸຄາດໝາຍການຫຼຸດຜ່ອນການປ່ອຍ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວໃຫ້ເປັນສູນ ໃນປີ 2050, ພ້ອມທັງສົ່ງເສີມການສ້າງຄວາມທົນທານ ແລະ ການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ລວມທັງ ການຊື້-ຂາຍສິນເຊື່ອກາກບອນ.

5. ສຸມໃສ່ສ້າງ ແລະ ປັບປຸງສະຖານີອຸຕຸນິຍົມ, ສະຖານີອຸທົກກະສາດ ແລະ ສະຖານີວັດແທກສະພາບອາກາດ ໃຫ້ມີຄວາມທັນສະໄໝ, ພະຍາກອນອາກາດໄດ້ທັນການ ແລະ ຊັດເຈນ.

6. ເພີ່ມທະວີຊຸກຍູ້ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ແລະ ເມືອງ ໃຫ້ສ້າງກອງທຶນຄຸ້ມຄອງໄພພິບັດຕາມກົດໝາຍທີ່ກຳນົດໄວ້.

**ມາດຕາ 8** ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນໍາໃຊ້ທ່າແຮງ,ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ ແມ່ນມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງການຕ່າງປະເທດ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສຸມໃສ່ຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

1. ສືບຕໍ່ພັດທະນາພື້ນຖານໂຄງລ່າງ ດ້ານເສັ້ນທາງຄົມມະນາຄົມຂົນສົ່ງທາງບົກ, ທາງລົດໄຟ, ທາງນໍ້າ, ທາງອາກາດ ໃຫ້ສໍາເລັດຕາມແຜນງານ ແລະ ໂຄງການທີ່ໄດ້ກໍານົດໄວ້ ໂດຍສະເພາະ ທາງດ່ວນ, ທາງລົດໄຟ, ທ່າບົກຕ່າງໆ.

2. ປັບປຸງລະບົບຂົນສົ່ງຕ່າງໆ ໃຫ້ມີຄວາມວ່ອງໄວ.

3. ສືບຕໍ່ປັບປຸງ ແລະ ຂະຫຍາຍວຽກງານການຫັນເປັນທັນສະໄໝ ໃຫ້ກວ້າງຂວາງຕື່ມ ໂດຍສະເພາະ ການຫັນເປັນເສດຖະກິດດີຈີຕອນ ເພື່ອປະກອບເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

4. ສືບຕໍ່ເພີ່ມທະວີການຮ່ວມມື ແລະ ເປັນເຈົ້າການເຂົ້າຮ່ວມການຈັດຕັ້ງປະຕິບັດຂອບການຮ່ວມມືດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ຕ່າງໆ ທີ່ ສປປ ລາວ ເປັນພາຄີ ໃຫ້ມີຜົນໄດ້ຮັບສູງ ເປັນຕົ້ນ ຂອບການຮ່ວມມືອາຊຽນ, ຂອບການຮ່ວມມື AFTA, ຂອບການຮ່ວມມືແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ ແລະ ອື່ນໆ.

5. ສືບຕໍ່ຮ່ວມມືກັບປະເທດເພື່ອນມິດຍຸດທະສາດ, ບັນດາປະເທດເພື່ອນມິດສາກົນ ແລະ ອົງການຈັດຕັ້ງສາກົນຕ່າງໆ ຕາມແຜນງານ ແລະ ໂຄງການທີ່ໄດ້ຮັບຮອງນໍາກັນ, ພ້ອມນີ້ ກໍເອົາໃຈໃສ່ເຂົ້າຮ່ວມ ແລະ ພົບປະແລກປ່ຽນກອງປະຊຸມສາກົນສໍາຄັນໃນລະດັບຕ່າງໆ.

**ມາດຕາ 9** ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທໍາ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ ແມ່ນມອບໃຫ້ກະຊວງພາຍໃນ, ກະຊວງຍຸຕິທໍາ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສຸມໃສ່ຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

1. ສືບຕໍ່ປັບປຸງລະບົບ ແລະ ກົນໄກການບໍລິຫານລັດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ທັນສະໄໝ;

2. ສືບຕໍ່ປັບປຸງການຫັນຫົວໜ່ວຍງົບປະມານທີ່ມີລາຍຮັບວິຊາການໄປກຸ້ມຕົນເອງທາງດ້ານງົບປະມານ ແລະ ສ້າງນິຕິກໍາທີ່ກ່ຽວກັບການຫັນເປັນພາລະກອນໃຫ້ສໍາເລັດ.

3. ສືບຕໍ່ປັບປຸງແບບແຜນວິທີເຮັດວຽກຂອງອົງການປະຕິບັດຄໍາຕັດສິນຂອງສານ ໃຫ້ຂຶ້ນກັບກົມກອງຂອງກະຊວງຍຸຕິທໍາ ໂດຍການເຮັດທົດລອງຢູ່ 05 ແຂວງ.

4. ປັບປຸງຂອດຂັ້ນການອະນຸຍາດການສົ່ງເສີມການລົງທຶນ ແລະ ການດໍາເນີນທຸລະກິດໃຫ້ມີຄວາມສະດວກ, ວ່ອງໄວ.

5. ສືບຕໍ່ສ້າງ ແລະ ປັບປຸງກົດໝາຍ, ນິຕິກໍາໃຕ້ກົດໝາຍ ຕາມແຜນທີ່ສະພາຮັບຮອງ.

## ໝວດທີ 3
## ການກໍານົດໜ້າວຽກຕົວຈິງ ແລະ ການແບ່ງຄວາມຮັບຜິດຊອບ ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈໍາປີ 2024 ແລະ ແຜນການແກ້ໄຂຜົນການກວດສອບ

**ມາດຕາ 10 ການກໍານົດໜ້າວຽກຕົວຈິງ ແລະ ການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ປະຈໍາປີ 2024.**

**1.** ມອບໃຫ້ຂະແໜງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:

(1) ຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ປະຈໍາປີ 2024 ໃຫ້ມີຜົນສໍາເລັດສູງ.

(2) ສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ໄດ້ຮັບການອ່າຍໜີ້ 3 ແຈບ້ວງ 8.000 ຕື້ກີບ ດຳເນີນການກວດກາ ແລະ ຫັກລົບໂຄງການທີ່ໄດ້ຮັບການຊຳລະກັບແຜນການລົງທຶນປະຈຳປີ 2024.

(3) ເອົາໃຈໃສ່ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ສະພາຮັບຮອງ, ແຕ່ຍັງຄ້າງຈັດຕັ້ງປະຕິບັດໃນປີ 2023 ໃຫ້ສຳເລັດໂດຍໄວ; ຮີບຮ້ອນກຳນົດ ແລະ ຈັດສັນງົບປະມານການລົງທຶນຂອງລັດ ປີ 2024 ໃຫ້ສອດຄ່ອງກັບກົດໝາຍ ເປັນຕົ້ນ ກົດໝາຍວ່າດ້ວຍການລົງທຶນຂອງລັດ ມາດຕາ 16, 17, 18, 19 ແລະ 38, ກົດໝາຍວ່າດ້ວຍງົບປະມານຂອງລັດ ມາດຕາ 55, 56 ແລະ ມາດຕາ 67 ແນ່ໃສ່ຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ຄວາມຍຸຕິທຳ ຂອງວຽກງານການຈັດສັນງົບປະມານການລົງທຶນຂອງລັດໃຫ້ສູງຂຶ້ນກວ່າເກົ່າ; ຮີບຮ້ອນປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ, ກຳມະທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ເພື່ອຄວາມເປັນເອກະພາບ ແລະ ຈັດສົ່ງບັນຊີໂຄງການລະອຽດໃຫ້ສະພາແຫ່ງຊາດຢັ້ງຢືນ ແລະ ຮັບຮອງໂດຍໄວ, ສຳລັບແຜນຈັດສັນງົບປະມານການລົງທຶນຂອງລັດໃຫ້ທ້ອງຖິ່ນ ໃຫ້ຮີບຮ້ອນມອບຕົວເລກເພດານໃຫ້ທ້ອງຖິ່ນ ແລະ ສະພາປະຊາຊົນຂັ້ນແຂວງ-ນະຄອນຫຼວງວຽງຈັນ ເປັນຜູ້ພິຈາລະນາຮອງຮອງຕາມກົດໝາຍ;

(4) ສືບຕໍ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເລັ່ງປັບປຸງກົນໄກການອະນຸຍາດດຳເນີນທຸລະກິດ ແລະ ການລົງທຶນໃຫ້ມີຄວາມສະດວກ ແລະ ຄ່ອງຕົວກວ່າເກົ່າ; ສືບຕໍ່ປັບປຸງກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ, ແລະ ກົດໝາຍວ່າດ້ວຍເຂດເສດຖະກິດພິເສດ ໃຫ້ສຳເລັດ ເພື່ອນຳສະເໜີສະພາແຫ່ງຊາດ ສະໄໝສາມັນເທື່ອ 7 ຂອງສະພາແຫ່ງຊາດ ຊຸດທີ IX. ນອກຈາກນັ້ນ, ກໍຊຸກຍູ້, ຕິດຕາມ ແລະ ປະເມີນ ໂຄງການລົງທຶນຂອງພາກເອກະຊົນ ທີ່ເປັນສຳປະທານ ທີ່ໄດ້ອະນຸມັດແລ້ວ;

(5) ຊຸກຍູ້, ຕິດຕາມ ແລະ ປະເມີນຈັດຕັ້ງປະຕິບັດ ວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 2021-2023 ໃຫ້ສຳເລັດ ທັງເຊື່ອມສານ ວຽກງານບູລິມະສິດ ຂອງວາລະແຫ່ງຊາດ ເຂົ້າແຜນພັດທະນາເສດຖະກິດ-ສັງຄົມ;

(6) ຕິດຕາມສະພາບເສດຖະກິດຂອງພາກພື້ນ ແລະ ໂລກຢ່າງເປັນປະຈຳ ເພື່ອໃຫ້ສາມາດກຳນົດມາດຕະການຮັບມືແຕ່ຫົວທີ ແລະ ທັນການ ພ້ອມທັງສາມາດຫັນເອົາສິ່ງທ້າທາຍໃຫ້ກາຍເປັນໂອກາດໃນການພັດທະນາປະເທດ.

(7) ສືບຕໍ່ປະສານສົມທົບກັບອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ແກ້ໄຂຜົນການກວດສອບ-ກວດກາ ທີ່ຕິດພັນກັບການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໃຫ້ໄດ້ຮັບຜົນດີ.

**2. ມອບໃຫ້ຂະແໜງການເງິນ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ເອົາໃຈໃສ່ສືບຕໍ່ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂົງເຂດການເງິນ ຢ່າງກ້ວາງຂວາງ ແລະ ຕໍ່ເນື່ອງ ເພື່ອໃຫ້ພະນັກງານລັດຖະກອນ, ປະຊາຊົນຮັບຮູ້ ແລະ ເຂົ້າໃຈ, ພ້ອມທັງຜັນຂະຫຍາຍບາງມາດຕາຂອງກົດໝາຍເປັນນິຕິກຳໃຕ້ກົດໝາຍ ໃຫ້ສຳເລັດໂດຍໄວ.

(2) ສືບຕໍ່ເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານ ຕາມຄຳສັ່ງເລກທີ 18/ນຍ ໃຫ້ແຂງແຮງກວ່າເກົ່າ.

(3) ສືບຕໍ່ປະຕິບັດນະໂຍບາຍການເງິນ ເພື່ອຊ່ວຍໜູນນະໂຍບາຍທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ຖືກແກ້ໄຂຢ່າງເປັນລະບົບ ເພື່ອຮັບມືກັບສະພາບການຜັນຜວນໃນພາກພື້ນ ແລະ ສາກົນ ໃຫ້ທັນການ.

(4) ເອົາໃຈໃສ່ເກັບລາຍຮັບຈາກຖານລາຍຮັບທີ່ມີຢູ່ໃນປັດຈຸບັນໃຫ້ຄົບຖ້ວນ ແລະ ຂະຫຍາຍຖານລາຍຮັບໃໝ່ໃຫ້ເພີ່ມຂຶ້ນ ດ້ວຍການປັບປຸງນິຕິກຳ, ອັດຕາອາກອນຕ່າງໆ ແລະ ທ່າແຮງບົ່ມຊ້ອນ, ເອົາໃຈໃສ່ຫັນເປັນທັນສະໄໝໃນການເກັບລາຍຮັບຈາກທຸກແຫຼ່ງ ເພື່ອຕ້ານການຮົ່ວໄຫຼການເກັບລາຍຮັບຢ່າງເຂັ້ມງວດ. ເອົາໃຈໃສ່ຜົນການກວດສອບ-ກວດກາ ຕາມທີ່ກຳນົດໄວ້ໃນມະຕິກອງປະຊຸມສະພາ ໂດຍຖືເອົາການກວດສອບ ແລະ ກວດກາ ເປັນມາດຕະຖານປະເມີນບຸກຄະລາກອນທີ່ສະພາແຫ່ງຊາດ ໄດ້ພິຈາລະນາຮັບຮອງ; ເອົາໃຈໃສ່ເກັບ

ລາຍຮັບຈາກຫົວໜ່ວຍທຸລະກິດຂະໜາດໃຫຍ່ທີ່ມີທ່າແຮງ ເປັນຕົ້ນ: ພະລັງງານສະອາດ, ການທ່ອງທ່ຽວສີຂຽວ, ການຄົມມະນາຄົມ (Logistic) ແລະ ອື່ນໆ.

(5) ຄົ້ນຄວ້າພັດທະນາລະບົບຄຸ້ມຄອງທັນສະໄໝ ເພື່ອແກ້ໄຂການບໍ່ລວມສູນທາງດ້ານລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງການພາກລັດ ໃຫ້ສຳເລັດໂດຍໄວ, ເຊິ່ງປະຈຸບັນຍັງກະແຈກກະຈາຍຢູ່ບັນດາຂະແໜງການ ແລະ ຫົວໜ່ວຍງົບປະມານ ເຮັດໃຫ້ລາຍຮັບບໍ່ລວມສູນ, ບາງຂະແໜງການເກັບຄ່າທຳນຽມ ແລະ ບໍລິການ ດ້ວຍຮູບແບບເງິນສົດ ໂດຍອອກໃບສັ່ງມອບ ແລະ ນຳໃຊ້ໃບເກັບເງິນຂອງຂະແໜງສ່ວຍສາອາກອນ ແລ້ວຈຶ່ງມອບເຂົ້າບັນຊີເງິນຝາກຄັງເງິນແຫ່ງຊາດ ເພື່ອເຮັດໃຫ້ການຄຸ້ມຄອງການຈັດເກັບລາຍຮັບຄ່າທຳນຽມ ແລະ ຄ່າບໍລິການໃຫ້ລວມສູນ ແລະ ສາມາດສະຫຼຸບໄດ້ຢ່າງວ່ອງໄວ.

(6) ດຳເນີນນະໂຍບາຍດ້ານການເງິນ-ງົບປະມານທີ່ມີລັກສະນະກະຕຸ້ນເສດຖະກິດ, ຫຼຸດຜ່ອນຕົ້ນທຶນການຄ້າ ແລະ ການຜະລິດທຸລະກິດ.

(7) ສືບຕໍ່ປັບປຸງລະບົບການຄຸ້ມຄອງດ່ານສາກົນ, ລະບົບແຈ້ງພາສີອາກອນ ແລະ ການເກັບລາຍຮັບທຸກຮູບແບບຢູ່ທຸກໆດ່ານ ແລະ ດັດສົມບໍລິສັດຂາອອກ-ຂາເຂົ້າ ໃຫ້ເຂົ້າສູ່ການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຢ່າງເຂັ້ມງວດ.

(8) ສືບຕໍ່ເກັບກຳ ແລະ ເກັບກູ້ລາຍຮັບຊັບສິນທີ່ຖືກຮິບຈາກຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ຈັດຕັ້ງການປະມູນຂາຍ ເພື່ອນຳເງິນເຂົ້າງົບປະມານລັດ.

(9) ສືບຕໍ່ຊຸກຍູ້, ຕິດຕາມ ແລະ ປະເມີນ 9 ແຂວງທີ່ທົດລອງມອບຫົວໜ່ວຍທຸລະກິດໃຫ້ແຂວງຄຸ້ມຄອງ ເພື່ອສ້າງຄວາມເຂັ້ມແຂງໃຫ້ທ້ອງຖິ່ນທາງດ້ານງົບປະມານຂອງລັດ ຕາມທິດ 3 ສ້າງ ໃນ 6 ເດືອນຕົ້ນປີ 2024 ເພື່ອກຳນົດຫຼັກການ, ກົນໄກໃນການຄຸ້ມຄອງໃຫ້ແທດເໝາະກັບສະພາບຈຸດພິເສດຂອງແຕ່ລະທ້ອງຖິ່ນ ໄປຄຽງຄູ່ກັບການຄົ້ນຄວ້າເພີ່ມຕື່ມບາງແຂວງທີ່ມີເງື່ອນໄຂ.

(10) ຄຸ້ມຄອງຈັດສັນແຜນລາຍຈ່າຍງົບປະມານໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ຢູ່ໃນລະດັບດຽວກັບປີທີ່ຜ່ານມາ ເພື່ອຜັນຂະຫຍາຍດຳລັດວ່າການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 205/ລບ ໃຫ້ເປັນຮູບປະທຳ ບົນພື້ນຖານຮັບປະກັນການເຄື່ອນໄຫວກົງຈັກ ພັກ-ລັດ ໃຫ້ເປັນປົກກະຕິ, ປະຕິບັດກົນໄກລາຍຈ່າຍເງິນໂຄງການລົງທຶນຂອງລັດ ໃຫ້ສາມາດກະຕຸ້ນເສດຖະກິດແຕ່ຕົ້ນປີ. ພ້ອມນັ້ນ ກໍສູ້ຊົນສ້າງຄັງສະສົມແຫ່ງລັດ ດ້ວຍຫຼາຍສະກຸນເງິນ ແລະ ເປັນວັດຖຸມີຄ່າ ໃຫ້ເພີ່ມຂຶ້ນ.

(11) ຮັບປະກັນຮັກສາສະຖຽນລະພາບໃນການບໍລິຫານໜີ້ສາທາລະນະ ດ້ວຍການປັບໂຄງສ້າງໜີ້ສິນສາທາລະນະຄືນໃໝ່ ໃຫ້ເປັນແຜນລະອຽດ ເພື່ອໃຫ້ມີລາຍຮັບຮອງຮັບໃນການຊຳລະໜີ້ສິນ; ລະດົມແຫຼ່ງທຶນດ້ວຍຫຼາຍກົນໄກ ໂດຍສຸມໃສ່ການກູ້ຢືມພາຍໃນ ແລະ ຕ່າງປະເທດ ພ້ອມທັງລະດົມແຫຼ່ງທຶນຜ່ານໂຄງການຂະໜາດໃຫຍ່ທີ່ມີເງື່ອນໄຂ ເພື່ອຮັບປະກັນໃຫ້ມີແຫຼ່ງທຶນພຽງພໍໃນການຊຳລະໜີ້ສິນ ເພື່ອບໍ່ໃຫ້ປະເທດຕົກຢູ່ໃນສະພາບທີ່ບໍ່ສາມາດຊຳລະໜີ້ສິນໄດ້.

(12) ເພີ່ມທະວີການກວດກາ, ຕ້ານ, ສະກັດກັ້ນການລັກລອບໜີພາສີ, ການຄ້າຂາຍເຖື່ອນ; ຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າທີ່ເປັນສະກຸນເງິນຕາຕ່າງປະເທດ ດ້ວຍການແຈ້ງພາສີເປັນລາຍລະອຽດ ແລະ ຊຳລະຜ່ານລະບົບທະນາຄານ ພ້ອມທັງການສ້າງກົນໄກການເຊື່ອມໂຍງຂໍ້ມູນການແຈ້ງພາສີຂາອອກກັບບັນດາປະເທດອາຊຽນ ທີ່ ສປປ ລາວ ເປັນພາຄີ ແລະ ສົມທຽບກັບລາຄາຊື້-ຂາຍຕົວຈິງ ຕາມຫຼັກການກຳນົດມູນຄ່າການແຈ້ງພາສີຂອງອົງການການຄ້າໂລກ ເພື່ອຮັບປະກັນການແຈ້ງມູນຄ່າພາສີສິນຄ້າເຄື່ອງຂອງໃຫ້ຖືກຕ້ອງ.

(13) ເອົາໃຈໃສ່ປະເມີນຄືນຖານລາຍຮັບຈາກການເຊົ່າສຳປະທານ, ການຂຸດຄົ້ນແຮ່ທາດ ແລະ ທຸລະກິດເງິນດິຈິຕອນ.

(14) ເລັ່ງທວງ ແລະ ມີມາດຕະການໃນການເກັບກູ້ຄືນໜີ້ຕ້ອງຮັບຈາກບັນດາວິສາຫະກິດລັດ-ເອກະຊົນ ແລະ ພາກສ່ວນອື່ນ ທີ່ລັດຖະບານປ່ອຍກູ້ໂດຍກົງ ແລະ ຄ້ຳປະກັນໃຫ້.

(15) ປະສານສົມທົບກັບອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ເພື່ອເກັບກູ້ໜີ້ທີ່ລັດ ກວດສອບເຫັນເພີ່ມ ຈາກຜົນການກວດສອບກວດກາບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານປີ 2021 ແລະ ປີ 2022 ເຂົ້າແຜນງົບປະມານປີ 2024.

(16) ຄົ້ນຄວ້າຈັດສັນເພີ່ມງົບປະມານ ເພື່ອແກ້ໄຂບັນຫາເງິນເດືອນຄູອາສາສະມັກ ຕາມມະຕິ 09/ນຍ, ສົມທົບທຶນກັບໂຄງການຊ່ວຍເຫຼືອ ຂອງສະຫະພາບເອີຣົບ ທີ່ຊ່ວຍການບໍລິຫານການສຶກສາ ແລະ ປັບປຸງຄຸນນະພາບການຮຽນ-ການສອນ.

(17) ສືບຕໍ່ປະສານສົມທົບກັບອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ໃນການແກ້ໄຂຜົນການກວດສອບ-ກວດກາ ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2022 ແລະ ແກ້ໄຂຜົນຂອງການກວດສອບ-ກວດກາໃນໄລຍະຜ່ານມາ ເຂົ້າໃນແຜນການປີ 2024 ຕາມເງື່ອນໄຂຕົວຈິງ.

(18) ສືບຕໍ່ຄຸ້ມຄອງລາຍຈ່າຍຕາມມາດຕະການປະຢັດ ແລະ ຕ້ານການຟູມເຟືອຍຂອງລັດຖະບານ, ຮັບປະກັນລາຍຈ່າຍບູລິມະສິດ, ການລົງທຶນຂອງລັດ.

**3. ມອບໃຫ້ຂະແໜງທະນາຄານ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ເອົາໃຈໃສ່ສືບຕໍ່ໂຄສະນາ ແລະ ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດທະນາຄານ ໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈ ຢ່າງກວ້າງຂວາງ ແລະ ຕໍ່ເນື່ອງ ໂດຍສະເພາະ ຕິດພັນກັບການແລກປ່ຽນເງິນຕາ, ການນຳໃຊ້ເງິນກີບ, ການຊຳລະຜ່ານລະບົບທະນາຄານ, ການຕິດລາຄາສິນຄ້າແລະ ອື່ນໆ, ພ້ອມທັງຜັນຂະຫຍາຍບາງມາດຕາຂອງກົດໝາຍໃຫ້ເປັນນິຕິກຳໃຕ້ກົດໝາຍໃຫ້ສຳເລັດໂດຍໄວ.

(2) ດຳເນີນນະໂຍບາຍເງິນຕາໃຫ້ຮັດກຸມກວ່າເກົ່າ ເພື່ອຄຸ້ມຄອງປະລິມານເງິນໃຫ້ຂະຫຍາຍຕົວ ເພື່ອສະໜັບສະໜູນການຂະຫຍາຍຕົວຂອງເສດຖະກິດ; ປັບປຸງການດຳເນີນນະໂຍບາຍເງິນຕາໃຫ້ມີປະສິດທິຜົນກວ່າເກົ່າ ເພື່ອໃຫ້ເຄື່ອງມືເງິນຕາ ໂດຍສະເພາະແມ່ນ ອັດຕາດອກເບ້ຍພື້ນຖານທີ່ເປັນເຄື່ອງມືທີ່ມີປະສິດທິຜົນ; ພ້ອມທັງ ປະສານສົມທົບກັບກະຊວງການເງິນ ໃນການຊຸກຍູ້ການຈຳໜ່າຍພັນທະບັດທີ່ມີຄວາມຫຼາກຫຼາຍ ເພື່ອລະດົມທຶນໃຫ້ໄດ້ເພີ່ມຂຶ້ນ; ທົບທວນຄືນນະໂຍບາຍອັດຕາດອກເບ້ຍເງິນຝາກ ສຳລັບສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ ຂອງລະບົບທະນາຄານ ເພື່ອຫຼຸດຜ່ອນແຮງກະຕຸ້ນຄວາມຕ້ອງການເງິນຕາຕ່າງປະເທດທີ່ບໍ່ຈຳເປັນ.

(3) ສືບຕໍ່ດຳເນີນນະໂຍບາຍອັດຕາແລກປ່ຽນ ພາຍໃຕ້ລະບອບອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ໃນທິດທາງທີ່ມີຄວາມຍືດຢຸ່ນຫຼາຍຂຶ້ນ; ປັບປຸງລະບົບການແລກປ່ຽນເງິນຕາຕ່າງປະເທດ ໃຫ້ມີຄວາມຄ່ອງຕົວຫຼາຍຂຶ້ນ ດ້ວຍການຊຸກຍູ້ທະນາຄານທຸລະກິດ ໃຫ້ກາຍເປັນສູນກາງການບໍລິການແລກປ່ຽນເງິນຕາໃນຫຼາກຫຼາຍຮູບແບບ; ພັດທະນາຕະຫຼາດແລກປ່ຽນ ຊື້-ຂາຍເງິນຕາຕ່າງປະເທດ ສະເພາະຜູ້ສົ່ງອອກ-ນຳເຂົ້າ ແລະ ຜູ້ລົງທຶນ ສາມາດແລກປ່ຽນຊື້-ຂາຍເງິນຕາຕ່າງປະເທດນຳກັນ ບົນພື້ນຖານໂຄງສ້າງການຊຳລະຜ່ານລະບົບທະນາຄານ; ສືບຕໍ່ດັດສົມເງິນຕາຕ່າງປະເທດ ໃຫ້ແກ່ສິນຄ້າບູລິມະສິດທີ່ເຫັນວ່າມີຄວາມຈຳເປັນໃນການພັດທະນາເສດຖະກິດ-ສັງຄົມ ແລະ ການດຳລົງຊີວິດຂອງປະຊາຊົນ.

(4) ຮີບຮ້ອນເກັບກູ້ໜີ້ສິນທີ່ລັດຖະບານ ແລະ ທະນາຄານແຫ່ງ ສປປ ລາວ ໄດ້ປ່ອຍກູ້ ແລະ ຄ້ຳປະກັນໃຫ້ວິສາຫະກິດລັດ ແລະ ເອກະຊົນໃນໄລຍະຜ່ານມາ ໃຫ້ສຳເລັດ.

(5) ສ້າງເງື່ອນໄຂໃຫ້ມີເງິນຕາຕ່າງປະເທດເຂົ້າ ສປປ ລາວ ແລະ ລະບົບທະນາຄານໃຫ້ຫຼາຍຂຶ້ນ ໂດຍສຸມໃສ່ສືບຕໍ່ຜັນຂະຫຍາຍກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ອອກເປັນນິຕິກຳລຸ່ມກົດໝາຍໂດຍສະເພາະແມ່ນ ໃຫ້ສຳເລັດຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດທີ່ຕິດພັນກັບການລົງທຶນຕ່າງປະເທດ ແລະ ຂໍ້ຕົກລົງວ່າດ້ວຍການກູ້ຢືມ ແລະ ສິນເຊື່ອການຄ້າລະຫວ່າງປະເທດ; ພັດທະນາລະບົບຂໍ້ມູນຂ່າວສານ ເພື່ອຕິດຕາມ ແລະ ຄຸ້ມຄອງກະແສເງິນຕາຕ່າງປະເທດຂອງຜູ້ສົ່ງອອກ-ນຳເຂົ້າ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ພ້ອມທັງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນການຕິດຕາມເງິນຕາຕ່າງປະເທດຈາກການສົ່ງອອກ-ນຳເຂົ້າ ໃຫ້ຜ່ານລະບົບທະນາຄານ ໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້.

(6) ສືບຕໍ່ເອົາໃຈໃສ່ໃນການຕິດຕາມ ແລະ ກວດກາ ບັນດາທະນາຄານທຸລະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຕາມຫຼັກການຄວາມສ່ຽງ ໂດຍແນໃສ່ເຮັດໃຫ້ທະນາຄານທຸລະກິດທົ່ວລະບົບມີຄວາມໝັ້ນຄົງ

ເຂັ້ມແຂງ; ຜັນຂະຫຍາຍກົດໝາຍ ວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ອອກເປັນນິຕິກຳລະອຽດ ພ້ອມທັງຄົ້ນຄວ້າສ້າງ ແລະ ປັບປຸງລະບຽບການທີ່ນຳໃຊ້ເຂົ້າໃນການຄຸ້ມຄອງທະນາຄານທຸລະກິດ; ສືບຕໍ່ຊຸກຍູ້ທະນາຄານທຸລະກິດ ພັດທະນາການບໍລິການໃຫ້ມີຄວາມທັນສະໄໝ ສາມາດເຂົ້າເຖິງໄດ້ຢ່າງສະດວກ ແລະ ທົ່ວເຖິງ ພ້ອມທັງເປັນເຈົ້າການໃນການພັດທະນາຜະລິດຕະພັນສິນເຊື່ອໃຫ້ມີຄວາມຫຼາກຫຼາຍ ແລະ ສະໜອງສິນເຊື່ອໃຫ້ສອດຄ່ອງກັບເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະໂຄງການຜະລິດເປັນສິນຄ້າ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ດ້ວຍອັດຕາອອກເບ້ຍຜ່ອນຜັນ.

(7) ເພີ່ມທະວີການໂຄສະນາໃຫ້ສັງຄົມນຳໃຊ້ ແລະ ຕິດລາຄາສິນຄ້າເປັນເງິນກີບ ໃຫ້ຫຼາຍຂຶ້ນ.

(8) ຄົ້ນຄ້ວາກົນໄກ ແລະ ວິທີການເພື່ອອຳນວຍຄວາມສະດວກດ້ານການບໍລິການໃນຂະແໜງການທະນາຄານສຳລັບນັກທ່ອງທ່ຽວລາວ ເປັນຕົ້ນ ການແລກປ່ຽນເງິນຕາ, ການຊຳລະຜ່ານລະບົບທະນາຄານ ແລະ ອື່ນໆ.

**4. ມອບໃຫ້ຂະແໜງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ເອົາໃຈໃສ່ຊຸກຍູ້ການຜະລິດກະສິກຳ ທີ່ເປັນທ່າແຮງຂອງປະເທດ ເພື່ອຫຼຸດຜ່ອນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ດ້ວຍການສະໜອງປັດໄຈການຜະລິດ ເປັນຕົ້ນ ເຕັກນິກວິຊາການ, ແນວພັນພືດ, ແນວພັນສັດ, ຝຸ່ນ ແລະ ອາຫານສັດ ທີ່ມີຄຸນນະພາບ ແລະ ຈັດສັນເຂດທີ່ດິນກະສິກຳໃຫ້ມີຄວາມຊັດເຈນ, ພ້ອມກັນນັ້ນ ໃຫ້ມີມາດຕະການປົກປ້ອງການຜະລິດພາຍໃນ ດ້ວຍການອອກນິຕິກຳທີ່ກ່ຽວຂ້ອງ ເພື່ອກຳນົດຜະລິດຕະພັນໃດທີ່ພາຍໃນສາມາດຜະລິດໄດ້, ຈຳກັດການນຳເຂົ້າ ດ້ວຍມາດຕະການພາສີອາກອນ-ບໍ່ແມ່ນພາສີອາກອນ ເພື່ອຫຼຸດຜ່ອນການໄຫຼອອກຂອງເງິນຕາຕ່າງປະເທດ. ດຳເນີນມາດຕະການທີ່ເຂັ້ມງວດຕໍ່ການລັກລອບການນຳເຂົ້າຜະລິດຕະພັນທີ່ບໍ່ຖືກກົດໝາຍຢູ່ດ່ານທ້ອງຖິ່ນ, ດ່ານປະເພນີ ແລະ ການຄ້າຊາຍແດນ ພ້ອມທັງປັບປຸງລະບົບການຄ້າພາຍໃນໃຫ້ມີຄວາມເຂັ້ມແຂງ, ຈັດຕັ້ງການຄ້າຂາຍຍົກ-ຂາຍຍ່ອຍ ລວມທັງການຄົ້ນຄວ້າກຳນົດນະໂຍບາຍປັບປຸງບໍລິສັດທີ່ເຮັດແຕ່ຂາເຂົ້າ ໂດຍໃຫ້ຫັນມາສົ່ງເສີມການລົງທຶນໃສ່ຂາອອກ ໃຫ້ມີທ່າອ່ຽງເພີ່ມຂຶ້ນ ແລະ ມີຄວາມເຂັ້ມແຂງ.

(2) ສືບຕໍ່ຊຸກຍູ້ສົ່ງເສີມການລ້ຽງສັດ ແລະ ການປະມົງ ເພື່ອແນໃສ່ການສະໜອງຊີ້ນ, ໄຂ່ ແລະ ປາ ໃຫ້ພຽງພໍໃນຂອບເຂດທົ່ວປະເທດ.

(3) ສ້າງແຜນຄຸ້ມຄອງ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດໃນຂະແໜງກະສິກຳຂັ້ນເມືອງ ແລະ ຂັ້ນບ້ານ ໂດຍໃຫ້ມີການຮັບຮອງແນວພັນ, ປັດໄຈການຜະລິດ, ຝຸ່ນ, ຢາປົວພະຍາດ, ອຸປະກອນເຄື່ອງກົນຈັກ, ເຄື່ອງມືໃນການສູບນໍ້າ ແລະ ລະບາຍນໍ້າ ໃນກໍລະນີເກີດໄພແຫ້ງແລ້ງ ແລະ ນໍ້າຖ້ວມ, ການລະບາດຂອງພະຍາດ, ແມງໄມ້ ລວມທັງແຜນການຈັດສັນພື້ນທີ່ອົບພະຍົບສັດລ້ຽງຢ່າງມີຈຸດສຸມ.

(4) ຄົ້ນຄວ້ານະໂຍບາຍສະໜັບສະໜູນ ການຜະລິດສະບຽງອາຫານໃຫ້ໝັ້ນຄົງ ແລະ ຮັບປະກັນໄດ້ດ້ານໂພຊະນາການ ໂດຍການລົງເລິກກຳນົດນະໂຍບາຍສົ່ງເສີມວຽກງານປຸງແຕ່ງ, ຂົນສົ່ງຈໍລະຈອນສິນຄ້າ ແລະ ຕະຫຼາດ; ນະໂຍບາຍດ້ານພະລັງງານ; ນະໂຍບາຍດ້ານສິນເຊື່ອ ແລະ ພາສີ-ອາກອນ, ປັດໄຈການຜະລິດ ແລະ ການສົ່ງອອກສິນຄ້າກະສິກຳ ຂອງບັນດາຫົວໜ່ວຍທຸລະກິດ ໂດຍສະເພາະບັນດາຫົວໜ່ວຍ SMEs ແລະ ຫົວໜ່ວຍເສດຖະກິດລວມໝູ່.

(5) ສ້າງແຜນການ ແລະ ມາດຕະການດຸ່ນດ່ຽງການຜະລິດ ແລະ ການບໍລິໂພກ, ມີການຈັດຕັ້ງການຜະລິດເປັນກຸ່ມສະຫະກອນ, ເປັນຟາມແບບຫົວໜ່ວຍຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ; ມີນະໂຍບາຍສົ່ງເສີມການຜະລິດ, ການປຸງແຕ່ງເພີ່ມມູນຄ່າ ແລະ ຄຸນນະພາບຂອງຜະລິດຕະພັນ, ການເຂົ້າເຖິງສິນເຊື່ອ ແລະ ຕະຫຼາດ ລວມທັງການຂົນສົ່ງຈໍລະຈອນສິນຄ້າ ພ້ອມທັງມີມາດຕະການຊ່ວຍໜູນເພື່ອຫຼຸດຜ່ອນຜົນກະທົບຈາກໄພພິບັດທຳມະຊາດ. ພ້ອມກັນນັ້ນ ກໍມີແຜນການ ແລະ ມາດຕະການຄຸ້ມຄອງພັດທະນາທີ່ດິນກະສິກຳ; ການພັດທະນາຊົນລະກະເສດ; ການຄົ້ນຄວ້າທົດລອງທາງ

ວິທະຍາສາດດ້ານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ພ້ອມທັງມີກົນໄກປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຢ່າງສະໜິດແໜ້ນ.

(6) ຊຸກຍູ້ ແລະ ສົ່ງເສີມທຸກພາກສ່ວນໃນສັງຄົມ ປະກອບສ່ວນເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍການດຶງດູດການລົງທຶນຂອງພາກເອກະຊົນ ເພື່ອສ້າງວຽກເຮັດງານທຳ ແລະ ລາຍໄດ້ໃຫ້ປະຊາຊົນກັບທີ່; ປັບປຸງການເຂົ້າເຖິງສິນເຊື່ອຂອງທະນາຄານລັດ ແລະ ທະນາຄານທຸລະກິດ ພ້ອມທັງຊຸກຍູ້ການປ່ອຍເງິນກູ້ຈາກກອງທຶນພັດທະນາຕ່າງໆພາຍໃນຊຸມຊົນ ເພື່ອສົ່ງເສີມການຜະລິດຂອງປະຊາຊົນ; ສືບຕໍ່ຈັດຕັ້ງປະຕິບັດກິດຈະກຳຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ກິດຈະກຳຂອງແຜນງານ ແລະໂຄງການຈາກທຶນຊ່ວຍເຫຼືອທາງການເພື່ອການພັດທະນາຕາມແຜນກຳນົດໄວ້. ພ້ອມທັງສືບຕໍ່ຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ນິຕິກຳໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ມີປະສິດທິຜົນ.

**5. ມອບໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ຊຸກຍູ້ສົ່ງເສີມການຜະລິດ, ການບໍລິການ, ການນຳເຂົ້າ-ສົ່ງອອກ ສິນຄ້າປະເພດຕ່າງໆໂດຍສະເພາະການທົດລອງສົ່ງອອກແຮ່ທາດ ເພື່ອຜູ້ປະກອບການມີສ່ວນຮ່ວມໃນການປັບປຸງແຜນການ, ແຜນງານໂຄງການຕົວຈິງໃຫ້ຄົບວົງຈອນ, ການອະນຸມັດໂຄງການ, ການເຂົ້າເຖິງແຫຼ່ງທຶນ ແລະ ການຕະຫຼາດ.

(2) ສູ້ຊົນຍົກລະດັບໂຮງງານໃຫ້ກ້າວສູ່ມາດຕະຖານສາກົນ; ຍົກລະດັບມາດຕະຖານ ແລະ ຄຸນນະພາບຜະລິດຕະພັນອຸດສາຫະກຳ, ຄຸນນະພາບ ແລະ ມາດຕະຖານຜະລິດຕະພັນແຫ່ງຊາດ; ໂດຍການສ້າງນະໂຍບາຍ ແລະ ກົນໄກໃນການສົ່ງເສີມການຜະລິດ, ການພັດທະນາຄຸນນະພາບ ແລະ ມາດຕະຖານເພື່ອປັບປຸງການຜະລິດໃຫ້ສາມາດຢັ້ງຢືນໄດ້ຕາມມາດຕະຖານການຜະລິດທີ່ດີ (GMP), ລະບົບວິເຄາະແລະ ຄວບຄຸມຈຸດວິກິດ (HACCP) ແລະ ການຢັ້ງຢືນອື່ນໆ.

(3) ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃນການຜະລິດສິນຄ້າ ODOP ໃຫ້ຕິດພັນກັບການຕະຫຼາດ, ການຂາຍ, ງານວາງສະແດງສິນຄ້າ ແລະ ການຊົມໃຊ້ຜະລິດຕະພັນ ເພື່ອຕອບສະໜອງຄວາມຕ້ອງການຂອງການທ່ອງທ່ຽວ ແລະ ການສົ່ງອອກໃຫ້ນັບມື້ນັບເພີ່ມຂຶ້ນ ເຊັ່ນ: ການຕໍ່າຫູກທໍໄໝ, ການຍ້ອມສີທຳມະຊາດ, ການຕີໂລຫະ (ເຄື່ອງປະດັບ), ເຄື່ອງປັ້ນດິນເຜົາ, ການແກະສະຫຼັກໄມ້, ການຈັກສານ, ການຕີເຫຼັກ, ການປຸງແຕ່ງອາຫານພື້ນເມືອງ, ເຄື່ອງປະດັບເອ້ຍ້ອງ ແລະ ຄົ້ນຄວ້າຈັດບູລິມະສິດ ເພື່ອປະດັບດາວນາມມະຍົດໃຫ້ສິນຄ້າ ODOP ແລະ ອື່ນໆ.

(4) ສົ່ງເສີມການຜະລິດສິນຄ້າພາຍໃນໃຫ້ມີຄວາມຫຼາກຫຼາຍ ເພື່ອຫຼຸດຜ່ອນການນຳເຂົ້າສິນຄ້າທີ່ບໍ່ຈຳເປັນໂດຍການສ້າງໃຫ້ໄດ້ສິນຄ້າທີ່ຜະລິດຈາກລາວ (Made in Laos) ໃຫ້ເປັນທີ່ຍອມຮັບຂອງຜູ້ຊົມໃຊ້ແລະ ສົ່ງເສີມການຜະລິດສິນຄ້າທີ່ມີທ່າແຮງຢູ່ແລ້ວ ໃຫ້ເຂົ້າເຖິງຕະຫຼາດຜູ້ບໍລິໂພກພາຍໃນ.

(5) ສືບຕໍ່ຄົ້ນຄວ້າ ແລະ ຊອກຫາການເຂົ້າເຖິງຕະຫຼາດສົ່ງອອກສິນຄ້າ (ຕະຫຼາດເກົ່າທີ່ມີຢູ່ແລ້ວ ແລະ ຊອກຫາຕະຫຼາດໃໝ່) ກັບ ສປ ຈີນ, ຫວຽດນາມ, ໄທ, ຍີ່ປຸ່ນ ແລະ ປະເທດຄູ່ຄ້າອື່ນໆ ໃນສິນຄ້າລາຍການປະເພດ ເຂົ້າ, ກາເຟ, ສາລີອາຫານສັດ, ນ້ຳຕານ, ມັນຕົ້ນ (ຕາກແຫ້ງ), ພືດຜັກ, ໝາກໄມ້, ຢາງພາລາ, ສັດລ້ຽງ (ງົວ ແລະ ຄວາຍ), ໄຟຟ້າ, ຢາສູບ ແລະ ສິນຄ້າປະເພດອື່ນໆ.

(6) ຄົ້ນຄ້ວານະໂຍບາຍສົ່ງເສີມການຄ້າພາຍໃນ ແລະ ຕ່າງປະເທດ ດ້ວຍການຊຸກຍູ້ການຜະລິດພາຍໃນ ທີ່ເປັນທ່າແຮງໄດ້ປຽບຂອງປະເທດ ເພື່ອທົດແທນການນຳເຂົ້າ ໂດຍຖືເອົາຂໍ້ມູນຈາກການຄ້າການນຳເຂົ້າເປັນຫຼັກ ເພື່ອກຳນົດປະເພດສິນຄ້າ ທີ່ມີທ່າແຮງໄດ້ປຽບສາມາດຜະລິດທົດແທນໄດ້ ແລະ ຫຼຸດຜ່ອນການໄຫຼອອກຂອງເງິນຕາຕ່າງປະເທດ ດ້ວຍການຄົ້ນຄວ້າລາຍການສິນຄ້າທີ່ນຳເຂົ້າໃນປະຈຸບັນ ປະເພດໃດທີ່ສາມາດຜະລິດທົດແທນໄດ້ໃນຈຳນວນຫຼາຍປານໃດ, ສົ່ງເສີມການສົ່ງອອກສິນຄ້າທີ່ມີຄຸນນະພາບ ແລະຄວາມຍືນຍົງ, ຄຸ້ມຄອງເງິນຕາຕ່າງປະເທດ ຈາກການສົ່ງອອກໃຫ້ຫຼາຍຂຶ້ນ ແນໃສ່ຊຸກຍູ້ສົ່ງເສີມການສົ່ງອອກທີ່ມີມູນຄ່າເພີ່ມສູງຂຶ້ນ ແລະ ມີຄວາມຍືນຍົງໃຫ້ຫຼາຍຂຶ້ນ, ພ້ອມທັງໂຄສະນາຊວນເຊື່ອການຊົມໃຊ້ຜະລິດຕະພັນພາຍໃນ ໃຫ້ຫຼາຍຂຶ້ນ.

(7) ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກ ທີ່ມີຄວາມອ່ອນໄຫວຕໍ່ການດຳລົງຊີວິດຂອງປະຊາຊົນ, ຄົ້ນຄວ້າມາດຕະການທີ່ສອດຄ່ອງຮັດກຸມໃນການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ ເພື່ອອັດຊ່ອງວ່າງການນຳເຂົ້າສິນຄ້າທີ່ບໍ່ຖືກກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

(8) ຊຸກຍູ້, ສົ່ງເສີມບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ເພື່ອສ້າງຄວາມເຂັ້ມແຂງຮອບດ້ານໃນການຜະລິດ ແລະ ການບໍລິການ.

**6. ມອບໃຫ້ຂະແໜງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ຮີບຮ້ອນປະເມີນຜົນການຈັດຕັ້ງປະຕິບັດໂຄງການຊອກຄົ້ນ, ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດພ້ອມທັງມີມາດຕະການທີ່ເຂັ້ມງວດໃນການຄຸ້ມຄອງການເກັບລາຍຮັບເຂົ້າງົບປະມານ, ການອະນຸຍາດກິດຈະການຂຸດຄົ້ນແຮ່ ໃຫ້ໄປຕາມແຜນຍຸດທະສາດ ແລະ ກົດໝາຍກຳນົດໄວ້ຢ່າງເຂັ້ມງວດ; ສົ່ງເສີມການປຸງແຕ່ງແຮ່ທາດ ເພື່ອສ້າງມູນຄ່າເພີ່ມ ແລະ ສົ່ງອອກໃຫ້ຫຼາຍຂຶ້ນ.

(2) ຊຸກຍູ້ໃຫ້ບັນດາໂຄງການໄຟຟ້າທີ່ດຳເນີນການກໍ່ສ້າງແລ້ວໃຫ້ສຳເລັດ ແລະ ສາມາດດຳເນີນການຜະລິດເຕັມກຳລັງ ເພື່ອກ້າວເຂົ້າສູ່ການສະໜອງໄຟຟ້າໃຫ້ເຕັມກຳລັງ, ພ້ອມນີ້ ກໍໃຫ້ເອົາໃຈໃສ່ຊຸກຍູ້ບັນດາໂຮງງານຜະລິດໄຟຟ້າ ສະໜອງພະລັງງານ ທີ່ ສປປ ລາວ ມີພັນທະກັບຕ່າງປະເທດໃຫ້ໄດ້ຕາມສັນຍາ.

(3) ຄົ້ນຄວ້າສ້າງນະໂຍບາຍ ແລະ ແຜນການລະອຽດ ເພື່ອຊຸກຍູ້ການສ້າງຕັ້ງໂຮງງານປຸງແຕ່ງ ຫຼື ຫຼອມແຮ່ທາດ ທີ່ເຮົາມີທ່າແຮງພາຍໃນ (ໂຮງງານປຸງແຕ່ງແຮ່ທາດຊີລິຄອນ, ແຮ່ເຫຼັກ, ອາລູມິນຽມ ແລະ ອື່ນໆ) ເພື່ອຫຼຸດຜ່ອນການສົ່ງອອກແຮ່ດິບ, ນຳໃຊ້ພະລັງງານໄຟຟ້າທີ່ເຮົາມີສ້າງມູນຄ່າເພີ່ມ ແລະ ສ້າງຖານລາຍຮັບໃຫ້ລັດຖະບານ.

(4) ເອົາໃຈໃສ່ປະຕິບັດແຜນພັດທະນາພະລັງງານ ແລະ ບໍ່ແຮ່ ໃຫ້ໄປຕາມກົດໝາຍ ແລະ ຍຸດທະສາດ, ແຜນແມ່ບົດ ແລະ ແຜນປະຈຳປີ, ປະເມີນຜົນເພື່ອຖອດຖອນບົດຮຽນຊອກໃຫ້ເຫັນດ້ານຕັ້ງໜ້າ, ກາລະໂອກາດ ພ້ອມທັງຈຳກັດສິ່ງທ້າທາຍຕ່າງໆ ເພື່ອປັບປຸງນະໂຍບາຍໃນຕໍ່ໜ້າ ໃຫ້ມີຄວາມສອດຄ່ອງ ຮັບປະກັນປະສິດທິຜົນ ແລະ ຜົນປະໂຫຍດສູງສຸດໃຫ້ແກ່ປະເທດຊາດ.

(5) ຄົ້ນຄວ້າ ແລະ ປັບປຸງນິຕິກຳ ທີ່ກ່ຽວຂ້ອງກັບຂົງເຂດພະລັງງານ ແລະ ບໍ່ແຮ່ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບຕົວຈິງໃນປະຈຸບັນ.

**7. ມອບໃຫ້ຂະແໜງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ສືບຕໍ່ຈັດຕັ້ງປະຕິບັດ ແລະ ປະເມີນຜົນແຜນແມ່ບົດແລວທາງເສດຖະກິດເໜືອ-ໃຕ້; ສືບຕໍ່ຄົ້ນຄວ້ານຳໃຊ້ທ່າແຮງທີ່ໄດ້ປຽບຂອງປະເທດ ຈາກທາງລົດໄຟລາວ-ຈີນ, ບັນດາທ່າບົກ ແລະ ເຂດເສດຖະກິດພິເສດໃຫ້ເກີດປະໂຫຍດສູງສຸດ ໂດຍການສ້າງ ແລະ ປັບປຸງກົນໄກການປະສານງານໃຫ້ເປັນລະບົບ, ມີການຄຸ້ມຄອງແບບລວມສູນ; ຫັນຮູບແບບການຂົນສົ່ງ ໂລຈິດສະຕິກ (ລວມທັງທ່າບົກ) ແບບກະແຈກກະຈາຍ ໄປສູ່ການບໍລິການແບບລວມສູນຄົບວົງຈອນ; ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຮີບຮ້ອນຄົ້ນຄວ້າສ້າງ ແລະ ປັບປຸງບັນດາກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ທີ່ຕິດພັນກັບການບໍລິການຂົນສົ່ງ ແລະ ໂລຈິດສະຕິກ ໃຫ້ມີຄວາມເຂັ້ມງວດ ແລະ ກົມກຽວກັນ; ພ້ອມກັນນັ້ນ ກໍໃຫ້ກຳນົດໂຄງສ້າງລາຄາຄ່າບໍລິການຂົນສົ່ງ ແລະ ໂລຈິດສະຕິກ ໃຫ້ແທດເໝາະກັບສະພາບຈຸດພິເສດຂອງແຕ່ລະຂົງເຂດ ແລະ ແຕ່ລະທ້ອງຖິ່ນ.

(2) ຮີບຮ້ອນສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງທ້ອງຖິ່ນທີ່ເປ່ເພ ຈາກການຂົນສົ່ງສິນຄ້າ ແລະ ແຮ່ທາດຕ່າງໆ ແລະ ຖືກຜົນກະທົບຈາກໄພພິບັດທຳມະຊາດ ທີ່ສ້າງຄວາມຫຍຸ້ງຍາກໃນການສັນຈອນຂອງປະຊາຊົນຢູ່ແຕ່ລະທ້ອງຖິ່ນ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ (ຂີ້ຝຸ່ນ, ທາງເປັນຂຸມ, ເປິະເປື້ອນ, ນ້ຳຖ້ວມຂັງ) ໃຫ້ຢູ່ໃນສະພາບດີ ແລະ ສາມາດເດີນທາງໄດ້ຢ່າງສະດວກສະບາຍ ແລະ ປອດໄພ.

(3) ສືບຕໍ່ປັບປຸງ ແລະ ພັດທະນາຕົວເມືອງໃຫ້ມີຄວາມສະອາດ ແລະ ເປັນລະບຽບຮຽບຮ້ອຍ ເພື່ອຕ້ອນຮັບການເປັນເຈົ້າພາບກອງປະຊຸມອາຊຽນ ຄັ້ງທີ 44 ແລະ ການເປີດປີທ່ອງທ່ຽວລາວ ໃນປີ 2024, ພ້ອມທັງ

ປັບປຸງການບໍລິການຂົນສົ່ງສາທາລະນະ ເພື່ອອໍານວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.

**8. ມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ສືບຕໍ່ຈັດຕັ້ງຜັນຂະຫຍາຍ 4 ວຽກງານບູລິມະສິດສໍາຄັນ ໃຫ້ແກ່ການພັດທະນາລະບົບບໍລິຫານລັດດີຈີຕອນ ດ້ວຍການຂະຫຍາຍ, ການຕິດຕັ້ງ ແລະ ນໍາໃຊ້ລະບົບທີ່ພັດທະນາແລ້ວໃຫ້ທົ່ວເຖິງທຸກອົງການຈັດຕັ້ງລັດ ແຕ່ສູນກາງລົງຮອດຂັ້ນແຂວງ ແລະ ເມືອງຈໍານວນໜຶ່ງ, ພ້ອມທັງສືບຕໍ່ພັດທະນາລະບົບ super App ແລະ Platform ໃໝ່ ອອກມານໍາໃຊ້;

(2) ສືບຕໍ່ຫັນຂະບວນການເຮັດວຽກຂອງພາກລັດໃຫ້ເປັນລະບົບດີຈີຕອນ ແລະ ທັນສະໄໝ; ປັບປຸງ ແລະ ຂະຫຍາຍລະບົບເຄືອຂ່າຍເຊື່ອມໂຍງບັນດາອົງການຈັດຕັ້ງລັດ ເຂົ້າຫາລະບົບບໍລິຫານ ແລະ ບໍລິການລັດດ້ວຍເອເລັກໂຕຣນິກ ໃຫ້ສາມາດເຊື່ອມໂຍງກັນໄດ້ຢ່າງສະດວກ, ວ່ອງໄວ ແລະ ປອດໄພ ທັງສູນກາງ ແລະ ທ້ອງຖິ່ນ; ຂະຫຍາຍການນໍາໃຊ້ລະບົບອີເມວ (e-mail) ແລະ ລະບົບກອງປະຊຸມທາງໄກ (Video Conference) ຂອງລັດຖະບານ; ປັບປຸງ ແລະ ຂະຫຍາຍການນໍາໃຊ້ລະບົບຫ້ອງການທັນສະໄໝ (e-office) ແລະ ລະບົບແຊເອກະສານ (G-share) ແນໃສ່ປັບປຸງລະບົບເອກະສານ ແລະ ການບໍລິຫານເອກະສານຂອງລັດຖະບານ; ປັບປຸງ ແລະ ຂະຫຍາຍການນໍາໃຊ້ລະບົບສື່ສານພາກລັດ (G-Chat) ແລະ ລະບົບເວບໄຊພາກລັດ (G-Web Platform) ເພື່ອສົ່ງເສີມການສື່ສານພາຍໃນພາກລັດ ແລະ ການສື່ສານກັບສັງຄົມ;

(3) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຊື່ອມຕໍ່ລະບົບ Mobile Money ກັບລະບົບ TaxRIS ຂອງກົມສ່ວຍສາອາກອນ, ກະຊວງການເງິນ ເພື່ອຊ່ວຍໃນການເກັບ VAT; ອອກນິຕິກໍາຄຸ້ມຄອງຜູ້ໃຫ້ບໍລິການຊໍາລະສະສາງການເງິນເອເລັກໂຕຣນິກເທິງໂທລະສັບມືຖື, ສ້າງມາດຕະຖານ QR Code ແລະ ເລັ່ງປັບປຸງລະບົບສູນກາງເຊື່ອມຕໍ່ Lao payment Network (LAPNET) ເພື່ອເປີດໃຫ້ລະບົບ Mobile Money ສາມາດເຊື່ອມຕໍ່ເຂົ້າໄດ້.

**9. ມອບໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ເອົາໃຈໃສ່ສ້າງ ແລະ ປັບປຸງສະຖານີຄຸນນະພາບອາກາດໃຫ້ເປັນລະບົບທັນສະໄໝ; ເພີ່ມທະວີການຄຸ້ມຄອງສິ່ງເສດເຫຼືອແບບຄົບວົງຈອນໃນການກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານບັນດາສະໜາມຂີ້ເຫຍື້ອໃຫ້ໄດ້ມາດຕະຖານ ໃນຂອບເຂດທົ່ວປະເທດ ຢ່າງໜ້ອຍ 2 ຈຸດ. ພ້ອມນັ້ນ, ສືບຕໍ່ສ້າງວິໄສທັດ, ຍຸດທະສາດ ແລະ ແຜນດໍາເນີນງານວ່າດ້ວຍການຄວບຄຸມມົນລະພິດແຫ່ງຊາດ ແລະ ສືບຕໍ່ສ້າງແຜນງານກ່ຽວກັບການປະກອບ ສ່ວນແກ້ໄຂຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ແຜນງານແຫ່ງຊາດກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ດໍາເນີນການປະເມີນ ແລະ ກໍານົດຍຸດທະສາດການປ່ອຍທາດອາຍເຮືອນແກ້ວ ແລະ ການດູດຊຶມຊັບໃຫ້ເປັນສູນ ໃນປີ 2050;

(2) ສຸມໃສ່ການປະຕິບັດວາລະແຫ່ງຊາດ ໂດຍດໍາເນີນການປັບປຸງລະບົບການຂຶ້ນທະບຽນອອກໃບຕາດິນ, ການຈົດທະບຽນທີ່ດິນ ແລະ ການຫັນຈາກລະບົບເຈ້ຍໃຫ້ເປັນລະບົບດີຈີຕອນ ເພື່ອຫຼຸດຜ່ອນຂັ້ນຕອນ, ໄລຍະເວລາ, ຫຼຸດຄ່າທໍານຽມ ແລະ ຄ່າບໍລິການ ໃຫ້ມີຄວາມໂປ່ງໃສ; ຄົ້ນຄວ້າການຫັນບາງໜ່ວຍງານບໍລິການໃຫ້ກຸ້ມຕົນເອງ ທາງດ້ານງົບປະມານ ແລະ ປະກອບສ່ວນຕໍ່ການເກັບລາຍຮັບເປັນທັນສະໄໝ.

(3) ເລັ່ງປະຕິບັດການມອບໝາຍຄວາມຮັບຜິດຊອບຂາດຕົວ ໃຫ້ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ ແລະ ນະຄອນ ໃຫ້ສາມາດຂຶ້ນທະບຽນອອກໃບຕາດິນ ແລະ ເຄື່ອນໄຫວຕາມພາລະບົດບາດຂອງວຽກງານທີ່ດິນຕາມກົດໝາຍລະບຸໄວ້ ເພື່ອເພີ່ມຄວາມຄ່ອງຕົວໃນການດໍາເນີນທຸລະກໍາດ້ານທີ່ດິນ ແລະ ສືບຕໍ່ເລັ່ງວຽກງານເຊື່ອມຈອດຖານຂໍ້ມູນທີ່ດິນກັບຂະແໜງການເງິນ ແລະ ທະນາຄານ ເພື່ອອໍານວຍຄວາມສະດວກ ແລະ ເພີ່ມປະສິດທິພາບໃນການຈັດເກັບລາຍຮັບ.

(4) ປະເມີນຄືນວິທີການສໍາຫຼວດປ່າໄມ້ແຫ່ງຊາດ (NFI) ຄັ້ງທີ III ເພື່ອກຽມຄວາມພ້ອມໃນການສໍາຫຼວດປ່າໄມ້ແຫ່ງຊາດ ຄັ້ງທີ IV ໃນປີ 2024 ເພື່ອປະເມີນການປ່ຽນແປງ ແລະ ການສະສົມທາດກາກບອນຢູ່ໃນປ່າໄມ້ ໃນຂອບເຂດທົ່ວປະເທດ.

(5) ສ້າງຕັ້ງກອງຄຸ້ມຄອງປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດ ທີ່ກວມໃນຫຼາຍແຂວງ ແລະ ເປັນມໍລະດົກພາກພື້ນ ໃຫ້ໄດ້ທັງໝົດ 6 ເຂດທີ່ຍັງເຫຼືອ ແລະ ປັບປຸງການຈັດຕັ້ງ ໃຫ້ສອດຄ່ອງຕາມພາລະບົດບາດ; ສ້າງແຜນຈັດສັນ ໂດຍການກໍານົດ ແລະ ແບ່ງເຂດຕ່າງໆໃຫ້ລະອຽດ ເປັນຕົ້ນ: ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນໍາໃຊ້ ແລະ ເຂດກັນຊົນຂອງປ່າສະຫງວນ ແລະ ອຸທິຍານແຫ່ງຊາດ ໃຫ້ສໍາເລັດ ພ້ອມທັງສົ່ງເສີມການດໍາເນີນກິດຈະການທ່ອງທ່ຽວທໍາມະຊາດແບບອະນຸລັກຢູ່ໃນເຂດດັ່ງກ່າວ.

(6) ຕິດຕາມກວດກາ ການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂອງບັນດາໂຄງການພັດທະນາຕ່າງໆ (ທັງບໍລິສັດພາຍໃນ ແລະ ຕ່າງປະເທດ) ໂດຍສະເພາະການທົດລອງຂຸດຄົ້ນແຮ່ທາດ ເພື່ອຮັບປະກັນການປ້ອງກັນຜົນກະທົບດ້ານສິ່ງແວດລ້ອມ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ.

(7) ສືບຕໍ່ຊຸກຍູ້ຕິດຕາມ ແລະ ປະເມີນການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂອງບັນດາໂຄງການພັດທະນາຕ່າງໆ ຈາກນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນສ້າງລາຍຮັບໃຫ້ມີປະສິດທິພາບ ແລະ ຍືນຍົງ.

**10. ມອບໃຫ້ຂະແໜງສຶກສາທິການ ແລະ ກິລາ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ສືບຕໍ່ປັບປຸງສະພາບແວດລ້ອມຂອງສະຖານການສຶກສາ ໂດຍການສ້າງພື້ນຖານໂຄງລ່າງການສຶກສາຢ່າງເໝາະສົມ, ສະໜອງອຸປະກອນການຮຽນ-ການສອນ, ປຶ້ມຕໍາລາຮຽນໃຫ້ທົ່ວເຖິງ; ສຸມໃສ່ແກ້ໄຂບັນຫາການປະລະການຮຽນ ໃນທຸກຊັ້ນ, ທຸກສາຍຂອງການສຶກສາ ແລະ ສົ່ງເສີມໃຫ້ນັກຮຽນຈົບມັດທະຍົມຕອນຕົ້ນ-ຕອນປາຍ ເຂົ້າຮຽນຕໍ່ສາຍອະຊີວະສຶກສາ, ພ້ອມນີ້ ດໍາເນີນການຕິດຕາມກວດກາ ເພື່ອຊອກຫາສາເຫດ ແລະ ວິທີແກ້ໄຂກ່ຽວກັບການປະລະການຮຽນ; ປັບປຸງ ແລະ ຂະຫຍາຍລະບົບການຮຽນ-ການສອນໃນຫຼາກຫຼາຍຮູບແບບ ແລະ ຄົບຖ້ວນຕາມຫຼັກວິຊາການ; ພ້ອມທັງຮັບປະກັນດ້ານຄຸນນະພາບ ແລະ ຄອບຄຸມທຸກພື້ນທີ່ໃນຂອບເຂດທົ່ວປະເທດ ໂດຍສະເພາະໃນເຂດຫ່າງໄກສອກຫຼີກ, ຮັບປະກັນໃຫ້ເດັກທຸກຄົນໃນເກນອາຍຸທີ່ຮຽນຈົບຊັ້ນປະຖົມສຶກສາ ຕາມມາດຕະຖານຂອງຫຼັກສູດ, ສ້າງໂອກາດໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ສືບຕໍ່ຮຽນໃນສາຍອາຊີວະສຶກສາຫຼາຍຂຶ້ນ ພ້ອມທັງຂະຫຍາຍໂຮງຮຽນສາມັນວິຊາຊີບໃນຊັ້ນມັດທະຍົມຕອນປາຍ; ແກ້ໄຂບັນຫາການຂາດແຄນຄູ ແລະ ຄູອາສາສະໝັກ.

(2) ຄົ້ນຄ້ວາເພີ່ມເງິນອຸດໜູນໃຫ້ນັກຮຽນ-ນັກສຶກສາທີ່ດ້ອຍໂອກາດ ໃນສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນໃນປັດຈຸບັນ ໂດຍສືບຕໍ່ພິຈາລະນາຄວາມອາດສາມາດເປັນໄປໄດ້ໃນການກໍານົດນະໂຍບາຍສ້າງເງື່ອນໄຂສົ່ງເສີມການສຶກສາໃຫ້ນັກຮຽນ-ນັກສຶກສາ ທີ່ມີຄວາມຕັ້ງໃຈໃນການຮໍ່າຮຽນ.

(3) ສົ່ງເສີມໃຫ້ນັກສຶກສາທີ່ຮຽນຈົບຊັ້ນມັດທະຍົມຕອນປາຍທີ່ມີຜົນການຮຽນດີ ໄດ້ມີໂອກາດສືບຕໍ່ຮຽນໃນສາຍສ້າງຄູ ແລະ ໃນລະດັບມະຫາວິທະຍາໄລ ໂດຍສະເພາະໃນສາຍວິທະຍາສາດ, ເຕັກໂນໂລຊີ, ວິສະວະກໍາ ແລະ ຄະນິດສາດ, ສືບຕໍ່ສະໜອງການສຶກສານອກໂຮງຮຽນ ໃຫ້ແກ່ກຸ່ມເປົ້າໝາຍຊາວໜຸ່ມ ແລະຜູ້ໃຫຍ່ທີ່ດ້ອຍໂອກາດ, ຜູ້ທີ່ຕ້ອງການຍົກລະດັບທັກສະ, ຜູ້ທີ່ປະລະ, ຕົກຫຼົ່ນຈາກສາຍສາມັນ ໂດຍຜ່ານສູນການສຶກສາຊຸມຊົນ, ສູນການສຶກສານອກໂຮງຮຽນ, ຝຶກອົບຮົມກັບທີ່, ເຄື່ອນທີ່, ຜ່ານໂທລະພາບສຶກສາ ແລະ ກິລາ ແລະ ຊ່ອງທາງອື່ນໆ ໂດຍສະເພາະແມ່ນຂະຫຍາຍໄປສູ່ເຂດຫ່າງໄກສອກຫຼີກ ແລະດ້ອຍໂອກາດ.

(4) ສືບຕໍ່ພັດທະນາກິລາ-ກາຍຍະກໍາມວນຊົນ ແລະ ກິລາໃນໂຮງຮຽນໃຫ້ກວ້າງຂວາງ, ພ້ອມທັງສ້າງເງື່ອນໄຂໃຫ້ແກ່ເດັກນ້ອຍທີ່ມີພອນສະຫວັນ ໄດ້ເຂົ້າຮຽນໃນໂຮງຮຽນພອນສະຫວັນກິລາ ແລະ ເຂົ້າ

ບັນຈຸເປັນນັກກິລາຂອງສະຫະພັນກິລາໃດໜຶ່ງ ເພື່ອໃຫ້ພວກກ່ຽວໄດ້ມີໂອກາດເຂົ້າຮ່ວມການແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນ;

(5) ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການຄົ້ນຄວ້າວິທະຍາສາດ, ພ້ອມທັງສົ່ງເສີມໃຫ້ພາກລັດ ແລະ ເອກະຊົນລົງທຶນເຂົ້າໃນການຄົ້ນຄວ້າວິທະຍາສາດ ແລະ ນໍາໃຊ້ຜົນການຄົ້ນຄວ້າດັ່ງກ່າວເຂົ້າໃນການພັດທະນານະວັດຕະກໍາ ແລະ ພັດທະນາເສດຖະກິດຂອງຊາດ.

**11.** **ມອບໃຫ້ຂະແໜງສາທາລະນະສຸກ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ສືບຕໍ່ພັດທະນາວຽກງານສາທາລະນະສຸກ ໃຫ້ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ; ຍົກລະດັບຄວາມຮູ້ ຄວາມຊໍານານງານດ້ານວິຊາສະເພາະ, ຄຸນສົມບັດ, ຈັນຍາບັນ, ຈັນຍາທໍາ ແລະ ກິລິຍາທ່າທີບໍລິການຮັບໃຊ້ ເພື່ອຮັບປະກັນການໃຫ້ບໍລິການສຸຂະພາບທີ່ມີຄຸນນະພາບ ສ້າງໄດ້ຄວາມເພິ່ງພໍໃຈໃຫ້ແກ່ປະຊາຊົນເພີ່ມຂຶ້ນ;

(2) ປັບປຸງລະບົບຕິດຕາມ ແລະ ເຝົ້າລະວັງຄວາມປອດໄພຂອງອາຫານ, ຢາ ແລະ ຜະລິດຕະພັນການແພດທີ່ຈໍາໜ່າຍ ແລະ ຈໍລະຈອນແຈກຢາຍ ກໍຄື ການນໍາເຂົ້າວັດຖຸດິບ ຫຼື ເຄມີຕ່າງໆໃນທົ່ວປະເທດ ກໍຄືຕາມຂອບເຂດຊາຍແດນ ໂດຍມີລະບົບແຈ້ງເຕືອນຮີບດ່ວນ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພ;

(3) ສືບຕໍ່ປັບປຸງລະບົບຂໍ້ມູນ-ຂ່າວສານສາທາລະນະສຸກທີ່ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ສາມາດນໍາໃຊ້ໄດ້ຢ່າງກວ້າງຂວາງ; ມີການປ້ອນຂໍ້ມູນແຕ່ຮາກຖານຂຶ້ນມາ ພ້ອມທັງນໍາໃຊ້ແຟ້ມຄອບຄົວ ໃຫ້ສາມາດຕິດຕາມ ຕີລາຄາບັນດາຕົວຊີ້ບອກ ແລະ ການນໍາໃຊ້ເຂົ້າໃນການວາງແຜນໃນແຕ່ລະຂັ້ນ ໄປຄຽງຄູ່ກັບການໂຄສະນາສຸຂະສຶກສາ ເພີ່ມຄວາມຮັບຮູ້, ເຂົ້າໃຈ ແລະ ການມີສ່ວນຮ່ວມຂອງປະຊາຊົນ ແລະ ຊຸມຊົນໃຫ້ຫຼາຍຂຶ້ນ;

(4) ຄົ້ນຄວ້າປັບປຸງກອງທຶນປະກັນສຸຂະພາບ ໃຫ້ເປັນຫົວໜ່ວຍການເງິນເອກະລາດຄືກັບກອງທຶນປະກັນສັງຄົມ ໂດຍບໍ່ຂຶ້ນກັບພາກ 63 ຂອງກະຊວງສາທາລະນະສຸກ ພ້ອມທັງເພີ່ມອັດຕາສ່ວນແບ່ງຈາກປະກັນສັງຄົມ ໃຫ້ກອງທຶນປະກັນສຸຂະພາບ ຈາກ 1,25% ຂຶ້ນເປັນ 2% ແລະ ຈັດສັນເພີ່ມງົບປະມານ ໃຫ້ກອງທຶນປະກັນສຸຂະພາບ.

(5) ສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານ ສໍາລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດ ແລະ ເດັກນ້ອຍ ແລະ ຍຸດທະສາດໂພຊະນາການ ໂດຍສຸມໃສ່ບັນດາແຂວງ, ເມືອງ ແລະ ໂຮງໝໍນ້ອຍ ທີ່ຍັງຫຍຸ້ງຍາກ ດ້ອຍການທັນວິຊາການ, ງົບປະມານ ແລະ ເງື່ອນໄຂຄວາມສະດວກດ້ານຕ່າງໆ ພ້ອມທັງລະດົມການມີສ່ວນຮ່ວມຂອງອໍານາດການປົກຄອງ ແລະ ຊຸມຊົນໃນທ້ອງຖິ່ນໃຫ້ຫຼາຍຂຶ້ນ.

**12.** **ມອບໃຫ້ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ຊຸກຍູ້ ແລະ ຄົ້ນຄວ້າສ້າງນະໂຍບາຍການດັດສົມມະຫາພາກການພັດທະນາສີມືແຮງງານ ເພື່ອຕອບສະໜອງແຮງງານທີ່ມີຄຸນນະພາບ ຕາມຄວາມຕ້ອງການຂອງຕະຫຼາດແຮງງານໃນຂະແໜງການເສດຖະກິດ.

(2) ສົ່ງເສີມການຈັດຫາວຽກເຮັດງານທໍາ ໃນຕະຫຼາດແຮງງານຕາມຂະແໜງການເສດຖະກິດ ຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ມີຄວາມສົມດູ່ ແລະ ຍືນຍົງ ເພື່ອຫຼຸດຜ່ອນການລັ່ງໄຫຼ ໄປເຮັດວຽກຢູ່ປະເທດເພື່ອນບ້ານແບບບໍ່ຖືກຕາມກົດໝາຍ.

(3) ສົມທົບອົງການສາມຝ່າຍ ຕິດຕາມ ແລະ ກວດກາແຮງງານ ໂດຍສະເພາະແຮງງານທີ່ເຮັດວຽກກະສິກໍາ, ລ້ຽງສັດ ແລະ ແຮງງານທີ່ເຮັດວຽກຢູ່ໂຄງການລົງທຶນຂອງຕ່າງປະເທດ ເພື່ອປົກປ້ອງ ແລະ ສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ພ້ອມທັງສ້າງຄວາມປອດໄພຮອບດ້ານ ໃນສະຖານທີ່ເຮັດວຽກ ຕາມກົດໝາຍ ແລະ ລະບຽບການ.

(4) ສືບຕໍ່ປະສານສົມທົບກັບພາກສ່ວນເອກະຊົນ ດຳເນີນການຂຶ້ນທະບຽນແຮງງານພາຍໃນ ແລະ ແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ໃຫ້ເປັນຮູບປະທຳຕົວຈິງ, ພ້ອມທັງເຊື່ອມຕໍ່ຂໍ້ມູນ ແລະ ສະໜອງຂໍ້ມູນ ລະຫວ່າງ ກົມສ່ວຍສາອາກອນ, ກະຊວງການເງິນ ແລະ ກົມການຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມໃຫ້ເປັນລະບົບ.

(5) ຄົ້ນຄ້ວາປັບປຸງຄ່າແຮງງານຂັ້ນຕ່ຳ ໃຫ້ຜູ້ອອກແຮງງານພາກທຸລະກິດ ໃນແຕ່ລະໄລຍະ ເພື່ອຮັບປະກັນຊີວິດການເປັນຢູ່ ແລະ ສະຫວັດດີການແຮງງານ.

(6) ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດການປະຕິວັດຊາດ ປະຊາທິປະໄຕ ຕາມກຸ່ມເປົ້າໝາຍບູລິມະສິດຕ່າງໆ ໃຫ້ໄດ້ຕາມແຜນການທີ່ວາງໄວ້ ແລະ ສູ້ຊົນແກ້ໄຂບັນຫານີ້ໃຫ້ສຳເລັດໂດຍພື້ນຖານ ໃນປີ 2025.

(7) ສຸມໃສ່ການສ້າງວິຊາຊີບ, ການພັດທະນາສີມືແຮງງານໃຫ້ມີຄຸນະພາບ ແລະ ມີວິໄນແຮງງານ; ສາມາດຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.

(8) ປັບປຸງ ແລະ ຂະຫຍາຍກົນໄກ ການຊ່ວຍເຫຼືອຜູ້ໄດ້ຮັບຜົນກະທົບຈາກໄພພິບັດຕ່າງໆ ໃຫ້ມີປະສິດຜົນ ໂດຍການຊຸກຍູ້ໃຫ້ມີການສ້າງຕັ້ງກອງທຶນໄພພິບັດ ຢູ່ຂັ້ນທ້ອງຖິ່ນ ຫຼາຍຂຶ້ນ.

(9) ເພີ່ມທະວີການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມ ແນໃສ່ຂະຫຍາຍອັດຕາການປົກຄຸມລະບົບປະກັນສັງຄົມ (ພາກລັດ, ພາກທຸລະກິດ ແລະ ຜູ້ສະໝັກໃຈ) ໃຫ້ກວ້າງຂວາງ, ຮັບປະກັນການປະຕິບັດນະໂຍບາຍສະຫວັດດີການສັງຄົມ ໃຫ້ຜູ້ທຸກຍາກດ້ອຍໂອກາດ, ຜູ້ປະສົບໄພພິບັດທາງທຳມະຊາດ, ຜູ້ປະສົບເຄາະຮ້າຍຈາກລະເບີດບໍ່ທັນແຕກຕົກຄ້າງ ແລະ ອື່ນໆ.

**13. ມອບໃຫ້ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ສຸມໃສ່ກະກຽມເປີດປີທ່ອງທ່ຽວລາວ ປີ 2024 ໃຫ້ໄປຕາມແຜນການທີ່ກຳນົດໄວ້ ເພື່ອສົ່ງເສີມນັກທ່ອງທ່ຽວສາກົນ ແລະ ພາຍໃນໃຫ້ເພີ່ມຂຶ້ນ ໂດຍການໂຄສະນາຜ່ານສື່ຕ່າງໆ; ຈັດກິດຈະກຳການ ທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ, ວັດທະນະທຳ, ບຸນປະເພນີ ແລະ ເທດສະການຕ່າງໆຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຫຼາກຫຼາຍ; ປັບປຸງສະຖານທີ່ທ່ອງທ່ຽວ, ສະຖານທີ່ພັກ ໃຫ້ມີຄວາມສະອາດ, ສະດວກ ແລະ ປອດໄພ ເພື່ອສ້າງຄວາມປະທັບໃຈໃຫ້ແກ່ນັກທ່ອງທ່ຽວ;

(2) ສ້າງແຜນຊຸກຍູ້ສົ່ງເສີມ ແລະ ຈັດຕັ້ງປະຕິບັດຮ່ວມກັບພາກທຸລະກິດ ໃນການຈັດຕັ້ງກິດຈະກຳສົ່ງເສີມການທ່ອງທ່ຽວ ທີ່ຕິດພັນກັບງານເທດສະການຂອງທ້ອງຖິ່ນ ແລະ ຜະລິດຕະພັນຫັດຖະກຳ, ການທ່ອງທ່ຽວກະສິກຳເປັນເອກະລັກສະເພາະຂອງແຕ່ລະທ້ອງຖິ່ນ; ຊຸກຍູ້ສົ່ງເສີມການເຂົ້າຮ່ວມງານວາງສະແດງສາກົນ ເພື່ອໂຄສະນາການທ່ອງທ່ຽວໃຫ້ເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍ;

(3) ເອົາໃຈໃສ່ສົ່ງເສີມການປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ ໄປຄຽງຄູ່ກັບການພັດທະນາວຽກງານສື່ມວນຊົນຕ່າງໆ ໃຫ້ມີຄວາມທັນສະໄໝ ແລະ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໃນເງື່ອນໄຂໃໝ່; ສຸມໃສ່ສຳຫຼວດ, ຂຶ້ນທະບຽນມໍລະດົກລະດັບທ້ອງຖິ່ນ ແລະ ລະດັບຊາດ; ຊຸກຍູ້ສົ່ງເສີມດ້ານວິຊາການຂອງຂະແໜງວັດທະນະທຳ, ການສ້າງບ້ານວັດທະນະທຳ ແລະ ຄອບຄົວວັດທະນະທຳ ໃຫ້ມີຄຸນນະພາບເທື່ອລະກ້າວ.

**14. ມອບໃຫ້ຂະແໜງການຕ່າງປະເທດ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ຍົກສູງການຮ່ວມມືຮອບດ້ານກັບປະເທດເພື່ອນມິດຍຸດທະສາດ, ຄູ່ຮ່ວມພັດທະນາ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ບົນພື້ນຖານການຮ່ວມມືຕາມທິດຕ່າງຝ່າຍຕ່າງມີຜົນປະໂຫຍດ ຄຽງຄູ່ກັບການຕິດຕາມ ແລະ ເຝົ້າລະວັງ ສະພາບການຜັນແປຂອງພາກພື້ນ ແລະ ສາກົນ ເພື່ອໃຫ້ສາມາດຕີລາຄາ ແລະ ເປັນພື້ນຖານໃນການວາງນະໂຍບາຍການຕ່າງປະເທດໃຫ້ສອດຄ່ອງ, ກົມກຽວໃນແຕ່ລະໄລຍະ ພ້ອມທັງຄົ້ນຄວ້າສ້າງລະບຽບການ, ມາດຕະການ ແລະ ນະໂຍບາຍຕ່າງໆ ເພື່ອຊຸກຍູ້ສົ່ງເສີມການຄ້າ ແລະ ການສົ່ງອອກໃຫ້ໂລ່ງລ່ຽນ ພ້ອມທັງຜັນຂະຫຍາຍ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ພັນທະບັນດາສັນຍາທີ່ ສປປ ລາວ

ໄດ້ລົງນາມໃນຂອບສັນຍາສອງຝ່າຍລະຫວ່າງ ໃຫ້ເຂົ້າສູ່ລວງເລິກ ແລະ ປະກົດຜົນເປັນຈິງຕາມລະດັບຄາດໝາຍທີ່ວາງໄວ້ ແລະ ສືບຕໍ່ເຂົ້າຮ່ວມກອງປະຊຸມຕ່າງໆໃນແຕ່ລະໄລຍະ.

(2) ກະຊວງເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ ກອງປະຊຸມໃຫຍ່ໄອປາ ຄັ້ງທີ 45 ໃນປີ 2024 ໂດຍຖືເອົາໂອກາດດັ່ງກ່າວໂຄສະນາດຶງດູດການລົງທຶນ, ສົ່ງເສີມການຜະລິດສິນຄ້າ ແລະ ການບໍລິການ.

(3) ຈັດຕັ້ງປະຕິບັດຂໍ້ຕົກລົງ, ສັນຍາ, ສົນທິສັນຍາ ທີ່ ສປປ ລາວ ໄດ້ລົງນາມ ແລະ ເປັນພາຄີໃຫ້ເປັນຮູບປະທຳ.

(4) ຈັດຕັ້ງປະຕິບັດໂຄງການຂະໜາດໃຫຍ່ ແລະ ບັນດາໂຄງການຍຸດທະສາດຮ່ວມມືກັບຕ່າງປະເທດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

(5) ເປັນເຈົ້າການໃນການຕິດຕາມການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງຂອງ ສປປ ລາວ; ພ້ອມທັງປະສານສົມທົບກັບຄະນະກອງເລຂາ ແລະ ຂະແໜງການທີ່ກ່ຽວຂ້ອງໃນການກະກຽມບົດລາຍງານແຫ່ງຊາດແບບສະໝັກໃຈ ສະບັບທີ 3 ຂອງ ສປປ ລາວ ເພື່ອລາຍງານຕໍ່ກອງປະຊຸມສະມັດຊາໃຫຍ່ຂອງສະປະຊາຊາດ ທີ່ນິວຢອກ, ສະຫະລັດອາເມລິກາ ໃນປີ 2024.

**15. ມອບໃຫ້ຂະແໜງຍຸຕິທຳ, ອົງການໄອຍະການປະຊາຊົນສູງສຸດ ແລະ ຂະແໜງສານປະຊາຊົນສູງສຸດ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ເອົາໃຈໃສ່ຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ດ້ວຍກົດໝາຍ ຕາມທິດ 3 ສ້າງ, ຄົ້ນຄ້ວາ ແລະ ປະຕິບັດຫຼັກການລວມສູນ ແລະ ການແບ່ງຂັ້ນຄຸ້ມຄອງໃຫ້ຈະແຈ້ງສອດຄ່ອງກັບກົດໝາຍ.

(2) ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງໃນຂົງເຂດຍຸຕິທຳ, ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂົງເຂດຕ່າງໆ ໃຫ້ເປັນລະບົບຄົບຊຸດ ເພື່ອຮັບປະກັນການຄຸ້ມຄອງບໍລິຫານລັດດ້ວຍກົດໝາຍໃຫ້ມີຜົນສັກສິດ ແນໃສ່ຮັບປະກັນການແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນທຸກຂົງເຂດຂອງສັງຄົມໃຫ້ໄປຕາມກົດໝາຍ, ຕາມຫຼັກການເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ ໂດຍສະເພາະປະຕິບັດມາດຕະການຕໍ່ຫົວໜ່ວຍງົບປະມານທີ່ລະເມີດວິໄນແຜນການ-ການເງິນ, ເພີ່ມທະວີການໂຄສະນາ ແລະ ເຜີຍແຜ່ກົດໝາຍ ຜ່ານຫຼາຍຊ່ອງທາງ ເພື່ອໃຫ້ສັງຄົມມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງກວ່າເກົ່າ.

(3) ສືບຕໍ່ປັບປຸງການຈັດຕັ້ງອົງການປະຕິບັດຄຳຕັດສິນຂອງສານຢູ່ແຕ່ລະຂັ້ນ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ); ເພີ່ມທະວີການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະບັນດາອົງການປົກປ້ອງກົດໝາຍແຕ່ລະຂັ້ນ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນທີ່ກົດໝາຍກຳນົດ ແລະ ເອົາໃຈໃສ່ກວດກາຄືນ ຄຳຕັດສິນຂອງສານທີ່ປະຕິບັດບໍ່ໄດ້ ຫຼື ປະຕິບັດຍາກ;

(4) ເອົາໃຈໃສ່ຄົ້ນຄ້ວາ ແລະ ແກ້ໄຂຄຳຮ້ອງ, ຄຳສະເໜີຂອງປະຊາຊົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ວ່ອງໄວ ແລະ ສອດຄ່ອງຕາມກົດໝາຍ; ອົງການໄອຍະການປະຊາຊົນແຕ່ລະຂັ້ນ ຕ້ອງເພີ່ມທະວີການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໂດຍສະເພາະການດຳເນີນຄະດີຢູ່ສານ, ການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ບົນພື້ນຖານຄຳຮ້ອງ ແລະ ການກວດກາການນຳໃຊ້ວິທີການສືບສວນ-ສອບສວນ ແລະ ການນຳໃຊ້ບັນດາມາດຕະການສະກັດກັ້ນຂອງອົງການສືບສວນ-ສອບສວນ ຢ່າງເຂັ້ມງວດ;

(5) ສ້າງ ແລະ ບຳລຸງຖັນແຖວພະນັກງານບຸກຄະລາກອນກົດໝາຍໃຫ້ກາຍເປັນຜູ້ຊຳນານງານ ແລະ ຊ່ຽວຊານດ້ານທິດສະດີ ແລະ ວິຊາການ.

**16. ມອບໃຫ້ຂະແໜງພາຍໃນ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ສືບຕໍ່ຊຸກຍູ້ ແລະ ຕິດຕາມການປັບປຸງກົງຈັກການຈັດຕັ້ງພາລະບົດບາດຂັ້ນກົມ ແລະ ທຽບເທົ່າຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນໃຫ້ສຳເລັດ ບົນພື້ນຖານ

ກົງຈັກການຈັດຕັ້ງໃຫ້ມີຄວາມກະທັດຮັດ, ມີພາລະບົດບາດໜ້າທີ່ຈະແຈ້ງ ແລະ ບໍ່ກ້າວກ່າຍຊໍ້າຊ້ອນວຽກງານເຊິ່ງກັນ ແລະ ກັນ.

(2) ປະສານສົມທົບກັບບັນດາກະຊວງ-ອົງການ ເພື່ອສຶກສາຄວາມເປັນໄປໄດ້ ແລະ ມີເງື່ອນໄຂຄົບຖ້ວນຂອງບັນດາການຈັດຕັ້ງຂັ້ນຕ່າງໆ ໃນການຫັນເປັນຫົວໜ່ວຍວິຊາການທີ່ກຸ້ມຕົນເອງທາງດ້ານງົບປະມານ ເພື່ອສະເໜີຄະນະຮັບຜິດຊອບ ພິຈາລະນາ ແລະ ສະເໜີລັດຖະບານ ຮັບຮອງ.

(3) ປັບປຸງລະບົບ ແລະ ກົນໄກການສະໜອງການບໍລິການຂອງລັດ ໃຫ້ສະດວກ, ວ່ອງໄວ ແລະ ມີຄວາມໂປ່ງໃສຂຶ້ນກວ່າເກົ່າ;

(4) ປັບປຸງການແບ່ງຂັ້ນຄຸ້ມຄອງ ແລະ ກົນໄກການປະສານງານ ລະຫວ່າງ ຂະແໜງການດ້ວຍກັນ, ສູນກາງກັບທ້ອງຖິ່ນ ໃນການບໍລິຫານລັດດ້ວຍກົດໝາຍ; ມອບຄວາມຮັບຜິດຊອບໃຫ້ຂັ້ນທ້ອງຖິ່ນຫຼາຍຂຶ້ນ ແລະ ຫຼີກລ່ຽງຊ່ອງຫວ່າງ ແລະ ການຊໍ້າຊ້ອນ ໃນຂະບວນການຈັດຕັ້ງປະຕິບັດ.ຜັນຂະຫຍາຍວຽກງານ 3 ສ້າງ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດເຂົ້າສູ່ລວງເລິກ, ເຂັ້ມແຂງ ແລະ ເປັນຮູບປະທຳຫຼາຍຂຶ້ນ.

**17. ມອບໃຫ້ກະຊວງປ້ອງກັນຊາດ ແລະ ກະຊວງປ້ອງກັນຄວາມສະຫງົບ ຈັດຕັ້ງປະຕິບັດວຽກງານຈຸດສຸມດັ່ງນີ້:**

(1) ສືບຕໍ່ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ.

(2) ສືບຕໍ່ສົມທົບກັບທຸກພາກສ່ວນ ປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຮອດທ້າຍປີ 2025 ໃຫ້ແຂງແຮງກວ່າເກົ່າ; ປະຕິບັດແນວທາງການຕ່າງປະເທດຂອງພັກໃຫ້ຖືກຕ້ອງ ເພື່ອຮັບປະກັນໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບ, ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

(3) ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນທຸກຂົງເຂດຂອງສັງຄົມໃຫ້ໄປຕາມກົດໝາຍ ຕາມຫຼັກການເດັດຂາດ, ໂປ່ງໃສ ແລະ ມີອາຊີບ.

**18. ມອບໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ, ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:**

(1) ເອົາໃຈໃສ່ສ້າງ ແລະ ພັດທະນາໄວໜຸ່ມ, ແມ່ຍິງ ແລະ ຍົກສູງບົດບາດຍິງ-ຊາຍ ໃຫ້ເຂັ້ມແຂງ ເພື່ອເປັນພື້ນຖານໃຫ້ແກ່ການພັດທະນາໃນຍຸກໃໝ່ ຄຽງຄູ່ກັບການເຂັ້ມງວດໃນການຄຸ້ມຄອງ ແລະ ບໍລິຫານລັດດ້ວຍກົດໝາຍ ພ້ອມທັງສືບຕໍ່ຈັດຕັ້ງປະຕິບັດວຽກງານຂົງເຂດອື່ນໆ ຢ່າງເປັນເຈົ້າການ ແລະ ມີຄຸນນະພາບສູງຂຶ້ນ.

(2) ຊຸກຍູ້ ແລະ ສົ່ງເສີມການຜະລິດສິນຄ້າ ຕາມທ່າແຮງແຕ່ລະທ້ອງຖິ່ນ ຕິດພັນກັບຂະບວນການຮັກຊາດ ແລະ ພັດທະນາ ຢ່າງກວ້າງຂວາງ ແລະ ເປັນຮູບປະທຳຫຼາຍຂຶ້ນ.

(3) ຊຸກຍູ້ປຸກລະດົມສ້າງສະຕິໃຫ້ທຸກພາກສ່ວນທົ່ວສັງຄົມ ປະຕິບັດນະໂຍບາຍປະຢັດ, ພັດທະນາຕົນເອງໃຫ້ເຂັ້ມແຂງ.

**19. ແບ່ງຄວາມຮັບຜິດຊອບໃນການແກ້ໄຂຜົນການກວດສອບ.**

(1) ມອບໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຊີ້ນຳ-ນຳພາ ການແກ້ໄຂຜົນການກວດສອບ ໃຫ້ເປັນຮູບປະທຳຂຶ້ນກວ່າເກົ່າ ແລະ ຖືເອົາການແກ້ໄຂຜົນການກວດສອບ ເປັນມາດຕະຖານໃນການປະເມີນ ບຸກຄະລາກອນ ທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

(2) ມອບໃຫ້ ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເກັບກູ້ລາຍຮັບທີ່ກວດເຫັນເພີ່ມ ເຂົ້າງົບປະມານ ປີ 2024; ປະສານສົມທົບກັບອົງການກວດສອບແຫ່ງລັດ ວິເຄາະ-ວິໄຈ, ໄຈ້ແຍກ ລາຍຮັບ-ລາຍຈ່າຍ, ໜີ້ຕ້ອງຮັບ, ຈ່າຍລ່ວງໜ້າຄັງເງິນແຫ່ງຊາດ ທີ່ສະສົມໃນໄລຍະຜ່ານມາໃຫ້ລະອຽດ ອັນໃດຍັງສາມາດເກັບກູ້ຄືນໄດ້ ແລະ ອັນໃດບໍ່ສາມາດເກັບກູ້ຄືນໄດ້ ຫຼື ບໍ່ມີຕົວຕົນແລ້ວ ໃຫ້ລາຍງານລັດຖະບານຄົ້ນຄວ້າ ເພື່ອສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

(3) ມອບໃຫ້ ກະຊວງການເງິນ ຄົ້ນຄວ້າກຳນົດ ການແກ້ໄຂຜົນການກວດສອບ ເປັນແຫຼ່ງລາຍຮັບໜຶ່ງ ເຂົ້າໃນສາລະບານ ງົບປະມານແຫ່ງລັດ;
(4) ມອບໃຫ້ ກະຊວງການເງິນ ຄົ້ນຄວ້າງົບປະມານໃຫ້ອົງການກວດສອບແຫ່ງລັດ ຈຳນວນ 14 ຕື້ກີບ (ຕື່ມເຂົ້າໃສ່ໃນງົບປະມານປົກກະຕິ ປີ 2024 ຈຳນວນ 42,19 ຕື້ກີບ, ລວມເປັນ 56,19 ຕື້ກີບ) ເພື່ອນຳໃຊ້ເຂົ້າໃນວຽກງານທີ່ຈຳເປັນ; ພ້ອມທັງ ສະໜອງເຄື່ອງມື ແລະ ອຸປະກອນ ເພື່ອຍົກສູງຄຸນນະພາບ, ເຕັກນິກ ແລະ ມາດຕະຖານຕ່າງໆ, ການຕິດຕາມຊຸກຍູ້, ກວດຄືນຜົນການແກ້ໄຂການກວດສອບ ແລະ ການເຄື່ອນໄຫວກວດສອບ ໃຫ້ມີປະສິດທິພາບ, ປະສິດທິຜົນ;
(5) ຄົ້ນຄວ້າເພີ່ມງົບປະມານໃຫ້ອົງການກວດກາແຫ່ງລັດ ຈຳນວນ 13 ຕື້ກີບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານກວດກາ;
(6) ມອບໃຫ້ ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ເພີ່ມຄວາມຮັບຜິດຊອບ ໃນການຮ່ວມມື, ປະສານສົມທົບ, ອຳນວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນ ແລະ ເຂົ້າຮ່ວມວຽກງານກວດສອບແຫ່ງລັດ ແລະ ຕັ້ງໜ້າແກ້ໄຂຜົນການກວດສອບຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ລັດໄດ້ວາງອອກໃຫ້ເຂັ້ມງວດ.

## ໝວດທີ 4
## ການຈັດຕັ້ງປະຕິບັດ

### ມາດຕາ 11 ກົນໄກ ແລະ ມາດຕະການຈັດຕັ້ງປະຕິບັດ

1. ມອບໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຊຸກຍູ້ການຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍ ແລະ ວຽກງານບູລິມະສິດ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ທ້າຍສະໄໝ ຮອດປີ 2025, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປີ 2024 ພ້ອມທັງສືບຕໍ່ປັບປຸງກົນໄກປະສານງານ ລະຫວ່າງກະຊວງກັບອົງການຂັ້ນສູນກາງ ແລະ ລະຫວ່າງກະຊວງ-ອົງການຂັ້ນສູນກາງ ກັບອົງການປົກຄອງທ້ອງຖິ່ນ ໃຫ້ມີຄວາມກົມກຽວເປັນເອກະພາບ ເພື່ອເຮັດໃຫ້ການປະຕິບັດທິດທາງ ແລະ ມາດຕະການຕ່າງໆທີ່ວາງອອກມີຄວາມສັກສິດ;
2. ຄະນະພັກ, ຄະນະນຳຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ແຂວງຕ່າງໆ ເປັນເຈົ້າການສືບຕໍ່ຈັດຕັ້ງເຜີຍແຜ່ ແລະ ເຊື່ອມຊຶມບັນດາວຽກງານບູລິມະສິດ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ທ້າຍສະໄໝ ຮອດປີ 2025, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປີ 2024 ໃຫ້ເປັນວຽກລະອຽດຂອງຂະແໜງການ ແລະ ທ້ອງຖິ່ນ, ພ້ອມນີ້ ກໍໃຫ້ເຊື່ອມສານວຽກງານບູລິມະສິດ ຂອງ 2 ວາລະແຫ່ງຊາດ ເຂົ້າແຜນພັດທະນາເສດຖະກິດ-ສັງຄົມຂອງຕົນ;
3. ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບ ກະຊວງການເງິນ ຈັດຕັ້ງເຜີຍແຜ່ດຳລັດສະບັບນີ້ ເພື່ອສ້າງຄວາມເຂົ້າໃຈທີ່ເປັນເອກະພາບ ພ້ອມທັງແນະນຳ ກ່ຽວກັບວິທີການ ແລະ ຂັ້ນຕອນການຈັດຕັ້ງປະຕິບັດໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນການລົງທຶນຂອງລັດ ແລະ ແຜນງົບປະມານ ແຫ່ງລັດ ປະຈຳປີ 2024 ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ທັງມີປະສິດທິຜົນສູງ;
4. ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ອອກບົດແນະນຳຜັນຂະຫຍາຍດຳລັດສະບັບນີ້ ໂດຍສະເພາະ ແມ່ນການແນະນຳການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນການລົງທຶນຂອງລັດ ປະຈຳປີ 2024 ເພື່ອເປັນບ່ອນອີງໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ນຳໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍເປັນອັນລະອຽດ;
5. ມອບໃຫ້ກະຊວງການເງິນ ອອກເປັນບົດແນະນຳຜັນຂະຫຍາຍດຳລັດສະບັບນີ້ ໂດຍສະເພາະ ແມ່ນການແນະນຳການຈັດຕັ້ງປະຕິບັດແຜນງົບປະມານ ແຫ່ງລັດ ປະຈຳປີ 2024 ເພື່ອເປັນບ່ອນອີງໃຫ້ບັນດາກະຊວງ, ອົງການ

ລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ນໍາໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍເປັນອັນລະອຽດ;

6. ມອບໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ທ້າຍສະໄໝ ຮອດປີ 2025, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈໍາປີ 2024 ແລະ ດໍາລັດ ສະບັບນີ້ ໃຫ້ເປັນແຜນພັດທະນາ ແລະ ບົດແນະນໍາການຈັດຕັ້ງປະຕິບັດຂອງຕົນ ໃຫ້ຄົບຖ້ວນ, ຊັດເຈນ ແລະ ສາມາດຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ;

**ມາດຕາ 12 ການຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ ແລະ ສະຫຼຸບລາຍງານ.**

1. ມອບໃຫ້ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຊ່ວຍລັດຖະບານຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈໍາປີ 2024 ໃຫ້ບັນລຸຄາດໝາຍ ແລະ ໄປຕາມທິດທີ່ວາງໄວ້;

2. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຕິດຕາມ, ກວດກາ, ຊຸກຍູ້ ແລະ ສະຫຼຸບລາຍງານຄວາມຄືບໜ້າ ແລະ ຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນການລົງທຶນຂອງລັດ ແລະ ແຜນງົບປະມານຂອງຕົນ ໃຫ້ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ຢ່າງເປັນທາງການ ດັ່ງນີ້: ງວດທີ 1 ພາຍໃນວັນທີ 15 ເມສາ, ງວດທີ 2 ພາຍໃນວັນທີ 15 ກໍລະກົດ, ງວດທີ 3 ພາຍໃນວັນທີ 15 ຕຸລາ 2024, ສະຫຼຸບໝົດປີ 2024 ພາຍໃນວັນທີ 15 ມັງກອນ 2025 ແລະ ສະຫຼຸບຂາດຕົວປີ 2024 ພາຍໃນວັນທີ 15 ເມສາ 2025.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 13 ການຮັບຮູ້ ແລະ ປະຕິບັດ**

ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ປະທານ ຫຼື ເລຂາຄະນະບໍລິຫານງານອົງການຈັດຕັ້ງມະຫາຊົນ ແລະ ແນວລາວສ້າງຊາດ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ມີປະສິດທິຜົນສູງ.

**ມາດຕາ 14 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ສິ້ນສຸດລົງໃນວັນທີ 31 ທັນວາ 2024.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**

## ຕາຕະລາງກຳນົດບັນດາໜ້າວຽກ ແລະ ແບ່ງຄວາມຮັບຜິດຊອບ

## ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ທ້າຍສະໄໝ ຮອດປີ 2025, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາປະຈຳປີ 2024 ແລະ ແຜນການແກ້ໄຂຜົນການກວດສອບ

(ເອກະສານຊ້ອນທ້າຍ ດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 381/ນຍ, ລົງວັນທີ 21 ທັນວາ 2023)

| ລ/ດ | ເນື້ອໃນ | ພາກສ່ວນ ຮັບຜິດຊອບຫຼັກ | ພາກສ່ວນປະຕິບັດຮ່ວມ | ກຳນົດເວລາ ປະຕິບັດສຳເລັດ |
|---|---|---|---|---|
| 1) | ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ | | | |
| 1 | ສືບຕໍ່ຊຸກຍູ້ການຜະລິດ-ການບໍລິການ ຕາມທ່າແຮງບົ່ມຊ້ອນຂອງແຕ່ລະບໍລິເວນ ແລະ ທ້ອງຖິ່ນ ໂດຍເລັ່ງໃສ່ການຜະລິດກະສິກຳເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ການສົ່ງເສີມອຸດສາຫະກຳປຸງແຕ່ງ ຕາມ 8 ອຸດສາຫະກຳເປົ້າໝາຍ, ສົ່ງເສີມໂຄງການໄຟຟ້າພະລັງງານນ້ຳ, ພະລັງງານລົມ ແລະ ພະລັງງານສະອາດອື່ນໆ ແລະ ໂຄງການຂະໜາດໃຫຍ່ຈຳນວນໜຶ່ງທີ່ສາມາດຂັບເຄື່ອນເສດຖະກິດ ແລະ ເງິນຕາເຂົ້າມາປະເທດ ເປັນຕົ້ນ ທາງດ່ວນ, ທ່າບົກ, ເຂດເສດຖະກິດພິເສດ; | ກະຊວງກະສິກຳ ແລະ ປ່າໄມ້ | - ບັນດາກະຊວງ, ອົງການ<br>- ແຂວງ, ນວ | |
| 2 | ປັບປຸງລະບົບຂົນສົ່ງ ໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານກວ່າເກົ່າ ເພື່ອເອື້ອອຳນວຍໃຫ້ແກ່ການຄ້າ ແລະ ການລົງທຶນ; | ກະຊວງ ໂຍທາທິການ ແລະ ຂົນສົ່ງ | | |
| 3 | ເພີ່ມທະວີໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວຜ່ານສື່ຕ່າງໆ ເພື່ອດຶງດູດນັກທ່ອງທ່ຽວຕ່າງປະເທດ, ຈັດກິດຈະກຳການທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍ ແລະ ຊຸກຍູ້ພາກເອກະຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາວຽກງານນີ້ໃຫ້ຫຼາຍຂຶ້ນ; | ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| | | ທ່ຽວ | | |
| 4 | ເລັ່ງໃສ່ແກ້ໄຂບັນຫາດ້ານເສດຖະກິດມະຫາພາກ ໂດຍສະເພາະ ອັດຕາເງິນເຟີ້, ອັດຕາແລກປ່ຽນ ດ້ວຍມາດຕະການຕ່າງໆທີ່ໄດ້ກຳນົດອອກໃນແຕ່ລະໄລຍະ, ລວມທັງການຜັນຂະຫຍາຍກົດໝາຍອອກເປັນລະບຽບການໃຫ້ລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ເຂັ້ມງວດ; | ທະນາຄານແຫ່ງ ສປປ ລາວ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ສືບຕໍ່ຂະຫຍາຍຖານລາຍຮັບໃຫ້ເພີ່ມຂຶ້ນ ດ້ວຍການຂະຫຍາຍຖານລາຍຮັບໃໝ່ທີ່ຫຼາກຫຼາຍ ແລະ ມີຄວາມໝັ້ນຄົງ, ທັງຂະຫຍາຍການຫັນເປັນທັນສະໄໝໃຫ້ເພີ່ມຂຶ້ນ; | ກະຊວງການເງິນ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 6 | ສືບຕໍ່ແກ້ໄຂໜີ້ສິນສາທາລະນະໃຫ້ຫຼຸດລົງຕາມແຜນຍຸດທະສາດທີ່ໄດ້ຮັບຮອງ, ສືບຕໍ່ປັບປຸງລັດວິສາ ຫະກິດ ໃຫ້ສຳເລັດໂດຍໄວ ໂດຍສະເພາະ ວິສາຫະກິດທີ່ເປັນຍຸດທະສາດ; | ກະຊວງການເງິນ | - ແຂວງ, ນວ | |
| 7 | ສືບຕໍ່ພັດທະນາພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະ ໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງຫຼາຍຂຶ້ນ. | ກະຊວງ ອຸດສາຫະກຳ ແລະ ການຄ້າ | - ກະຊວງ, ອົງການ<br>- ແຂວງ, ນວ | |
| **2.** | **ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍການພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ** | | | |
| 1 | ສືບຕໍ່ພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສົມທຳປະຕິວັດ, ເອົາໃຈໃສ່ປັບປຸງການຮຽນ-ການສອນ, ທັກສະການອ່ານ, ການຂຽນພາສາລາວ ແລະ ທັກສະການຄິດໄລ່ເລກພື້ນຖານ; ຂະຫຍາຍການສຶກສາຊັ້ນມັດທະຍົມຕອນຕົ້ນ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ ແລະ ສົ່ງເສີມການຄົ້ນຄວ້າວິທະຍາສາດ; | ກະຊວງສຶກສາທິການ ແລະ ກິລາ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 2 | ສຸມໃສ່ປັບປຸງວຽກງານສາທາລະນະສຸກ ໃຫ້ມີຄຸນນະພາບ ໂດຍການຫັນໄປສູ່ກຸ້ມຕົນເອງດ້ານການເງິນ, ເປັນຊ່ຽວຊານສະເພາະດ້ານໃນການປິ່ນປົວພະຍາດ, ປັບປຸງການບໍລິການປິ່ນປົວໃຫ້ກັບ | ກະຊວງ ສາທາລະນະສຸກ | - ກະຊວງ, ອົງການ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| | ຄົນເຈັບ ຕາມມາດຖານ 5 ດີ 1 ພໍໃຈ; ສືບຕໍ່ປັບປຸງ ແລະ ກໍ່ສ້າງໂຮງໝໍຂັ້ນຕ່າງໆໃຫ້ຮັບປະກັນທາງດ້ານມາດຖານຄຸນນະພາບ; | | | |
| 3 | ສືບຕໍ່ຝຶກ ແລະ ພັດທະນາສີມືແຮງງານໃນສາຂາວິຊາຊີບຕ່າງໆ ທີ່ມີຄວາມຕ້ອງການຂອງຕະຫຼາດ, ທັງສາມາດສະໜອງແຮງງານເພື່ອໄປເຮັດວຽກຢູ່ພາຍໃນ ແລະ ຕ່າງປະເທດ ແລະ ສາມາດປະກອບອາຊີບອິດສະຫຼະ, ພ້ອມທັງປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ຕາມກົນໄກການຮ່ວມອົງການສາມຝ່າຍ. | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການ<br>- ແຂວງ, ນວ | |
| **3.** | **ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍຊີວິດການເປັນຢູ່ຂອງປະຊາຊົນທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ** | | | |
| 1 | ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢ່າງຕັ້ງໜ້າ ດ້ວຍການສະໜອງພື້ນຖານໂຄງລ່າງທີ່ຈຳເປັນໃນເຂດຈຸດສຸມຂອງລັດຖະບານ, ຂອງທ້ອງຖິ່ນ ແລະ ເອົາໃຈໃສ່ວຽກງານຈັດສັນພູມລຳເນົາ ແລະ ອາຊີບຄົງທີ່; ສົ່ງເສີມພາກສ່ວນເສດຖະກິດຕ່າງໆ ປະກອບສ່ວນໃນການພັດທະນາຊົນນະບົດ ຕິດພັນກັບການສ້າງວຽກເຮັດງານທຳ ແລະ ລາຍໄດ້ໃຫ້ກັບປະຊາຊົນ ທີ່ໝັ້ນຄົງ; | ກະຊວງກະສິກຳ ແລະ ປ່າໄມ້ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 2 | ພັດທະນາລະບົບປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ ດ້ວຍການປັບປຸງ ແລະ ຂະຫຍາຍອັດຕາການປົກຄຸມປະກັນສັງຄົມພາກທຸລະກິດ ແລະ ຜູ້ສະໝັກໃຈໃຫ້ກວ້າງຂວາງ, ປັບປຸງການບໍລິຫານຄຸ້ມຄອງ ແລະ ການບໍລິການໃຫ້ວ່ອງໄວ, ຂະຫຍາຍການບໍລິການສູ່ບັນດາເມືອງຈຳນວນໜຶ່ງ ແລະ ບໍລິການເຄື່ອນທີ່; | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 3 | ເອົາໃຈໃສ່ພັດທະນາວຽກງານປົກປ້ອງທາງສັງຄົມ ໃຫ້ກວ້າງຂວາງຫຼາຍຂຶ້ນ ເພື່ອໃຫ້ກຸ່ມຄົນດ້ອຍໂອກາດຕ່າງໆໄດ້ຮັບການຊ່ວຍເຫຼືອຢ່າງສົມເຫດສົມຜົນ; | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| 4 | ສຸມໃສ່ຊຸກຍູ້ວຽກງານແກ້ໄຂລະເບີດບໍ່ທັນແຕກ ໃຫ້ມີຄວາມຄ່ອງຕົວກວ່າເກົ່າຕິດພັນກັບການບັນລຸຄາດໝາຍ ແລະ ຕົວຊີ້ບອກຕາມເປົ້າໝາຍການພັດທະນາແບບຍືນຍົງ ທີ 18. | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| **4.** | **ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ** | | | |
| 1 | ສືບຕໍ່ປົກປັກຮັກສາຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ, ສົ່ງເສີມເສດຖະກິດໝູນວຽນ, ການຜະລິດກະສິກຳສີຂຽວ, ການທ່ອງທ່ຽວສີຂຽວ ແລະ ໂຄງການພະລັງງານສະອາດ; | ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ກະຊວງ, ອົງການ ກ່ຽວຂ້ອງ<br>ແຂວງ, ນວ | |
| 2 | ຊຸກຍູ້ການສ້າງຍຸດທະສາດການນຳໃຊ້ທີ່ດິນຂັ້ນສູນກາງ ແລະ ຂັ້ນແຂວງ ພ້ອມທັງປັບປຸງນິຕິກຳ ແລະ ລະບຽບການຕ່າງໆກ່ຽວກັບທີ່ດິນໃຫ້ຄົບຖ້ວນ ແລະ ຮັດກຸມ; ສືບຕໍ່ຂຶ້ນທະບຽນອອກໃບຕາດິນໃຫ້ສຳເລັດຕາມຄາດໝາຍ ພ້ອມທັງສືບຕໍ່ຫັນລະບົບການຄຸ້ມຄອງທີ່ດິນໃຫ້ເປັນທັນສະໄໝ ເພື່ອເຊື່ອມຖານຂໍ້ມູນທີ່ດິນ ແລະ ການເກັບລາຍຮັບຈາກທີ່ດິນ; | ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ກະຊວງປ້ອງກັນ ຄວາມສະຫງົບ | |
| 3 | ປັບປຸງກົນໄກ, ຂັ້ນຕອນໃນການຈັດສັນ ແລະ ຕິດຕາມກວດກາການນຳໃຊ້ທີ່ດິນຂອງລັດໃນໂຄງການລົງທຶນຕ່າງໆ ທີ່ຈັບຈອງໄວ້ບໍ່ມີການພັດທະນາ ໂດຍສະເພາະໂຄງການເຊົ່າ-ສຳປະທານທີ່ດິນ, ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ ກ່ຽວກັບທີ່ດິນ ໃຫ້ຫຼຸດລົງຢ່າງຕໍ່ເນື່ອງ; | ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ກະຊວງ ກງ | |
| 4 | ສືບຕໍ່ຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ແນໃສ່ບັນລຸຄາດໝາຍການຫຼຸດຜ່ອນການປ່ອຍ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວໃຫ້ເປັນສູນ ໃນປີ 2050, ພ້ອມທັງສົ່ງເສີມການສ້າງຄວາມທົນທານ ແລະ ການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ລວມທັງ ການຊື້-ຂາຍສິນເຊື່ອກາກບອນ; | ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 5 | ສຸມໃສ່ສ້າງ ແລະ ປັບປຸງສະຖານີອຸຕຸນິຍົມ, ສະຖານີອຸທົກກະສາດ ແລະ ສະຖານີວັດແທກສະພາບອາກາດ ໃຫ້ມີຄວາມທັນສະໄໝ, ພະຍາກອນອາກາດໄດ້ທັນການ ແລະ ຊັດເຈນ; | ກະຊວງ ຊັບພະຍາກອນທຳມະຊາດ ແລະ | ແຂວງ, ນວ | |

| | | | | |
|---|---|---|---|---|
| | | ສິ່ງແວດລ້ອມ | | |
| 6 | ເພີ່ມທະວີຊຸກຍູ້ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ແລະ ເມືອງ ໃຫ້ສ້າງກອງທຶນຄຸ້ມຄອງໄພພິບັດຕາມກົດໝາຍທີ່ກຳນົດໄວ້. | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ແຂວງ, ນວ | |
| **5.** | **ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ** | | | |
| 1 | ສືບຕໍ່ພັດທະນາພື້ນຖານໂຄງລ່າງ ດ້ານເສັ້ນທາງຄົມມະນາຄົມຂົນສົ່ງທາງບົກ, ທາງລົດໄຟ, ທາງນໍ້າ, ທາງອາກາດ ໃຫ້ສຳເລັດຕາມແຜນງານ ແລະ ໂຄງການທີ່ໄດ້ກຳນົດໄວ້ ໂດຍສະເພາະທາງດ່ວນ, ທາງລົດໄຟ, ທ່າບົກຕ່າງໆ. | ກະຊວງໂຍທາທິການ ແລະ ຂົນສົ່ງ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ປັບປຸງລະບົບຂົນສົ່ງຕ່າງໆ ໃຫ້ມີຄວາມວ່ອງໄວ. | ກະຊວງໂຍທາທິການ ແລະ ຂົນສົ່ງ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ສືບຕໍ່ປັບປຸງ ແລະ ຂະຫຍາຍວຽກງານການຫັນເປັນທັນສະໄໝ ໃຫ້ກວ້າງຂວາງຕື່ມ ໂດຍສະເພາະ ການຫັນເປັນເສດຖະກິດດິຈິຕອນ ເພື່ອປະກອບເຂົ້າໃນການພັດທະນາເສດຖະກິດ-ສັງຄົມ. | ກະຊວງເຕັກໂນໂລຊີ ແລະ ການສື່ສານ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 4 | ສືບຕໍ່ເພີ່ມທະວີການຮ່ວມມື ແລະ ເປັນເຈົ້າການເຂົ້າຮ່ວມການຈັດຕັ້ງປະຕິບັດຂອບການຮ່ວມມືດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ຕ່າງໆ ທີ່ ສປປ ລາວ ເປັນພາຄີ ໃຫ້ມີຜົນໄດ້ຮັບສູງ ເປັນຕົ້ນ ຂອບການຮ່ວມມືອາຊຽນ, ຂອບການຮ່ວມມື AFTA, ຂອບການຮ່ວມມືແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ ແລະ ອື່ນໆ. | ກະຊວງການຕ່າງປະເທດ | | |
| **6.** | **ວຽກງານຈຸດສຸມເພື່ອບັນລຸເປົ້າໝາຍການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ** | | | |
| 1 | ສືບຕໍ່ປັບປຸງລະບົບ ແລະ ກົນໄກການບໍລິຫານລັດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ທັນສະໄໝ; | ກະຊວງພາຍໃນ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| 2 | ສືບຕໍ່ປັບປຸງການຫັນທົວໜ່ວຍງົບປະມານທີ່ມີລາຍຮັບວິຊາການໄປກຸ້ມຕົນເອງທາງດ້ານງົບປະມານ ແລະ ສ້າງນິຕິກຳ ທີ່ກ່ຽວກັບການຫັນເປັນພາລະກອນໃຫ້ສຳເລັດ; | ກະຊວງພາຍໃນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 3 | ສືບຕໍ່ປັບປຸງແບບແຜນວິທີເຮັດວຽກຂອງອົງການປະຕິບັດຄຳຕັດສິນຂອງສານ ໃຫ້ຂຶ້ນກັບກົມກອງຂອງກະຊວງຍຸຕິທຳ ໂດຍການເຮັດທົດລອງ ຢູ່ 05 ແຂວງ; | ກະຊວງພາຍໃນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 4 | ປັບປຸງຂອດຂັ້ນການອະນຸຍາດການສົ່ງເສີມການລົງທຶນ ແລະ ການດຳເນີນທຸລະກິດ ໃຫ້ມີຄວາມສະດວກ, ວ່ອງໄວ; | ກະຊວງແຜນການ ແລະ ການລົງທຶນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 5 | ສືບຕໍ່ສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ຕາມແຜນທີ່ສະພາຮັບຮອງ. | ກະຊວງຍຸຕິທຳ | - ກະຊວງ, ອົງການ<br>- ແຂວງ, ນວ | |
| **ການກຳນົດໜ້າວຽກຕົວຈິງ ແລະ ການແບ່ງຄວາມຮັບຜິດຊອບໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2024 ແລະ ແຜນການແກ້ໄຂຜົນການກວດສອບ** | | | | |
| **I.** | ການກຳນົດໜ້າວຽກຕົວຈິງ ແລະ ການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ປະຈຳປີ 2024. | | | |
| **1)** | **ມອບໃຫ້ຂະແໜງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ປະຈຳປີ 2024 ໃຫ້ມີຜົນສຳເລັດສູງ; | ກະຊວງ ແຜນການ ແລະ ການລົງທຶນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 2 | ສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ໄດ້ຮັບການອວ່າຍໜີ້ 3 ແຈບ້ວງ 8.000 ຕື້ກີບ ດຳເນີນການກວດກາ ແລະ ຫັກລົບໂຄງການທີ່ໄດ້ຮັບການຊຳລະກັບແຜນການລົງທຶນ ປະຈຳປີ 2024; | ກະຊວງ ແຜນການ ແລະ ການລົງທຶນ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| 3 | ເອົາໃຈໃສ່ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ສະພາຮັບຮອງ, ແຕ່ຍັງຄ້າງຈັດຕັ້ງປະຕິບັດໃນປີ 2023 ໃຫ້ສໍາເລັດໂດຍໄວ; ຮີບຮ້ອນກໍານົດ ແລະ ຈັດສັນງົບປະມານການລົງທຶນຂອງລັດ ປີ 2024 ໃຫ້ສອດຄ່ອງກັບກົດໝາຍ ເປັນຕົ້ນ ກົດໝາຍ ວ່າດ້ວຍການລົງທຶນຂອງລັດ ມາດຕາ 16, 17, 18, 19 ແລະ 38, ກົດໝາຍ ວ່າດ້ວຍງົບປະມານຂອງລັດ ມາດຕາ 55, 56 ແລະ ມາດຕາ 67 ແນ່ໃສ່ຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ຄວາມຍຸຕິທໍາ ຂອງວຽກງານການຈັດສັນງົບປະມານການລົງທຶນຂອງລັດໃຫ້ສູງຂຶ້ນກວ່າເກົ່າ; ຮີບຮ້ອນປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ, ກໍາມະທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ເພື່ອຄວາມເປັນເອກະພາບ ແລະ ຈັດສົ່ງບັນຊີໂຄງການລະອຽດ ໃຫ້ສະພາແຫ່ງຊາດຢັ້ງຢືນ ແລະ ຮັບຮອງໂດຍໄວ, ສໍາລັບແຜນຈັດສັນງົບປະມານການລົງທຶນຂອງລັດໃຫ້ທ້ອງຖິ່ນ ໃຫ້ຮີບຮ້ອນມອບຕົວເລກເພດານໃຫ້ທ້ອງຖິ່ນ ແລະ ສະພາປະຊາຊົນຂັ້ນແຂວງ-ນະຄອນຫຼວງວຽງຈັນ ເປັນຜູ້ພິຈາລະນາຮອງຮອງຕາມກົດໝາຍ; | ກະຊວງ ແຜນການ ແລະ ການລົງທຶນ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 4 | ສືບຕໍ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເລັ່ງປັບປຸງກົນໄກການອະນຸຍາດດໍາເນີນທຸລະກິດ ແລະ ການລົງທຶນ ໃຫ້ມີຄວາມສະດວກ ແລະ ຄ່ອງຕົວກວ່າເກົ່າ; ສືບຕໍ່ປັບປຸງກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ, ແລະ ກົດໝາຍວ່າດ້ວຍເຂດເສດຖະກິດພິເສດ ໃຫ້ສໍາເລັດ ເພື່ອນໍາສະເໜີສະພາແຫ່ງຊາດ ສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX. ນອກຈາກນັ້ນ ກໍຊຸກຍູ້, ຕິດຕາມ ແລະ ປະເມີນ ໂຄງການລົງທຶນຂອງພາກເອກະຊົນ ທີ່ເປັນສໍາປະທານ ທີ່ໄດ້ອະນຸມັດແລ້ວ; | ກະຊວງ ແຜນການ ແລະ ການລົງທຶນ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ຊຸກຍູ້, ຕິດຕາມ ແລະ ປະເມີນຈັດຕັ້ງປະຕິບັດ ວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 2021-2023 ໃຫ້ສໍາເລັດ ທັງເຊື່ອມສານ ວຽກງານບູລິມະສິດ ຂອງວາລະແຫ່ງຊາດ ເຂົ້າແຜນພັດທະນາເສດຖະກິດ-ສັງຄົມ; | ກະຊວງ ແຜນການ ແລະ ການລົງທຶນ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 6 | ຕິດຕາມສະພາບເສດຖະກິດຂອງພາກພື້ນ ແລະ ໂລກຢ່າງເປັນປະຈໍາ ເພື່ອໃຫ້ສາມາດກໍານົດມາດຕະການຮັບມືແຕ່ຫົວທີ ແລະ ທັນການ ພ້ອມທັງສາມາດຫັນເອົາສິ່ງທ້າທາຍໃຫ້ກາຍເປັນໂອກາດໃນການພັດທະນາປະເທດ; | ກະຊວງ ແຜນການ ແລະ ການລົງທຶນ | - ກະຊວງ, ອົງການ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| 7 | ສືບຕໍ່ປະສານສົມທົບກັບອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ແກ້ໄຂຜົນການກວດສອບ-ກວດກາ ທີ່ຕິດພັນກັບການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໃຫ້ໄດ້ຮັບຜົນດີ. | ກະຊວງແຜນການ ແລະ ການລົງທຶນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 2) | **ມອບໃຫ້ຂະແໜງການເງິນ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ເອົາໃຈໃສ່ສືບຕໍ່ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂົງເຂດການເງິນ ຢ່າງກ້ວາງຂວາງ ແລະ ຕໍ່ເນື່ອງ ເພື່ອໃຫ້ພະນັກງານລັດຖະກອນ, ປະຊາຊົນຮັບຮູ້ ແລະ ເຂົ້າໃຈ, ພ້ອມທັງຜັນຂະຫຍາຍບາງມາດຕາຂອງກົດໝາຍເປັນນິຕິກຳໃຕ້ກົດໝາຍ ໃຫ້ສຳເລັດໂດຍໄວ; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 2 | ສືບຕໍ່ເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານ ຕາມຄຳສັ່ງເລກທີ 18/ນຍ ໃຫ້ແຂງແຮງກວ່າເກົ່າ; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 3 | ສືບຕໍ່ປະຕິບັດນະໂຍບາຍການເງິນ ເພື່ອຊ່ວຍໜູນນະໂຍບາຍທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ຖືກແກ້ໄຂຢ່າງເປັນລະບົບ ເພື່ອຮັບມືກັບສະພາບການຜັນຜວນໃນພາກພື້ນ ແລະ ສາກົນ ໃຫ້ທັນການ; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 4 | ເອົາໃຈໃສ່ເກັບລາຍຮັບຈາກຖານລາຍຮັບທີ່ມີຢູ່ໃນປັດຈຸບັນໃຫ້ຄົບຖ້ວນ ແລະ ຂະຫຍາຍຖານລາຍຮັບໃໝ່ໃຫ້ເພີ່ມຂຶ້ນ ດ້ວຍການປັບປຸງນິຕິກຳ, ອັດຕາອາກອນຕ່າງໆ ແລະ ຄ່າທຳນຽມບໍລິການ, ເອົາໃຈໃສ່ຫັນເປັນທັນສະໄໝໃນການເກັບລາຍຮັບຈາກທຸກແຫຼ່ງ ເພື່ອຕ້ານການຮົ່ວໄຫຼການເກັບລາຍຮັບຢ່າງເຂັ້ມງວດ. ເອົາໃຈໃສ່ຜົນການກວດສອບ-ກວດກາ ຕາມທີ່ກຳນົດໄວ້ໃນມະຕິກອງປະຊຸມສະພາ ໂດຍຖືເອົາການກວດສອບ ແລະ ກວດກາ ເປັນມາດຕະຖານປະເມີນບຸກຄະລາກອນທີ່ສະພາແຫ່ງຊາດ ໄດ້ພິຈາລະນາຮັບຮອງ; ເອົາໃຈໃສ່ເກັບລາຍຮັບຈາກຫົວໜ່ວຍທຸລະກິດຂະໜາດໃຫຍ່ທີ່ມີທ່າແຮງ ເປັນຕົ້ນ ພະລັງງານສະອາດ, ການທ່ອງທ່ຽວສີຂຽວ, ການຄົມມະນາຄົມ (Logistic) ແລະ ອື່ນໆ; | ກະຊວງການເງິນ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| | | | | |
| 5 | ຄົ້ນຄວ້າພັດທະນາລະບົບຄຸ້ມຄອງທັນສະໄໝ ເພື່ອແກ້ໄຂການບໍ່ລວມສູນທາງດ້ານລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງການພາກລັດ ໃຫ້ສຳເລັດໂດຍໄວ, ເຊິ່ງປະຈຸບັນຍັງກະແຈກກະຈາຍຢູ່ບັນດາ ຂະແໜງການ ແລະ ຫົວໜ່ວຍງົບປະມານ ເຮັດໃຫ້ລາຍຮັບບໍ່ລວມສູນ, ບາງຂະແໜງການເກັບຄ່າທຳນຽມ ແລະ ບໍລິການ ດ້ວຍຮູບແບບເງິນສົດ ໂດຍອອກໃບສັ່ງມອບ ແລະ ນຳໃຊ້ໃບເກັບເງິນຂອງຂະແໜງສ່ວຍສາອາກອນ ແລ້ວຈຶ່ງມອບເຂົ້າບັນຊີເງິນຝາກຄັງເງິນແຫ່ງຊາດ ເພື່ອເຮັດໃຫ້ການຄຸ້ມຄອງການຈັດເກັບລາຍຮັບຄ່າທຳນຽມ ແລະ ຄ່າບໍລິການໃຫ້ລວມສູນ ແລະ ສາມາດສະຫຼຸບໄດ້ຢ່າງວ່ອງໄວ; | ກະຊວງການເງິນ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 6 | ດຳເນີນນະໂຍບາຍດ້ານການເງິນ-ງົບປະມານທີ່ມີລັກສະນະກະຕຸ້ນເສດຖະກິດ, ຫຼຸດຜ່ອນຕົ້ນທຶນການຄ້າ ແລະ ການຜະລິດທຸລະກິດ; | ກະຊວງການເງິນ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 7 | ສືບຕໍ່ປັບປຸງລະບົບການຄຸ້ມຄອງດ່ານສາກົນ, ລະບົບແຈ້ງພາສີອາກອນ ແລະ ການເກັບລາຍຮັບທຸກຮູບແບບຢູ່ທຸກໆດ່ານ ແລະ ດັດສົມບໍລິສັດຂາອອກ-ຂາເຂົ້າ ໃຫ້ເຂົ້າສູ່ການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດ ໝາຍຢ່າງເຂັ້ມງວດ; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 8 | ສືບຕໍ່ເກັບກຳ ແລະ ເກັບກູ້ລາຍຮັບຊັບສິນທີ່ຖືກຮິບຈາກຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ຈັດຕັ້ງການປະມູນຂາຍ ເພື່ອນຳເງິນເຂົ້າງົບປະມານລັດ; | ກະຊວງການເງິນ | ກະຊວງ ພນ | |
| 9 | ສືບຕໍ່ຊຸກຍູ້, ຕິດຕາມ ແລະ ປະເມີນ 9 ແຂວງທີ່ທົດລອງມອບຫົວໜ່ວຍທຸລະກິດໃຫ້ແຂວງຄຸ້ມຄອງ ເພື່ອສ້າງຄວາມເຂັ້ມແຂງໃຫ້ທ້ອງຖິ່ນທາງດ້ານງົບປະມານຂອງລັດ ຕາມທິດ 3 ສ້າງ ໃນ 6 ເດືອນຕົ້ນປີ 2024 ເພື່ອກຳນົດຫຼັກການ, ກົນໄກໃນການຄຸ້ມຄອງໃຫ້ແທດເໝາະກັບສະພາບຈຸດພິເສດຂອງແຕ່ລະທ້ອງຖິ່ນ ໄປຄຽງຄູ່ກັບການຄົ້ນຄວ້າເພີ່ມຕື່ມບາງແຂວງທີ່ມີເງື່ອນໄຂ; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| 10 | ຄຸ້ມຄອງຈັດສັນແຜນລາຍຈ່າຍງົບປະມານໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ຢູ່ໃນລະດັບດຽວກັບປີທີ່ຜ່ານມາ ເພື່ອຜັນຂະຫຍາຍດຳລັດວ່າການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 205/ລບ ໃຫ້ເປັນຮູບປະທຳ ບົນພື້ນຖານຮັບປະກັນການເຄື່ອນໄຫວກົງຈັກ ພັກ-ລັດ ໃຫ້ເປັນປົກກະຕິ, ປະຕິບັດກົນໄກລາຍຈ່າຍເງິນໂຄງການລົງທຶນຂອງລັດ ໃຫ້ສາມາດກະຕຸ້ນເສດຖະກິດແຕ່ຕົ້ນປີ. ພ້ອມນັ້ນ ກໍສູ້ຊົນສ້າງຄັງສະສົມແຫ່ງລັດ ດ້ວຍຫຼາຍສະກຸນເງິນ ແລະ ເປັນວັດຖຸມີຄ່າ ໃຫ້ເພີ່ມຂຶ້ນ; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 11 | ຮັບປະກັນຮັກສາສະຖຽນລະພາບໃນການບໍລິຫານໜີ້ສາທາລະນະ ດ້ວຍການປັບໂຄງສ້າງໜີ້ສິນສາທາລະນະຄືນໃໝ່ ໃຫ້ເປັນແຜນລະອຽດ ເພື່ອໃຫ້ມີລາຍຮັບຮອງຮັບໃນການຊຳລະໜີ້ສິນ; ລະດົມແຫຼ່ງທຶນດ້ວຍຫຼາຍກົນໄກ ໂດຍສຸມໃສ່ການກູ້ຢືມພາຍໃນ ແລະ ຕ່າງປະເທດ ພ້ອມທັງລະດົມແຫຼ່ງທຶນຜ່ານໂຄງການຂະໜາດໃຫຍ່ທີ່ມີເງື່ອນໄຂ ເພື່ອຮັບປະກັນໃຫ້ມີແຫຼ່ງທຶນພຽງພໍໃນການຊຳລະໜີ້ສິນ ເພື່ອບໍ່ໃຫ້ປະເທດຕົກຢູ່ໃນສະພາບທີ່ບໍ່ສາມາດຊຳລະໜີ້ສິນໄດ້; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 12 | ເພີ່ມທະວີການກວດກາ, ຕ້ານ, ສະກັດກັ້ນການລັກລອບໜີພາສີ, ການຄ້າຂາຍເຖື່ອນ; ຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າທີ່ເປັນສະກຸນເງິນຕາຕ່າງປະເທດ ດ້ວຍການແຈ້ງພາສີເປັນລາຍລະອຽດ ແລະ ຊຳລະຜ່ານລະບົບທະນາຄານ ພ້ອມທັງການສ້າງກົນໄກການເຊື່ອມໂຍງຂໍ້ມູນການແຈ້ງພາສີຂາອອກກັບບັນດາປະເທດອາຊຽນ ທີ່ ສປປ ລາວ ເປັນພາຄີ ແລະ ສົມທຽບກັບລາຄາຊື້-ຂາຍຕົວຈິງ ຕາມຫຼັກການກຳນົດມູນຄ່າການແຈ້ງພາສີຂອງອົງການການຄ້າໂລກ ເພື່ອຮັບປະກັນການແຈ້ງມູນຄ່າພາສີສິນຄ້າເຄື່ອງຂອງໃຫ້ຖືກຕ້ອງ; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 13 | ເອົາໃຈໃສ່ປະເມີນຄືນຖານລາຍຮັບຈາກການເຊົ່າສຳປະທານ, ການຂຸດຄົ້ນແຮ່ທາດ ແລະ ທຸລະກິດເງິນດິຈິຕອນ; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 14 | ເລັ່ງທວງ ແລະ ມີມາດຕະການໃນການເກັບກູ້ຄືນໜີ້ຕ້ອງຮັບຈາກບັນດາວິສາຫະກິດລັດ-ເອກະຊົນ ແລະ ພາກສ່ວນອື່ນ ທີ່ລັດຖະບານປ່ອຍກູ້ໂດຍກົງ ແລະ ຄ້ຳປະກັນໃຫ້; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| 15 | ປະສານສົມທົບກັບອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ເພື່ອເກັບກູ້ໜີ້ທີ່ລັດ ກວດສອບເຫັນເພີ່ມ ຈາກຜົນການກວດສອບກວດກາບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານປີ 2021 ແລະ ປີ 2022 ເຂົ້າແຜນງົບປະມານປີ 2024; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 16 | ຖົກຖຽງວ່າຈັດສັນເພີ່ມງົບປະມານ ເພື່ອແກ້ໄຂບັນຫາເງິນເດືອນຄູອາສາສະໝັກ ຕາມມະຕິ 09/ນຍ, ສົມທົບທຶນກັບໂຄງການຊ່ວຍເຫຼືອ ຂອງສະຫະພາບອີຢູ ທີ່ຊ່ວຍການບໍລິຫານການສຶກສາ ແລະ ປັບປຸງຄຸນນະພາບການຮຽນ-ການສອນ; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 17 | ສືບຕໍ່ປະສານສົມທົບກັບອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ໃນການແກ້ໄຂຜົນການກວດສອບ-ກວດກາ ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2022 ແລະ ແກ້ໄຂຜົນຂອງການກວດສອບ-ກວດກາໃນໄລຍະຜ່ານມາ ເຂົ້າໃນແຜນການປີ 2024 ຕາມເງື່ອນໄຂຕົວຈິງ; | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| 18 | ສືບຕໍ່ຄຸ້ມຄອງລາຍຈ່າຍຕາມມາດຕະການປະຢັດ ແລະ ຕ້ານການຟູມເຟືອຍຂອງລັດຖະບານ, ຮັບປະກັນລາຍຈ່າຍບູລິມະສິດ, ການລົງທຶນຂອງລັດ. | ກະຊວງການເງິນ | - ກະຊວງ, ອົງການ<br>- ແຂວງ, ນວ | |
| **3)** | **ມອບໃຫ້ຂະແໜງທະນາຄານ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ເອົາໃຈໃສ່ສືບຕໍ່ໂຄສະນາ ແລະ ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດທະນາຄານ ໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈ ຢ່າງກວ້າງຂວາງ ແລະ ຕໍ່ເນື່ອງ ໂດຍສະເພາະ ຕິດພັນກັບການແລກປ່ຽນເງິນຕາ, ການນຳໃຊ້ເງິນກີບ, ການຊຳລະຜ່ານລະບົບທະນາຄານ, ການຕິດລາຄາສິນຄ້າແລະ ອື່ນໆ, ພ້ອມທັງຜັນຂະຫຍາຍບາງມາດຕາຂອງກົດໝາຍໃຫ້ເປັນນິຕິກຳໃຕ້ກົດໝາຍໃຫ້ສຳເລັດໂດຍໄວ; | ທະນາຄານແຫ່ງ ສປປ ລາວ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ດຳເນີນນະໂຍບາຍເງິນຕາໃຫ້ຮັດກຸມກວ່າເກົ່າ ເພື່ອຄຸ້ມຄອງປະລິມານເງິນໃຫ້ຂະຫຍາຍຕົວ ເພື່ອ | ທະນາຄານແຫ່ງ | - ກະຊວງ, ອົງການ | |

| | | | | |
|---|---|---|---|---|
| | ສະໜັບສະໜູນການຂະຫຍາຍຕົວຂອງເສດຖະກິດ; ປັບປຸງການດຳເນີນນະໂຍບາຍເງິນຕາໃຫ້ມີປະສິດທິຜົນກວ່າເກົ່າ ເພື່ອໃຫ້ເຄື່ອງມືເງິນຕາ ໂດຍສະເພາະແມ່ນ ອັດຕາດອກເບ້ຍພື້ນຖານທີ່ເປັນເຄື່ອງມືທີ່ມີປະສິດທິຜົນ; ພ້ອມທັງ ປະສານສົມທົບກັບກະຊວງການເງິນ ໃນການຊຸກຍູ້ການຈຳໜ່າຍພັນທະບັດທີ່ມີຄວາມຫຼາກຫຼາຍ ເພື່ອລະດົມທຶນໃຫ້ໄດ້ເພີ່ມຂຶ້ນ; ທົບທວນຄືນນະໂຍບາຍອັດຕາດອກເບ້ຍເງິນຝາກ ສຳລັບສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ ຂອງລະບົບທະນາຄານ ເພື່ອຫຼຸດຜ່ອນແຮງກະຕຸ້ນຄວາມຕ້ອງການເງິນຕາຕ່າງປະເທດທີ່ບໍ່ຈຳເປັນ; | ສປປ ລາວ | ກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ສືບຕໍ່ດຳເນີນນະໂຍບາຍອັດຕາແລກປ່ຽນ ພາຍໃຕ້ລະບອບອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ໃນທິດທາງທີ່ມີຄວາມຍືດຢຸ່ນຫຼາຍຂຶ້ນ; ປັບປຸງລະບົບການແລກປ່ຽນເງິນຕາຕ່າງປະເທດ ໃຫ້ມີຄວາມຄ່ອງຕົວຫຼາຍຂຶ້ນ ດ້ວຍການຊຸກຍູ້ທະນາຄານທຸລະກິດ ໃຫ້ກາຍເປັນສູນກາງການບໍລິການແລກປ່ຽນເງິນຕາໃນຫຼາກຫຼາຍຮູບແບບ; ພັດທະນາຕະຫຼາດແລກປ່ຽນ ຊື້-ຂາຍເງິນຕາຕ່າງປະເທດ ສະເພາະຜູ້ສົ່ງອອກ-ນຳເຂົ້າ ແລະ ຜູ້ລົງທຶນ ສາມາດແລກປ່ຽນຊື້-ຂາຍເງິນຕາຕ່າງປະເທດນຳກັນ ບົນພື້ນຖານໂຄງສ້າງການຊຳລະຜ່ານລະບົບທະນາຄານ; ສືບຕໍ່ຕັດສົມເງິນຕາຕ່າງປະເທດ ໃຫ້ແກ່ສິນຄ້າບູລິມະສິດທີ່ເຫັນວ່າມີຄວາມຈຳເປັນໃນການພັດທະນາເສດຖະກິດ-ສັງຄົມ ແລະ ການດຳລົງຊີວິດຂອງປະຊາຊົນ; | ທະນາຄານແຫ່ງ ສປປ ລາວ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 4 | ຮີບຮ້ອນເກັບກູ້ໜີ້ສິນທີ່ລັດຖະບານ ແລະ ທະນາຄານແຫ່ງ ສປປ ລາວ ໄດ້ປ່ອຍກູ້ ແລະ ຄ້ຳປະກັນໃຫ້ວິສາຫະກິດລັດ ແລະ ເອກະຊົນໃນໄລຍະຜ່ານມາ ໃຫ້ສຳເລັດ; | ທະນາຄານແຫ່ງ ສປປ ລາວ | | |
| 5 | ສ້າງເງື່ອນໄຂໃຫ້ມີເງິນຕາຕ່າງປະເທດເຂົ້າ ສປປ ລາວ ແລະ ລະບົບທະນາຄານໃຫ້ຫຼາຍຂຶ້ນ ໂດຍສຸມໃສ່ສືບຕໍ່ຜັນຂະຫຍາຍກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ອອກເປັນນິຕິກຳລຸ່ມກົດໝາຍໂດຍສະເພາະແມ່ນ ໃຫ້ສຳເລັດຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດທີ່ຕິດພັນກັບການລົງທຶນ ຕ່າງປະເທດ ແລະ ຂໍ້ຕົກລົງວ່າດ້ວຍການກູ້ຢືມ ແລະ ສິນເຊື່ອການຄ້າລະຫວ່າງປະເທດ; ພັດທະນາລະບົບຂໍ້ມູນຂ່າວສານ ເພື່ອຕິດຕາມ ແລະ ຄຸ້ມຄອງກະແສເງິນຕາຕ່າງປະເທດຂອງຜູ້ສົ່ງອອກ-ນຳເຂົ້າ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ພ້ອມທັງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນການຕິດຕາມເງິນຕາຕ່າງປະເທດຈາກການສົ່ງອອກ-ນຳເຂົ້າ ໃຫ້ຜ່ານລະບົບທະນາຄານ ໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້; | ທະນາຄານແຫ່ງ ສປປ ລາວ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 6 | ສືບຕໍ່ເອົາໃຈໃສ່ໃນການຕິດຕາມ ແລະ ກວດກາ ບັນດາທະນາຄານທຸລະກິດທີ່ຢູ່ພາຍໃຕ້ການຄຸ້ມ | ທະນາຄານແຫ່ງ | - ກະຊວງ, ອົງການ | |

| | | | | |
|---|---|---|---|---|
| | ຄຸ້ມຄອງຂອງຕົນ ຕາມຫຼັກການຄວາມສ່ຽງ ໂດຍແນໃສ່ເຮັດໃຫ້ທະນາຄານທຸລະກິດທົ່ວລະບົບມີຄວາມໝັ້ນຄົງເຂັ້ມແຂງ; ຜັນຂະຫຍາຍກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ອອກເປັນນິຕິກຳລະອຽດ ພ້ອມທັງຄົ້ນຄວ້າສ້າງ ແລະ ປັບປຸງລະບຽບການທີ່ນຳໃຊ້ເຂົ້າໃນການຄຸ້ມຄອງທະນາຄານທຸລະກິດ; ສືບຕໍ່ຊຸກຍູ້ທະນາຄານທຸລະກິດ ພັດທະນາການບໍລິການໃຫ້ມີຄວາມທັນສະໄໝ ສາມາດເຂົ້າເຖິງໄດ້ຢ່າງສະດວກ ແລະ ທົ່ວເຖິງ ພ້ອມທັງເປັນເຈົ້າການໃນການພັດທະນາຜະລິດຕະພັນສິນເຊື່ອໃຫ້ມີຄວາມຫຼາກຫຼາຍ ແລະ ສະໜອງສິນເຊື່ອໃຫ້ສອດຄ່ອງກັບເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະໂຄງການຜະລິດເປັນສິນຄ້າ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ດ້ວຍອັດຕາອອກເບ້ຍຜ່ອນຜັນ; | ສປປ ລາວ | ກ່ຽວຂ້ອງ<br>- ແຂວງ, ນວ | |
| 7 | ເພີ່ມທະວີການໂຄສະນາໃຫ້ສັງຄົມ ນຳໃຊ້ ແລະ ຕິດລາຄາສິນຄ້າເປັນເງິນກີບ ໃຫ້ຫຼາຍຂຶ້ນ. | ທະນາຄານແຫ່ງ ສປປ ລາວ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 8 | ຄົ້ນຄ້ວາກົນໄກ ແລະ ວິທີການ ເພື່ອອຳນວຍຄວາມສະດວກດ້ານການບໍລິການໃນຂະແໜງການທະນາຄານສຳລັບປິທ່ອງທ່ຽວລາວ ເປັນຕົ້ນ ການແລກປ່ຽນເງິນຕາ, ການຊຳລະຜ່ານລະບົບທະນາຄານ ແລະ ອື່ນໆ. | ທະນາຄານແຫ່ງ ສປປ ລາວ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| **4)** | **ມອບໃຫ້ຂະແໜງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ເອົາໃຈໃສ່ຊຸກຍູ້ການຜະລິດກະສິກຳ ທີ່ເປັນທ່າແຮງຂອງປະເທດ ເພື່ອຫຼຸດຜ່ອນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ດ້ວຍການສະໜອງປັດໄຈການຜະລິດ ເປັນຕົ້ນ ເຕັກນິກວິຊາການ, ແນວພັນພືດ, ແນວພັນສັດ, ຝຸ່ນ ແລະ ອາຫານສັດ ທີ່ມີຄຸນນະພາບ ແລະ ຈັດສັນເຂດທີ່ດິນກະສິກຳໃຫ້ມີຄວາມຊັດເຈນ, ພ້ອມກັນນັ້ນ ໃຫ້ມີມາດຕະການປົກປ້ອງການຜະລິດພາຍໃນ ດ້ວຍການອອກນິຕິກຳທີ່ກ່ຽວຂ້ອງ ເພື່ອກຳນົດຜະລິດຕະພັນໃດທີ່ພາຍໃນສາມາດຜະລິດໄດ້, ຈຳກັດການນຳເຂົ້າດ້ວຍມາດຕະການພາສີອາກອນ-ບໍ່ແມ່ນພາສີອາກອນ ເພື່ອຫຼຸດຜ່ອນການໄຫຼອອກຂອງເງິນຕາຕ່າງປະເທດ. ດຳເນີນມາດຕະການທີ່ເຂັ້ມງວດຕໍ່ການລັກລອບການນຳເຂົ້າຜະລິດຕະພັນທີ່ບໍ່ຖືກກົດໝາຍຢູ່ດ່ານທ້ອງຖິ່ນ, ດ່ານປະເພນີ ແລະ ການຄ້າຊາຍແດນ ພ້ອມທັງປັບປຸງລະບົບການຄ້າ | ກະຊວງກະສິກຳ ແລະ ປ່າໄມ້ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| | ພາຍໃນໃຫ້ມີຄວາມເຂັ້ມແຂງ, ຈັດຕັ້ງການຄ້າຂາຍຍົກ-ຂາຍຍ່ອຍ ລວມທັງການຄົ້ນຄວ້າກຳນົດນະໂຍບາຍປັບປຸງບໍລິສັດທີ່ເຮັດແຕ່ຂາເຂົ້າ ໂດຍໃຫ້ຫັນມາສົ່ງເສີມການລົງທຶນໃສ່ຂາອອກ ໃຫ້ມີທ່າອຽງເພີ່ມຂຶ້ນ ແລະ ມີຄວາມເຂັ້ມແຂງ; | | | |
| 2 | ສືບຕໍ່ຊຸກຍູ້ສົ່ງເສີມການລ້ຽງສັດ ແລະ ການປະມົງ ເພື່ອແນໃສ່ການສະໜອງຊີ້ນ, ໄຂ່ ແລະ ປາ ໃຫ້ພຽງພໍໃນຂອບເຂດທົ່ວປະເທດ; | ກະຊວງກະສິກຳ ແລະ ປ່າໄມ້ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ສ້າງແຜນຄຸ້ມຄອງ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດໃນຂະແໜງກະສິກຳຂັ້ນເມືອງ ແລະ ຂັ້ນບ້ານ ໂດຍໃຫ້ມີການຮັບຮອງແນວພັນ, ປັດໄຈການຜະລິດ, ຝຸ່ນ, ຢາປົວພະຍາດ, ອຸປະກອນເຄື່ອງກົນຈັກ, ເຄື່ອງມືໃນການສູບນ້ຳ ແລະ ລະບາຍນ້ຳ ໃນກໍລະນີເກີດໄພແຫ້ງແລ້ງ ແລະ ນ້ຳຖ້ວມ, ການລະບາດຂອງພະຍາດ, ແມງໄມ້ ລວມທັງແຜນການຈັດສັນພື້ນທີ່ອົບພະຍົບສັດລ້ຽງຢ່າງມີຈຸດສຸມ; | ກະຊວງກະສິກຳ ແລະ ປ່າໄມ້ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 4 | ຄົ້ນຄວ້ານະໂຍບາຍສະໜັບສະໜູນ ການຜະລິດສະບຽງອາຫານ ໃຫ້ໝັ້ນຄົງ ແລະ ຮັບປະກັນໄດ້ດ້ານໂພຊະນາການ ໂດຍການລົງເລິກກຳນົດນະໂຍບາຍສົ່ງເສີມວຽກງານປຸງແຕ່ງ, ຂົນສົ່ງຈໍລະຈອນສິນຄ້າ ແລະ ຕະຫຼາດ; ນະໂຍບາຍດ້ານພະລັງງານ; ນະໂຍບາຍດ້ານສິນເຊື່ອ ແລະ ພາສີ-ອາກອນ, ປັດໄຈການຜະລິດ ແລະ ການສົ່ງອອກສິນຄ້າກະສິກຳ ຂອງບັນດາຫົວໜ່ວຍທຸລະກິດ ໂດຍສະເພາະບັນດາຫົວໜ່ວຍ SMEs ແລະ ຫົວໜ່ວຍເສດຖະກິດລວມໝູ່; | ກະຊວງກະສິກຳ ແລະ ປ່າໄມ້ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ສ້າງແຜນການ ແລະ ມາດຕະການດຸ່ນດ່ຽງການຜະລິດ ແລະ ການບໍລິໂພກ, ມີການຈັດຕັ້ງການຜະລິດເປັນກຸ່ມສະຫະກອນ, ເປັນຟາມແບບຫົວໜ່ວຍຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ; ມີນະໂຍບາຍສົ່ງເສີມການຜະລິດ, ການປຸງແຕ່ງເພີ່ມມູນຄ່າ ແລະ ຄຸນນະພາບຂອງຜະລິດຕະພັນ, ການເຂົ້າເຖິງສິນເຊື່ອ ແລະ ຕະຫຼາດ ລວມທັງການຂົນສົ່ງຈໍລະຈອນສິນຄ້າ ພ້ອມທັງມີມາດຕະການຊ່ວຍໜູນເພື່ອຫຼຸດຜ່ອນຜົນກະທົບຈາກໄພພິບັດທຳມະຊາດ. ພ້ອມກັນນັ້ນ, ກໍມີແຜນການ ແລະ ມາດຕະການຄຸ້ມຄອງພັດທະນາທີ່ດິນກະສິກຳ; ການພັດທະນາຊົນລະ | ກະຊວງກະສິກຳ ແລະ ປ່າໄມ້ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| | ກະເສດ; ການຄົ້ນຄວ້າທົດລອງທາງວິທະຍາສາດດ້ານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ພ້ອມທັງມີກົນໄກປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຢ່າງສະໜິດແໜ້ນ; | | | |
| 6 | ຊຸກຍູ້ ແລະ ສົ່ງເສີມທຸກພາກສ່ວນໃນສັງຄົມ ປະກອບສ່ວນເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍການດຶງດູດການລົງທຶນຂອງພາກເອກະຊົນ ເພື່ອສ້າງວຽກເຮັດງານທຳ ແລະ ລາຍໄດ້ໃຫ້ປະຊາຊົນກັບທີ່; ປັບປຸງການເຂົ້າເຖິງສິນເຊື່ອຂອງທະນາຄານລັດ ແລະ ທະນາຄານທຸລະກິດ ພ້ອມທັງຊຸກຍູ້ການປ່ອຍເງິນກູ້ຈາກກອງທຶນພັດທະນາຕ່າງໆພາຍໃນຊຸມຊົນ ເພື່ອສົ່ງເສີມການຜະລິດຂອງປະຊາຊົນ; ສືບຕໍ່ຈັດຕັ້ງປະຕິບັດກິດຈະກາຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ກິດຈະກຳຂອງແຜນງານ ແລະ ໂຄງການຈາກທຶນຊ່ວຍເຫຼືອທາງການເພື່ອການພັດທະນາຕາມແຜນກຳນົດໄວ້. ພ້ອມທັງສືບຕໍ່ຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ນິຕິກຳໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ມີປະສິດທິຜົນ. | ກະຊວງກະສິກຳ ແລະ ປ່າໄມ້ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| **5)** | **ມອບໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ຊຸກຍູ້ສົ່ງເສີມການຜະລິດ, ການບໍລິການ, ການນຳເຂົ້າ-ສົ່ງອອກ ສິນຄ້າປະເພດຕ່າງໆໂດຍສະເພາະການທົດລອງສົ່ງອອກແຮ່ທາດ ເພື່ອຜູ້ປະກອບການມີສ່ວນຮ່ວມໃນການປັບປຸງແຜນການ, ແຜນງານໂຄງການຕົວຈິງໃຫ້ຄົບວົງຈອນ, ການອະນຸມັດໂຄງການ, ການເຂົ້າເຖິງແຫຼ່ງທຶນ ແລະ ການຕະຫຼາດ; | **ກະຊວງອຸດສາຫະກຳ ແລະ ການຄ້າ** | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ສູ້ຊົນຍົກລະດັບໂຮງງານໃຫ້ກ້າວສູ່ມາດຕະຖານສາກົນ; ຍົກລະດັບມາດຕະຖານ ແລະ ຄຸນນະພາບຜະລິດຕະພັນອຸດສາຫະກຳ, ຄຸນນະພາບ ແລະ ມາດຕະຖານຜະລິດຕະພັນແຫ່ງຊາດ; ໂດຍການສ້າງນະໂຍບາຍ ແລະ ກົນໄກໃນການສົ່ງເສີມການຜະລິດ, ການພັດທະນາຄຸນນະພາບ ແລະ ມາດຕະຖານ ເພື່ອປັບປຸງການຜະລິດໃຫ້ສາມາດຢັ້ງຢືນໄດ້ຕາມມາດຕະຖານການຜະລິດທີ່ດີ (GMP), ລະບົບວິເຄາະ ແລະ ຄວບຄຸມຈຸດວິກິດ (HACCP) ແລະ ການຢັ້ງຢືນອື່ນໆ; | **ກະຊວງອຸດສາຫະກຳ ແລະ ການຄ້າ** | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| | | | | |
| 3 | ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃນການຜະລິດສິນຄ້າ ODOP ໃຫ້ຕິດພັນກັບການຕະຫຼາດ, ການຂາຍ, ງານວາງສະແດງສິນຄ້າ ແລະ ການຊີມໃຊ້ຜະລິດຕະພັນ ເພື່ອຕອບສະໜອງຄວາມຕ້ອງການຂອງການທ່ອງທ່ຽວ ແລະ ການສົ່ງອອກໃຫ້ນັບມື້ນັບເພີ່ມຂຶ້ນ ເຊັ່ນ: ການຕໍ່າຫູກທໍໄໝ, ການຍ້ອມສີທໍາມະຊາດ, ການຕີໂລຫະ (ເຄື່ອງປະດັບ), ເຄື່ອງປັ້ນດິນເຜົາ, ການແກະສະຫຼັກໄມ້, ການຈັກສານ, ການຕີເຫຼັກ, ການປຸງແຕ່ງອາຫານພື້ນເມືອງ, ເຄື່ອງປະດັບເອ້ຍ້ອງ ແລະ ຄົ້ນຄວ້າຈັດບູລິມະສິດ ເພື່ອປະດັບດາວນາມມະຍົດໃຫ້ສິນຄ້າ ODOP ແລະ ອື່ນໆ; | **ກະຊວງອຸດສາຫະກໍາ ແລະ ການຄ້າ** | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 4 | ສົ່ງເສີມການຜະລິດສິນຄ້າພາຍໃນໃຫ້ມີຄວາມຫຼາກຫຼາຍ ເພື່ອຫຼຸດຜ່ອນການນໍາເຂົ້າສິນຄ້າທີ່ບໍ່ຈໍາເປັນ ໂດຍການສ້າງໃຫ້ໄດ້ສິນຄ້າທີ່ຜະລິດຈາກລາວ (Made in Laos) ໃຫ້ເປັນທີ່ຍອມຮັບຂອງຜູ້ຊົມໃຊ້ ແລະ ສົ່ງເສີມການຜະລິດສິນຄ້າທີ່ມີທ່າແຮງຢູ່ແລ້ວ ໃຫ້ເຂົ້າເຖິງຕະຫຼາດຜູ້ບໍລິໂພກພາຍໃນ; | **ກະຊວງອຸດສາຫະກໍາ ແລະ ການຄ້າ** | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ສືບຕໍ່ຄົ້ນຄວ້າ ແລະ ຊອກຫາການເຂົ້າເຖິງຕະຫຼາດສົ່ງອອກສິນຄ້າ (ຕະຫຼາດເກົ່າທີ່ມີຢູ່ແລ້ວ ແລະ ຊອກຫາຕະຫຼາດໃໝ່) ກັບ ສປ ຈີນ, ຫວຽດນາມ, ໄທ, ຍີ່ປຸ່ນ ແລະ ປະເທດຄູ່ຄ້າອື່ນໆ ໃນສິນຄ້າລາຍການປະເພດ ເຂົ້າ, ກາເຟ, ສາລີອາຫານສັດ, ນໍ້າຕານ, ມັນຕົ້ນ (ຕາກແຫ້ງ), ພືດຜັກ, ໝາກໄມ້, ຢາງພາລາ, ສັດລ້ຽງ (ງົວ ແລະ ຄວາຍ), ໄຟຟ້າ, ຢາສູບ ແລະ ສິນຄ້າປະເພດອື່ນໆ; | **ກະຊວງອຸດສາຫະກໍາ ແລະ ການຄ້າ** | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 6 | ຄົ້ນຄ້ວານະໂຍບາຍສົ່ງເສີມການຄ້າພາຍໃນ ແລະ ຕ່າງປະເທດ ດ້ວຍການຊຸກຍູ້ການຜະລິດພາຍໃນ ທີ່ເປັນທ່າແຮງໄດ້ປຽບຂອງປະເທດ ເພື່ອທົດແທນການນໍາເຂົ້າ ໂດຍຖືເອົາຂໍ້ມູນຈາກການຄ້າການນໍາເຂົ້າເປັນຫຼັກ ເພື່ອກໍານົດປະເພດສິນຄ້າ ທີ່ມີທ່າແຮງໄດ້ປຽບສາມາດຜະລິດທົດແທນໄດ້ ແລະ ຫຼຸດຜ່ອນການ ໄຫຼອອກຂອງເງິນຕາຕ່າງປະເທດ ດ້ວຍການຄົ້ນຄວ້າລາຍການສິນຄ້າທີ່ນໍາເຂົ້າໃນປະຈຸບັນ ປະເພດໃດທີ່ສາມາດຜະລິດທົດແທນໄດ້ໃນຈໍານວນຫຼາຍປານໃດ, ສົ່ງເສີມການສົ່ງອອກສິນຄ້າທີ່ມີຄຸນນະພາບ ແລະ ຄວາມຍືນຍົງ, ຄຸ້ມຄອງເງິນຕາຕ່າງປະເທດ ຈາກການສົ່ງອອກໃຫ້ຫຼາຍຂຶ້ນ ແນໃສ່ຊຸກຍູ້ສົ່ງເສີມການສົ່ງອອກທີ່ມີມູນຄ່າເພີ່ມສູງຂຶ້ນ ແລະ ມີຄວາມຍືນຍົງ | **ກະຊວງອຸດສາຫະກໍາ ແລະ ການຄ້າ** | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| | ໃຫ້ຫຼາຍຂຶ້ນ, ພ້ອມທັງໂຄສະນາຊວນເຊື່ອການຊົມໃຊ້ຜະລິດຕະພັນພາຍໃນ ໃຫ້ຫຼາຍຂຶ້ນ; | | | |
| 7 | ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກ ທີ່ມີຄວາມອ່ອນໄຫວຕໍ່ການດຳລົງຊີວິດຂອງປະຊາຊົນ, ຄົ້ນຄວ້າມາດຕະການທີ່ສອດຄ່ອງຮັດກຸມໃນການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ ເພື່ອອັດຊ່ອງວ່າງການນຳເຂົ້າສິນຄ້າທີ່ບໍ່ຖືກກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ; | **ກະຊວງອຸດສາຫະກຳ ແລະ ການຄ້າ** | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 8 | ຊຸກຍູ້, ສົ່ງເສີມບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ເພື່ອສ້າງຄວາມເຂັ້ມແຂງຮອບດ້ານໃນການຜະລິດ ແລະ ການບໍລິການ. | **ກະຊວງອຸດສາຫະກຳ ແລະ ການຄ້າ** | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| **6)** | **ມອບໃຫ້ຂະແໜງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ຊຸກຍູ້, ສົ່ງເສີມບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ເພື່ອສ້າງຄວາມເຂັ້ມແຂງຮອບດ້ານໃນການຜະລິດ ແລະ ການບໍລິການ; | ກະຊວງພະລັງງານ ແລະ ບໍ່ແຮ່ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ຊຸກຍູ້ໃຫ້ບັນດາໂຄງການໄຟຟ້າທີ່ດຳເນີນການກໍ່ສ້າງແລ້ວໃຫ້ສຳເລັດ ແລະ ສາມາດດຳເນີນການຜະລິດເຕັມກຳລັງ ເພື່ອກ້າວເຂົ້າສູ່ການສະໜອງໄຟຟ້າໃຫ້ເຕັມກຳລັງ, ພ້ອມນີ້ ກໍໃຫ້ເອົາໃຈໃສ່ຊຸກຍູ້ບັນດາໂຮງງານຜະລິດໄຟຟ້າ ສະໜອງພະລັງງານທີ່ ສປປ ລາວ ມີພັນທະກັບຕ່າງປະເທດໃຫ້ໄດ້ຕາມສັນຍາ; | ກະຊວງພະລັງງານ ແລະ ບໍ່ແຮ່ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ຄົ້ນຄວ້າສ້າງນະໂຍບາຍ ແລະ ແຜນການລະອຽດ ເພື່ອຊຸກຍູ້ການສ້າງຕັ້ງໂຮງງານປຸງແຕ່ງ ຫຼື ຫຼອມແຮ່ທາດ ທີ່ເຮົາມີທ່າແຮງພາຍໃນ (ໂຮງງານປຸງແຕ່ງແຮ່ທາດຊິລິຄອນ, ແຮ່ເຫຼັກ, ອາລູມິນຽມ ແລະ ອື່ນໆ) ເພື່ອຫຼຸດຜ່ອນການສົ່ງອອກແຮ່ດິບ, ນຳໃຊ້ພະລັງງານໄຟຟ້າທີ່ເຮົາມີສ້າງມູນຄ່າເພີ່ມ ແລະ ສ້າງຖານລາຍຮັບໃຫ້ລັດຖະບານ; | ກະຊວງພະລັງງານ ແລະ ບໍ່ແຮ່ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 4 | ເອົາໃຈໃສ່ປະຕິບັດແຜນພັດທະນາພະລັງງານ ແລະ ບໍ່ແຮ່ ໃຫ້ໄປຕາມກົດໝາຍ ແລະ ຍຸດທະ | ກະຊວງພະລັງງານ | - ກະຊວງ, ອົງການ | |

| | | | | |
|---|---|---|---|---|
| | ສາດ, ແຜນແມ່ບົດ ແລະ ແຜນປະຈຳປີ, ປະເມີນຜົນເພື່ອຖອດຖອນບົດຮຽນຊອກໃຫ້ເຫັນດ້ານຕັ້ງໜ້າ, ກາລະໂອກາດ ພ້ອມທັງຈຳກັດສິ່ງທ້າທາຍຕ່າງໆ ເພື່ອປັບປຸງນະໂຍບາຍໃນຕໍ່ໜ້າ ໃຫ້ມີຄວາມສອດຄ່ອງ ຮັບປະກັນປະສິດທິຜົນ ແລະ ຜົນປະໂຫຍດສູງສຸດໃຫ້ແກ່ປະເທດຊາດ; | ແລະ ບໍ່ແຮ່ | ກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ຄົ້ນຄວ້າ ແລະ ປັບປຸງນິຕິກຳ ທີ່ກ່ຽວຂ້ອງກັບຂົງເຂດພະລັງງານ ແລະ ບໍ່ແຮ່ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບຕົວຈິງໃນປະຈຸບັນ. | ກະຊວງພະລັງງານ ແລະ ບໍ່ແຮ່ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| **7)** | **ມອບໃຫ້ຂະແໜງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ສືບຕໍ່ຈັດຕັ້ງປະຕິບັດ ແລະ ປະເມີນຜົນແຜນແມ່ບົດແລວທາງເສດຖະກິດເໜືອ-ໃຕ້; ສືບຕໍ່ຄົ້ນຄວ້ານຳໃຊ້ທ່າແຮງທີ່ໄດ້ປຽບຂອງປະເທດ ຈາກທາງລົດໄຟລາວ-ຈີນ, ບັນດາທ່າບົກ ແລະ ເຂດເສດຖະກິດພິເສດໃຫ້ເກີດປະໂຫຍດສູງສຸດ ໂດຍການສ້າງ ແລະ ປັບປຸງກົນໄກການປະສານງານໃຫ້ເປັນລະບົບ, ມີການຄຸ້ມຄອງແບບລວມສູນ; ຫັນຮູບແບບການຂົນສົ່ງ ໂລຈິດສະຕິກ (ລວມທັງທ່າບົກ) ແບບກະແຈກກະຈາຍ ໄປສູ່ການບໍລິການແບບລວມສູນຄົບວົງຈອນ; ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຮີບຮ້ອນຄົ້ນຄວ້າສ້າງ ແລະ ປັບປຸງບັນດາກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ທີ່ຕິດພັນກັບການບໍລິການຂົນສົ່ງ ແລະ ໂລຈິດສະຕິກ ໃຫ້ມີຄວາມເຂັ້ມງວດ ແລະ ກົມກຽວກັນ; ພ້ອມກັນນັ້ນ ກໍໃຫ້ກຳນົດໂຄງສ້າງລາຄາຄ່າບໍລິການຂົນສົ່ງ ແລະ ໂລຈິດສະຕິກ ໃຫ້ແທດເໝາະກັບສະພາບຈຸດພິເສດຂອງແຕ່ລະຂົງເຂດ ແລະ ແຕ່ລະທ້ອງຖິ່ນ; | ກະຊວງໂຍທາທິການ ແລະ ຂົນສົ່ງ | -ກະຊວງ, ອົງການ ກ່ຽວຂ້ອງ<br>-ແຂວງ, ນວ | |
| 2 | ຮີບຮ້ອນສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງທ້ອງຖິ່ນທີ່ເປ່ເພ ຈາກການຂົນສົ່ງສິນຄ້າ ແລະ ແຮ່ທາດຕ່າງໆ ແລະ ຖືກຜົນກະທົບຈາກໄພພິບັດທຳມະຊາດ ທີ່ສ້າງຄວາມຫຍຸ້ງຍາກໃນການສັນຈອນຂອງປະຊາຊົນຢູ່ແຕ່ລະທ້ອງຖິ່ນ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ (ຂີ້ຝຸ່ນ, ທາງເປັນຂຸມ, ເປິະເປື້ອນ, ນ້ຳຖ້ວມຂັງ) ໃຫ້ຢູ່ໃນສະພາບດີ ແລະ ສາມາດເດີນທາງໄດ້ຢ່າງສະດວກສະບາຍ ແລະ ປອດໄພ; | ກະຊວງໂຍທາທິການ ແລະ ຂົນສົ່ງ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| | | | | |
| 3 | ສືບຕໍ່ປັບປຸງ ແລະ ພັດທະນາຕົວເມືອງໃຫ້ມີຄວາມສະອາດ ແລະ ເປັນລະບຽບຮຽບຮ້ອຍ ເພື່ອຕ້ອນຮັບການເປັນເຈົ້າພາບກອງປະຊຸມອາຊຽນ ຄັ້ງທີ 44 ແລະ ການເປີດປີທ່ອງທ່ຽວລາວ ໃນປີ 2024, ພ້ອມທັງ ປັບປຸງການບໍລິການຂົນສົ່ງສາທາລະນະ ເພື່ອອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ. | ກະຊວງໂຍທາທິການ ແລະ ຂົນສົ່ງ | | |
| **8)** | **ມອບໃຫ້ຂະແໜງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ສືບຕໍ່ຈັດຕັ້ງຜັນຂະຫຍາຍ 4 ວຽກງານບູລິມະສິດສຳຄັນ ໃຫ້ແກ່ການພັດທະນາລະບົບບໍລິຫານລັດ ດິຈິຕອນ ດ້ວຍການຂະຫຍາຍ, ການຕິດຕັ້ງ ແລະ ນຳໃຊ້ລະບົບທີ່ພັດທະນາແລ້ວ ໃຫ້ທົ່ວເຖິງທຸກອົງການຈັດຕັ້ງລັດ ແຕ່ສູນກາງລົງຮອດຂັ້ນແຂວງ ແລະ ເມືອງຈຳນວນໜຶ່ງ, ພ້ອມທັງສືບຕໍ່ພັດທະນາລະບົບ super App ແລະ Platform ໃໝ່ ອອກມານຳໃຊ້; | ກະຊວງເຕັກໂນໂລຊີ ແລະ ການສື່ສານ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ສືບຕໍ່ຫັນຂະບວນການເຮັດວຽກຂອງພາກລັດໃຫ້ເປັນລະບົບດິຈິຕອນ ແລະ ທັນສະໄໝ; ປັບປຸງ ແລະ ຂະຫຍາຍລະບົບເຄືອຂ່າຍເຊື່ອມໂຍງບັນດາອົງການຈັດຕັ້ງລັດ ເຂົ້າຫາລະບົບບໍລິຫານ ແລະ ບໍລິການລັດດ້ວຍເອເລັກໂຕຣນິກ ໃຫ້ສາມາດເຊື່ອມໂຍງກັນໄດ້ຢ່າງສະດວກ, ວ່ອງໄວ ແລະ ປອດໄພ ທັງສູນກາງ ແລະ ທ້ອງຖິ່ນ; ຂະຫຍາຍການນຳໃຊ້ລະບົບອີເມວ (e-mail) ແລະ ລະບົບກອງປະຊຸມທາງໄກ (Video Conference) ຂອງລັດຖະບານ; ປັບປຸງ ແລະ ຂະຫຍາຍການນຳໃຊ້ລະບົບຫ້ອງການທັນສະໄໝ (e-office) ແລະ ລະບົບແຊເອກະສານ (G-share) ແນໃສ່ປັບປຸງລະບົບເອກະສານ ແລະ ການບໍລິຫານເອກະສານຂອງລັດຖະບານ; ປັບປຸງ ແລະ ຂະຫຍາຍການນຳໃຊ້ລະບົບສື່ສານພາກລັດ (G-Chat) ແລະ ລະບົບເວບໄຊພາກລັດ (G-Web Platform) ເພື່ອສົ່ງເສີມການສື່ສານພາຍໃນພາກລັດ ແລະ ການສື່ສານກັບສັງຄົມ; | ກະຊວງເຕັກໂນໂລຊີ ແລະ ການສື່ສານ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຊື່ອມຕໍ່ລະບົບ Mobile Money ກັບລະບົບ | ກະຊວງເຕັກໂນໂລ | - ກະຊວງ, ອົງການ | |

| | | | | |
|---|---|---|---|---|
| | TaxRIS ຂອງກົມສ່ວຍສາອາກອນ, ກະຊວງການເງິນ ເພື່ອຊ່ວຍໃນການເກັບ VAT; ອອກນິຕິກຳຄຸ້ມຄອງຜູ້ໃຫ້ບໍລິການຊຳລະສະສາງການເງິນເອເລັກໂຕຣນິກເທິງໂທລະສັບມືຖື, ສ້າງມາດຕະຖານ QR Code ແລະ ເລັ່ງປັບປຸງລະບົບສູນກາງເຊື່ອມຕໍ່ Lao payment Network (LAPNET) ເພື່ອເປີດໃຫ້ລະບົບ Mobile Money ສາມາດເຊື່ອມຕໍ່ເຂົ້າໄດ້. | ຊີ ແລະ ການສື່ສານ | ກ່ຽວຂ້ອງ<br>- ແຂວງ, ນວ | |
| **9.** | **ມອບໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການສົມທົບກັບຂະແໜງ ການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ເອົາໃຈໃສ່ສ້າງ ແລະ ປັບປຸງສະຖານີຄຸນນະພາບອາກາດໃຫ້ເປັນລະບົບທັນສະໄໝ; ເພີ່ມທະວີການຄຸ້ມຄອງສິ່ງເສດເຫຼືອແບບຄົບວົງຈອນໃນການກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານບັນດາສະໜາມຂີ້ເຫຍື້ອໃຫ້ໄດ້ມາດຕະຖານ ໃນຂອບເຂດທົ່ວປະເທດ ຢ່າງໜ້ອຍ 2 ຈຸດ. ພ້ອມນັ້ນ ສືບຕໍ່ສ້າງວິໄສທັດ, ຍຸດທະສາດ ແລະ ແຜນດຳເນີນງານວ່າດ້ວຍການຄວບຄຸມມົນລະພິດແຫ່ງຊາດ ແລະ ສືບຕໍ່ສ້າງແຜນງານກ່ຽວກັບການປະກອບ ສ່ວນແກ້ໄຂຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ແຜນງານແຫ່ງຊາດ ກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ດຳເນີນການປະເມີນ ແລະ ກຳນົດຍຸດທະສາດການປ່ອຍທາດອາຍເຮືອນແກ້ວ ແລະ ການດູດຊຶມຊັບໃຫ້ເປັນສູນໃນປີ 2050; | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ສຸມໃສ່ການປະຕິບັດວາລະແຫ່ງຊາດ ໂດຍດຳເນີນການປັບປຸງລະບົບການຂຶ້ນທະບຽນອອກໃບຕາດິນ, ການຈົດທະບຽນທີ່ດິນ ແລະ ການຫັນຈາກລະບົບເຈ້ຍໃຫ້ເປັນລະບົບດິຈິຕອນ ເພື່ອຫຼຸດຜ່ອນຂັ້ນຕອນ, ໄລຍະເວລາ, ຫຼຸດຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ມີຄວາມໂປ່ງໃສ; ຄົ້ນຄວ້າການຫັນບາງໜ່ວຍງານບໍລິການໃຫ້ກຸ້ມຕົນເອງທາງດ້ານງົບປະມານ ແລະ ປະກອບສ່ວນຕໍ່ການເກັບລາຍຮັບເປັນທັນສະໄໝ. | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ເລັ່ງປະຕິບັດການມອບໝາຍຄວາມຮັບຜິດຊອບຂາດຕົວ ໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ແລະ ນະຄອນ ໃຫ້ສາມາດຂຶ້ນທະບຽນອອກໃບຕາດິນ ແລະ | ກະຊວງຊັບພະຍາກອນທຳ | - ກະຊວງ, ອົງການກ່ຽວຂ້ອງ | |

| | | | | |
|---|---|---|---|---|
| | ເຄື່ອນໄຫວຕາມພາລະບົດບາດຂອງວຽກງານທີ່ດິນຕາມກົດໝາຍລະບຸໄວ້ ເພື່ອເພີ່ມຄວາມຄ່ອງຕົວໃນການດຳເນີນທຸລະກຳດ້ານທີ່ດິນ ແລະ ສືບຕໍ່ເລັ່ງວຽກງານເຊື່ອມຈອດຖານຂໍ້ມູນທີ່ດິນກັບຂະແໜງການເງິນ ແລະ ທະນາຄານ ເພື່ອອຳນວຍຄວາມສະດວກ ແລະ ເພີ່ມປະສິດທິພາບໃນການຈັດເກັບລາຍຮັບ. | ມະຊາດ ແລະ ສິ່ງແວດລ້ອມ | - ແຂວງ, ນວ | |
| 4 | ປະເມີນຄືນວິທີການສຳຫຼວດປ່າໄມ້ແຫ່ງຊາດ (NFI) ຄັ້ງທີ III ເພື່ອກຽມຄວາມພ້ອມໃນການສຳຫຼວດປ່າໄມ້ແຫ່ງຊາດ ຄັ້ງທີ IV ໃນປີ 2024 ເພື່ອປະເມີນການປ່ຽນແປງ ແລະ ການສະສົມທາດກາກບອນຢູ່ໃນປ່າໄມ້ໃນຂອບເຂດທົ່ວປະເທດ. | ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ສ້າງຕັ້ງກອງຄຸ້ມຄອງປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດທີ່ກວມໃນຫຼາຍແຂວງ ແລະ ເປັນມໍລະດົກພາກພື້ນ ໃຫ້ໄດ້ທັງໝົດ 6 ເຂດທີ່ຍັງເຫຼືອ ແລະ ປັບປຸງການຈັດຕັ້ງ ໃຫ້ສອດຄ່ອງຕາມພາລະບົດບາດ; ສ້າງແຜນຈັດສັນ ໂດຍການກຳນົດ ແລະ ແບ່ງເຂດຕ່າງໆໃຫ້ລະອຽດເປັນຕົ້ນ: ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້ ແລະ ເຂດກັນຊົນຂອງປ່າສະຫງວນ ແລະ ອຸທິຍານແຫ່ງຊາດ ໃຫ້ສຳເລັດ ພ້ອມທັງສົ່ງເສີມການດຳເນີນກິດຈະການທ່ອງທ່ຽວທຳມະຊາດແບບອະນຸລັກຢູ່ໃນເຂດດັ່ງກ່າວ. | ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 6 | ຕິດຕາມກວດກາ ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງບັນດາໂຄງການພັດທະນາຕ່າງໆ (ທັງບໍລິສັດພາຍໃນ ແລະ ຕ່າງປະເທດ) ໂດຍສະເພາະການທົດລອງຂຸດຄົ້ນແຮ່ທາດ ເພື່ອຮັບປະກັນການປ້ອງກັນຜົນກະທົບດ້ານສິ່ງແວດລ້ອມ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ. | ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| **7** | ສືບຕໍ່ຊຸກຍູ້ຕິດຕາມ ແລະ ປະເມີນການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງບັນດາໂຄງການພັດທະນາຕ່າງໆ ຈາກນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນສ້າງລາຍຮັບໃຫ້ມີປະສິດທິພາບ ແລະ ຍືນຍົງ. | ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| 10) | ມອບໃຫ້ຂະແໜງສຶກສາທິການ ແລະ ກິລາ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້: | | | |
| 1 | ສືບຕໍ່ປັບປຸງສະພາບແວດລ້ອມຂອງສະຖານການສຶກສາ ໂດຍການສ້າງພື້ນຖານໂຄງລ່າງການສຶກສາຢ່າງເໝາະສົມ, ສະໜອງອຸປະກອນການຮຽນ-ການສອນ, ປຶ້ມຕຳລາຮຽນໃຫ້ທົ່ວເຖິງ; ສຸມໃສ່ແກ້ໄຂບັນຫາການປະລະການຮຽນ ໃນທຸກຊັ້ນ, ທຸກສາຍຂອງການສຶກສາ ແລະ ສົ່ງເສີມໃຫ້ນັກຮຽນຈົບມັດທະຍົມຕອນຕົ້ນ-ຕອນປາຍ ເຂົ້າຮຽນຕໍ່ສາຍອະຊີວະສຶກສາ, ພ້ອມນີ້ ດຳເນີນການຕິດຕາມກວດກາ ເພື່ອຊອກຫາສາເຫດ ແລະ ວິທີແກ້ໄຂ ກ່ຽວກັບການປະລະການຮຽນ; ປັບປຸງ ແລະ ຂະຫຍາຍລະບົບການຮຽນ-ການສອນ ໃນຫຼາກຫຼາຍຮູບແບບ ແລະ ຄົບຖ້ວນ ຕາມຫຼັກວິຊາການ; ພ້ອມທັງຮັບປະກັນດ້ານຄຸນນະພາບ ແລະ ຄວບຄຸມທຸກພື້ນທີ່ໃນຂອບເຂດທົ່ວປະເທດ ໂດຍສະເພາະໃນເຂດຫ່າງໄກສອກຫຼີກ, ຮັບປະກັນໃຫ້ເດັກທຸກຄົນໃນເກນອາຍຸທີ່ຮຽນຈົບຊັ້ນປະຖົມສຶກສາ ຕາມມາດຕະຖານຂອງຫຼັກສູດ, ສ້າງໂອກາດໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ສືບຕໍ່ຮຽນໃນສາຍອາຊີວະສຶກສາຫຼາຍຂຶ້ນ ພ້ອມທັງຂະຫຍາຍໂຮງຮຽນສາມັນວິຊາຊີບໃນຊັ້ນມັດທະຍົມຕອນປາຍ; ແກ້ໄຂບັນຫາການຂາດແຄນຄູ ແລະ ຄູອາສາສະໝັກ; | ກະຊວງສຶກສາທິການ ແລະ ກິລາ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ຄົ້ນຄ້ວາເພີ່ມເງິນອຸດໜູນໃຫ້ນັກຮຽນ-ນັກສຶກສາທີ່ດ້ອຍໂອກາດ ໃນສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນໃນປັດຈຸບັນ ໂດຍສືບຕໍ່ພິຈາລະນາຄວາມອາດສາມາດເປັນໄປໄດ້ໃນການກຳນົດນະໂຍບາຍສ້າງເງື່ອນໄຂສົ່ງເສີມການສຶກສາໃຫ້ນັກຮຽນ-ນັກສຶກສາ ທີ່ມີຄວາມຕັ້ງໃຈໃນການຮ່ຳຮຽນ; | ກະຊວງສຶກສາທິການ ແລະ ກິລາ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ສົ່ງເສີມໃຫ້ນັກສຶກສາທີ່ຮຽນຈົບຊັ້ນມັດທະຍົມຕອນປາຍທີ່ມີຜົນການຮຽນດີ ໄດ້ມີໂອກາດສືບຕໍ່ຮຽນໃນສາຍສ້າງຄູ ແລະ ໃນລະດັບມະຫາວິທະຍາໄລ ໂດຍສະເພາະໃນສາຍວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ, ສືບຕໍ່ສະໜອງການສຶກສານອກໂຮງຮຽນ ໃຫ້ແກ່ກຸ່ມເປົ້າໝາຍຊາວໜຸ່ມ ແລະ ຜູ້ໃຫຍ່ທີ່ດ້ອຍໂອກາດ, ຜູ້ທີ່ຕ້ອງການຍົກລະດັບທັກສະ, ຜູ້ທີ່ປະລະ, ຕົກຫຼົ່ນຈາກສາຍສາມັນ ໂດຍຜ່ານສູນການສຶກສາຊຸມຊົນ, ສູນການສຶກສານອກໂຮງຮຽນ, ຝຶກອົບຮົມກັບທີ່, ເຄື່ອນທີ່, ຜ່ານໂທລະພາບສຶກສາ ແລະ ກິລາ ແລະ ຊ່ອງທາງອື່ນໆ ໂດຍສະເພາະ | ກະຊວງສຶກສາທິການ ແລະ ກິລາ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| | ແມ່ນຂະຫຍາຍໄປສູ່ເຂດຫ່າງໄກສອກຫຼີກ ແລະ ດ້ອຍໂອກາດ; | | | |
| 4 | ສືບຕໍ່ພັດທະນາກິລາ-ກາຍຍະກຳມວນຊົນ ແລະ ກິລາໃນໂຮງຮຽນໃຫ້ກວ້າງຂວາງ, ພ້ອມທັງສ້າງເງື່ອນໄຂໃຫ້ແກ່ເດັກນ້ອຍທີ່ມີພອນສະຫວັນ ໄດ້ເຂົ້າຮຽນໃນໂຮງຮຽນພອນສະຫວັນກິລາ ແລະ ເຂົ້າພັນຈຸເປັນນັກກິລາຂອງສະຫະພັນກິລາໃດໜຶ່ງ ເພື່ອໃຫ້ພວກກ່ຽວໄດ້ມີໂອກາດເຂົ້າຮ່ວມການແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນ; | ກະຊວງສຶກສາທິການ ແລະ ກິລາ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການຄົ້ນຄວ້າວິທະຍາສາດ, ພ້ອມທັງສົ່ງເສີມໃຫ້ພາກລັດ ແລະ ເອກະຊົນລົງທຶນເຂົ້າໃນການຄົ້ນຄວ້າວິທະຍາສາດ ແລະ ນຳໃຊ້ຜົນການຄົ້ນຄວ້າດັ່ງກ່າວເຂົ້າໃນການພັດທະນານະວັດຕະກຳ ແລະ ພັດທະນາເສດຖະກິດຂອງຊາດ; | ກະຊວງສຶກສາທິການ ແລະ ກິລາ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| **11)** | **ມອບໃຫ້ຂະແໜງສາທາລະນະສຸກ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ສືບຕໍ່ພັດທະນາວຽກງານສາທາລະນະສຸກ ໃຫ້ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ; ຍົກລະດັບຄວາມຮູ້ ຄວາມຊຳນານງານດ້ານວິຊາສະເພາະ, ຄຸນສົມບັດ, ຈັນຍາບັນ, ຈັນຍາທຳ ແລະ ກິລິຍາທ່າທີບໍລິການຮັບໃຊ້ ເພື່ອຮັບປະກັນການໃຫ້ບໍລິການສຸຂະພາບທີ່ມີຄຸນນະພາບ ສ້າງໄດ້ຄວາມເພິ່ງພໍໃຈໃຫ້ແກ່ປະຊາຊົນເພີ່ມຂຶ້ນ; | ກະຊວງສາທາລະນະສຸກ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ປັບປຸງລະບົບຕິດຕາມ ແລະ ເຝົ້າລະວັງຄວາມປອດໄພຂອງອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ຈຳໜ່າຍ ແລະ ຈໍລະຈອນແຈກຢາຍ ກໍຄື ການນຳເຂົ້າວັດຖຸດິບ ຫຼື ເຄມີຕ່າງໆໃນທົ່ວປະເທດ ກໍຄື ຕາມຂອບເຂດຊາຍແດນ ໂດຍມີລະບົບແຈ້ງເຕືອນຮີບດ່ວນ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພ; | ກະຊວງສາທາລະນະສຸກ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ສືບຕໍ່ປັບປຸງລະບົບຂໍ້ມູນ-ຂ່າວສານສາທາລະນະສຸກທີ່ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ | ກະຊວງ | - ກະຊວງ, ອົງການ | |

| | | | | |
|---|---|---|---|---|
| | ສາມາດນຳໃຊ້ໄດ້ຢ່າງກວ້າງຂວາງ; ມີການປ້ອນຂໍ້ມູນແຕ່ຮາກຖານຂຶ້ນມາ ພ້ອມທັງນຳໃຊ້ແຟ້ມຄອບຄົວ ໃຫ້ສາມາດຕິດຕາມ ຕີລາຄາບັນດາຕົວຊີ້ບອກ ແລະ ການນຳໃຊ້ເຂົ້າໃນການວາງແຜນໃນແຕ່ລະຂັ້ນ ໄປຄຽງຄູ່ກັບ ການໂຄສະນາສຸຂະສຶກສາ ເພີ່ມຄວາມຮັບຮູ້, ເຂົ້າໃຈ ແລະ ການມີສ່ວນຮ່ວມຂອງປະຊາຊົນ ແລະ ຊຸມຊົນໃຫ້ຫຼາຍຂຶ້ນ; | ສາທາລະນະສຸກ | ກ່ຽວຂ້ອງ<br>- ແຂວງ, ນວ | |
| 4 | ຄົ້ນຄວ້າປັບປຸງກອງທຶນປະກັນສຸຂະພາບ ໃຫ້ເປັນຫົວໜ່ວຍການເງິນເອກະລາດຄືກັບກອງທຶນປະກັນສັງຄົມ ໂດຍບໍ່ຂຶ້ນກັບພາກ 63 ຂອງກະຊວງສາທາລະນະສຸກ ພ້ອມທັງເພີ່ມອັດຕາສ່ວນແບ່ງຈາກປະກັນສັງຄົມ ໃຫ້ກອງທຶນປະກັນສຸຂະພາບ ຈາກ 1,25% ຂຶ້ນເປັນ 2% ແລະ ຈັດສັນເພີ່ມງົບປະມານ ໃຫ້ກອງທຶນປະກັນສຸຂະພາບ. | ກະຊວງ<br>ສາທາລະນະສຸກ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານ ສຳລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດ ແລະ ເດັກນ້ອຍ ແລະ ຍຸດທະສາດໂພຊະນາການ ໂດຍສຸມໃສ່ບັນດາແຂວງ, ເມືອງ ແລະ ໂຮງໝໍນ້ອຍ ທີ່ຍັງຫຍຸ້ງຍາກ ດ້ອຍການຫັນວິຊາການ, ງົບປະມານ ແລະ ເງື່ອນໄຂຄວາມສະດວກດ້ານຕ່າງໆ ພ້ອມທັງລະດົມການມີສ່ວນຮ່ວມຂອງອຳນາດການປົກຄອງ ແລະ ຊຸມຊົນໃນທ້ອງຖິ່ນໃຫ້ຫຼາຍຂຶ້ນ; | ກະຊວງ<br>ສາທາລະນະສຸກ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| **12)** | **ມອບໃຫ້ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ຊຸກຍູ້ ແລະ ຄົ້ນຄວ້າສ້າງນະໂຍບາຍການດັດສົມມະຫາພາກການພັດທະນາສີມືແຮງງານ ເພື່ອຕອບສະໜອງແຮງງານທີ່ມີຄຸນນະພາບຕາມຄວາມຕ້ອງການຂອງຕະຫຼາດແຮງງານໃນຂະແໜງການເສດຖະກິດ; | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ສົ່ງເສີມການຈັດຫາວຽກເຮັດງານທຳ ໃນຕະຫຼາດແຮງງານຕາມຂະແໜງການເສດຖະກິດ ຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ມີຄວາມສົມຄູ່ ແລະ ຍືນຍົງ ເພື່ອຫຼຸດຜ່ອນການລັ່ງໄຫຼ ໄປເຮັດວຽກຢູ່ປະເທດເພື່ອນບ້ານແບບບໍ່ຖືກຕາມກົດໝາຍ; | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການ ກ່ຽວຂ້ອງ | |

| | | | | |
|---|---|---|---|---|
| | | | - ແຂວງ, ນວ | |
| 3 | ສົມທົບອົງການສາມຝ່າຍ ຕິດຕາມ ແລະ ກວດກາແຮງງານ ໂດຍສະເພາະແຮງງານທີ່ເຮັດວຽກກະສິກຳ, ລ້ຽງສັດ ແລະ ແຮງງານທີ່ເຮັດວຽກຢູ່ໂຄງການລົງທຶນຂອງຕ່າງປະເທດ ເພື່ອປົກປ້ອງ ແລະ ສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ພ້ອມທັງສ້າງຄວາມປອດໄພຮອບດ້ານ ໃນສະຖານທີ່ເຮັດວຽກ ຕາມລະບຽບກົດໝາຍ; | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 4 | ສືບຕໍ່ປະສານສົມທົບກັບພາກສ່ວນເອກະຊົນ ດຳເນີນການຂຶ້ນທະບຽນແຮງງານພາຍໃນ ແລະ ແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ໃຫ້ເປັນຮູບປະທຳຕົວຈິງ, ພ້ອມທັງເຊື່ອມຕໍ່ຂໍ້ມູນ ແລະ ສະໜອງຂໍ້ມູນ ລະຫວ່າງ ກົມສ່ວຍສາອາກອນ, ກະຊວງການເງິນ ແລະ ກົມການຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມໃຫ້ເປັນລະບົບ; | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ຄົ້ນຄ້ວາປັບປຸງຄ່າແຮງງານຂັ້ນຕ່ຳ ໃຫ້ຜູ້ອອກແຮງງານພາກທຸລະກິດ ໃນແຕ່ລະໄລຍະ ເພື່ອຮັບປະກັນຊີວິດການເປັນຢູ່ ແລະ ສະຫວັດດີການແຮງງານ; | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 6 | ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດການປະຕິວັດຊາດປະຊາທິປະໄຕ ຕາມກຸ່ມເປົ້າໝາຍບູລິມະສິດຕ່າງໆ ໃຫ້ໄດ້ຕາມແຜນການທີ່ວາງໄວ້ ແລະ ສູ້ຊົນແກ້ໄຂບັນຫານີ້ໃຫ້ສຳເລັດໂດຍພື້ນຖານ ໃນປີ 2025; | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 7 | ສຸມໃສ່ການສ້າງວິຊາຊີບ, ການພັດທະນາສີມືແຮງງານໃຫ້ມີຄຸນະພາບ ແລະ ມີວິໄນແຮງງານ; ສາມາດຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດແຮງງານ; | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 8 | ປັບປຸງ ແລະ ຂະຫຍາຍກົນໄກ ການຊ່ວຍເຫຼືອຜູ້ໄດ້ຮັບຜົນກະທົບຈາກໄພພິບັດຕ່າງໆ ໃຫ້ມີປະສິດຜົນ ໂດຍການຊຸກຍູ້ໃຫ້ມີການສ້າງຕັ້ງກອງທຶນໄພພິບັດ ຢູ່ຂັ້ນທ້ອງຖິ່ນ ຫຼາຍຂຶ້ນ; | ກະຊວງແຮງງານ ແລະ ສະຫວັດດີ | - ກະຊວງ, ອົງການ ກ່ຽວຂ້ອງ | |

| | | | | |
|---|---|---|---|---|
| | | ການສັງຄົມ | - ແຂວງ, ນວ | |
| 9 | ເພີ່ມທະວີການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມ ແນໃສ່ຂະຫຍາຍອັດຕາການປົກຄຸມລະບົບປະກັນສັງຄົມ (ພາກລັດ, ພາກທຸລະກິດ ແລະ ຜູ້ສະໝັກໃຈ) ໃຫ້ກວ້າງຂວາງ, ຮັບປະກັນການປະຕິບັດນະໂຍບາຍສະຫວັດດີການສັງຄົມໃຫ້ຜູ້ທຸກຍາກດ້ອຍໂອກາດ, ຜູ້ປະສົບໄພພິບັດທາງທຳມະຊາດ, ຜູ້ປະສົບເຄາະຮ້າຍຈາກລະເບີດບໍ່ທັນແຕກຕົກຄ້າງ ແລະ ອື່ນໆ. | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 13) | **ມອບໃຫ້ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການສົມທົບກັບຂະແໜງ ການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ສຸມໃສ່ກະກຽມເປີດປີທ່ອງທ່ຽວລາວ ປີ 2024 ໃຫ້ໄປຕາມແຜນການທີ່ກຳນົດໄວ້ ເພື່ອສົ່ງເສີມນັກທ່ອງທ່ຽວສາກົນ ແລະ ພາຍໃນໃຫ້ເພີ່ມຂຶ້ນ ໂດຍການໂຄສະນາຜ່ານສື່ຕ່າງໆ; ຈັດກິດຈະກຳການ ທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ, ວັດທະນະທຳ, ບຸນປະເພນີ ແລະ ເທດສະການຕ່າງໆຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຫຼາກຫຼາຍ; ປັບປຸງສະຖານທີ່ທ່ອງທ່ຽວ, ສະຖານທີ່ພັກ ໃຫ້ມີຄວາມສະອາດ, ສະດວກ ແລະ ປອດໄພ ເພື່ອສ້າງຄວາມປະທັບໃຈໃຫ້ແກ່ນັກທ່ອງທ່ຽວ; | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ສ້າງແຜນຊຸກຍູ້ສົ່ງເສີມ ແລະ ຈັດຕັ້ງປະຕິບັດຮ່ວມກັບພາກທຸລະກິດ ໃນການຈັດຕັ້ງກິດຈະກຳສົ່ງເສີມການທ່ອງທ່ຽວ ທີ່ຕິດພັນກັບງານເທດສະການຂອງທ້ອງຖິ່ນ ແລະ ຜະລິດຕະພັນຫັດຖະກຳ, ການທ່ອງທ່ຽວກະສິກຳເປັນເອກະລັກສະເພາະຂອງແຕ່ລະທ້ອງຖິ່ນ; ຊຸກຍູ້ສົ່ງເສີມການເຂົ້າຮ່ວມງານວາງສະແດງສາກົນ ເພື່ອໂຄສະນາການທ່ອງທ່ຽວໃຫ້ເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍ; | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ເອົາໃຈໃສ່ສົ່ງເສີມ ການປົກປັກຮັກສາວັດທະນາທຳ, ຮີດຄອງປະເພນີອັນດີງາມຂອງຊາດໄປຄຽງຄູ່ກັບການພັດທະນາວຽກງານສື່ມວນຊົນຕ່າງໆ ໃຫ້ມີຄວາມທັນສະໄໝ ແລະ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໃນເງື່ອນໄຂໃໝ່; ສຸມໃສ່ສຳຫຼວດ, ຂຶ້ນທະບຽນມໍລະດົກລະດັບທ້ອງຖິ່ນ ແລະ ລະດັບຊາດ; ຊຸກຍູ້ສົ່ງເສີມດ້ານວິຊາການຂອງຂະແໜງວັດທະນະທຳ, ການສ້າງບ້ານວັດທະນະທຳ ແລະ ຄອບຄົວວັດທະນະທຳ ໃຫ້ມີຄຸນນະພາບເທື່ອລະ | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| | ກ້າວ. | | | |
| **14.** | **ມອບໃຫ້ຂະແໜງການຕ່າງປະເທດ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ປຶກສາຫາລືການຮ່ວມມືຮອບດ້ານກັບປະເທດເພື່ອນມິດຍຸດທະສາດ, ຄູ່ຮ່ວມພັດທະນາ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ບົນພື້ນຖານການຮ່ວມມືຕາມທິດຕ່າງຝ່າຍຕ່າງມີຜົນປະໂຫຍດ ຄຽງຄູ່ກັບການຕິດຕາມ ແລະ ເຝົ້າລະວັງ ສະພາບການຜັນແປຂອງພາກພື້ນ ແລະ ສາກົນ ເພື່ອໃຫ້ສາມາດຕີລາຄາ ແລະ ເປັນພື້ນຖານໃນການວາງນະໂຍບາຍການຕ່າງປະເທດໃຫ້ສອດຄ່ອງ, ກົມກຽວໃນແຕ່ລະໄລຍະ ພ້ອມທັງຄົ້ນຄວ້າສ້າງລະບຽບການ, ມາດຕະການ ແລະ ນະໂຍບາຍຕ່າງໆ ເພື່ອຊຸກຍູ້ສົ່ງເສີມການຄ້າ ແລະ ການສົ່ງອອກໃຫ້ໂລ່ງລ່ຽນ ພ້ອມທັງຜັນຂະຫຍາຍ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ພັນທະບັນດາສັນຍາທີ່ ສປປ ລາວ ໄດ້ລົງນາມໃນຂອບສັນຍາສອງຝ່າຍລະຫວ່າງ ໃຫ້ເຂົ້າສູ່ລວງເລິກ ແລະ ປະກົດຜົນເປັນຈິງຕາມລະດັບຄາດໝາຍທີ່ວາງໄວ້ ແລະ ສືບຕໍ່ເຂົ້າຮ່ວມກອງປະຊຸມຕ່າງໆໃນແຕ່ລະໄລຍະ; | ກະຊວງການຕ່າງປະເທດ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ກະກຽມເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ ກອງປະຊຸມໃຫຍ່ໄອປາ ຄັ້ງທີ 45 ໃນປີ 2024 ໂດຍຖືເອົາໂອກາດດັ່ງກ່າວໂຄສະນາດຶງດູດການລົງທຶນ, ສົ່ງເສີມການຜະລິດສິນຄ້າ ແລະ ການບໍລິການ; | ກະຊວງການຕ່າງປະເທດ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ຈັດຕັ້ງປະຕິບັດຂໍ້ຕົກລົງ, ສັນຍາ, ສົນທິສັນຍາ ທີ່ ສປປ ລາວ ໄດ້ລົງນາມ ແລະ ເປັນພາຄີໃຫ້ເປັນຮູບປະທຳ; | ກະຊວງການຕ່າງປະເທດ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 4 | ຈັດຕັ້ງປະຕິບັດໂຄງການຂະໜາດໃຫຍ່ ແລະ ບັນດາໂຄງການຍຸດທະສາດຮ່ວມມືກັບຕ່າງປະເທດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; | ກະຊວງການຕ່າງປະເທດ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| 5 | ເປັນເຈົ້າການໃນການຕິດຕາມການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງຂອງ ສປປ ລາວ; ພ້ອມທັງປະສານສົມທົບກັບຄະນະກອງເລຂາ ແລະ ຂະແໜງການທີ່ກ່ຽວຂ້ອງໃນການກະກຽມບົດລາຍງານແຫ່ງຊາດແບບສະໝັກໃຈ ສະບັບທີ 3 ຂອງ ສປປ ລາວ ເພື່ອລາຍງານຕໍ່ກອງປະຊຸມສະມັດຊາໃຫຍ່ ຂອງສະປະຊາຊາດ ທີ່ນິວຢອກ, ສະຫະລັດອາເມລິກາໃນປີ 2024. | ກະຊວງການຕ່າງປະເທດ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 15. | **ມອບໃຫ້ຂະແໜງຍຸຕິທຳ, ອົງການໄອຍະການປະຊາຊົນສູງສຸດ ແລະ ຂະແໜງສານປະຊາຊົນສູງສຸດ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ເອົາໃຈໃສ່ຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ຕາມທິດ 3 ສ້າງ, ຄົ້ນຄ້ວາ ແລະ ປະຕິບັດຫຼັກການລວມສູນ ແລະ ການແບ່ງຂັ້ນຄຸ້ມຄອງໃຫ້ຈະແຈ້ງສອດຄ່ອງກັບກົດໝາຍ; | ກະຊວງຍຸຕິທຳ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງໃນຂົງເຂດຍຸຕິທຳ, ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດ ໝາຍໃນຂົງເຂດຕ່າງໆ ໃຫ້ເປັນລະບົບຄົບຊຸດ ເພື່ອຮັບປະກັນການຄຸ້ມຄອງບໍລິຫານລັດດ້ວຍກົດໝາຍ ໃຫ້ມີຜົນສັກສິດ ແນໃສ່ຮັບປະກັນການແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນທຸກຂົງເຂດຂອງສັງຄົມ ໃຫ້ໄປຕາມກົດໝາຍ, ຕາມຫຼັກການເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ ໂດຍສະເພາະປະຕິບັດມາດຕະການຕໍ່ຫົວໜ່ວຍງົບປະມານທີ່ລະເມີດວິໄນແຜນການ-ການເງິນ; ເພີ່ມທະວີການໂຄສະນາ ແລະ ເຜີຍແຜ່ກົດໝາຍ ຜ່ານຫຼາຍຊ່ອງທາງ ເພື່ອໃຫ້ສັງຄົມມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງກວ່າເກົ່າ; | ກະຊວງຍຸຕິທຳ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ສືບຕໍ່ປັບປຸງການຈັດຕັ້ງອົງການປະຕິບັດຄຳຕັດສິນຂອງສານຢູ່ແຕ່ລະຂັ້ນ ໃຫ້ສອດຄ່ອງກັບກົດໝາຍ ວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານສະບັບປັບປຸງ; ເພີ່ມທະວີການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະບັນດາອົງການປົກປ້ອງກົດໝາຍແຕ່ລະຂັ້ນ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນທີ່ກົດໝາຍກຳນົດ ແລະ ເອົາໃຈໃສ່ກວດກາຄືນຄຳຕັດສິນຂອງສານທີ່ປະຕິບັດບໍ່ໄດ້ ຫຼື ປະຕິບັດຍາກ; | ກະຊວງຍຸຕິທຳ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| 4 | ເອົາໃຈໃສ່ຄົ້ນຄ້ວາ ແລະ ແກ້ໄຂຄຳຮ້ອງ, ຄຳສະເໜີຂອງປະຊາຊົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ວ່ອງໄວ ແລະ ສອດຄ່ອງຕາມກົດໝາຍ; ອົງການໄອຍະການປະຊາຊົນແຕ່ລະຂັ້ນ ຕ້ອງເພີ່ມທະວີການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໂດຍສະເພາະການດຳເນີນຄະດີຢູ່ສານ, ການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ບົນພື້ນຖານຄຳຮ້ອງ ແລະ ການກວດກາການນຳໃຊ້ວິທີການສືບສວນ-ສອບສວນ ແລະ ການນຳໃຊ້ບັນດາມາດຕະການສະກັດກັ້ນຂອງອົງການສືບສວນ-ສອບສວນຢ່າງເຂັ້ມງວດ; | ກະຊວງຍຸຕິທຳ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ສ້າງ ແລະ ບຳລຸງຖັນແຖວພະນັກງານບຸກຄະລາກອນກົດໝາຍໃຫ້ກາຍເປັນຜູ້ຊຳນານງານ ແລະ ຊ່ຽວຊານດ້ານທິດສະດີ ແລະ ວິຊາການ. | ກະຊວງຍຸຕິທຳ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| **16.** | **ມອບໃຫ້ຂະແໜງພາຍໃນ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ສືບຕໍ່ຊຸກຍູ້ ແລະ ຕິດຕາມການປັບປຸງກົງຈັກການຈັດຕັ້ງພາລະບົດບາດຂັ້ນກົມ ແລະ ທຽບເທົ່າຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນໃຫ້ສຳເລັດ ບົນພື້ນຖານກົງຈັກການຈັດຕັ້ງໃຫ້ມີຄວາມກະທັດຮັດ, ມີພາລະບົດບາດໜ້າທີ່ຈະແຈ້ງ ແລະ ບໍ່ກ້າວກ່າຍຊໍ້າຊ້ອນວຽກງານເຊິ່ງກັນ ແລະ ກັນ; | ກະຊວງພາຍໃນ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ປະສານສົມທົບກັບບັນດາກະຊວງ-ອົງການ ເພື່ອສຶກສາຄວາມເປັນໄປໄດ້ ແລະ ມີເງື່ອນໄຂຄົບຖ້ວນຂອງບັນດາການຈັດຕັ້ງຂັ້ນຕ່າງໆ ໃນການຫັນເປັນຫົວໜ່ວຍວິຊາການທີ່ກຸ້ມຕົນເອງທາງດ້ານງົບປະມານ ເພື່ອສະເໜີຄະນະຮັບຜິດຊອບ ພິຈາລະນາ ແລະ ສະເໜີລັດຖະບານຮັບຮອງ; | ກະຊວງພາຍໃນ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ປັບປຸງລະບົບ ແລະ ກົນໄກການສະໜອງການບໍລິການຂອງລັດ ໃຫ້ສະດວກ, ວ່ອງໄວ ແລະ ມີຄວາມໂປ່ງໃສຂຶ້ນກວ່າເກົ່າ; | ກະຊວງພາຍໃນ | - ກະຊວງ, ອົງການກ່ຽວຂ້ອງ<br>- ແຂວງ, ນວ | |

| | | | | |
|---|---|---|---|---|
| 4 | ປັບປຸງການແບ່ງຂັ້ນຄຸ້ມຄອງ ແລະ ກົນໄກການປະສານງານ ລະຫວ່າງ ຂະແໜງການດ້ວຍກັນ, ສົມທາງກັບທ້ອງຖິ່ນ ໃນການບໍລິຫານລັດດ້ວຍກົດໝາຍ; ມອບຄວາມຮັບຜິດຊອບໃຫ້ຂັ້ນທ້ອງຖິ່ນຫຼາຍຂຶ້ນ ແລະ ຫຼີກລ່ຽງຊ່ອງຫວ່າງ ແລະ ການຊໍ້າຊ້ອນ ໃນຂະບວນການຈັດຕັ້ງປະຕິບັດ.ຜັນຂະຫຍາຍວຽກງານ 3 ສ້າງ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດເຂົ້າສູ່ລວງເລິກ, ເຂັ້ມແຂງ ແລະ ເປັນຮູບປະທຳຫຼາຍຂຶ້ນ. | ກະຊວງພາຍໃນ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| **17)** | **ມອບໃຫ້ກະຊວງປ້ອງກັນຊາດ ແລະ ກະຊວງປ້ອງກັນຄວາມສະຫງົບ ຈັດຕັ້ງປະຕິບັດວຽກງານຈຸດສຸມດັ່ງນີ້:** | | | |
| 1 | ສືບຕໍ່ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ; | - ກະຊວງປ້ອງກັນຊາດ;<br>- ກະຊວງປ້ອງກັນຄວາມສະຫງົບ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ສືບຕໍ່ສົມທົບກັບທຸກພາກສ່ວນ ປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຮອດທ້າຍປີ 2025 ໃຫ້ແຂງແຮງກວ່າເກົ່າ; ປະຕິບັດແນວທາງການຕ່າງປະເທດຂອງພັກໃຫ້ຖືກຕ້ອງ ເພື່ອຮັບປະກັນໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບ, ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ; | - ກະຊວງປ້ອງກັນຊາດ;<br>- ກະຊວງປ້ອງກັນຄວາມສະຫງົບ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນທຸກຂົງເຂດຂອງສັງຄົມໃຫ້ໄປຕາມກົດໝາຍ, ຕາມຫຼັກການເດັດຂາດ, ໂປ່ງໃສ ແລະ ມືອາຊີບ. | - ກະຊວງປ້ອງກັນຊາດ;<br>- ກະຊວງປ້ອງກັນຄວາມສະຫງົບ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| **18)** | **ມອບໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ, ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງນີ້:** | | | |
| 1 | ເອົາໃຈໃສ່ສ້າງ ແລະ ພັດທະນາໄວໜຸ່ມ, ແມ່ຍິງ ແລະ ຍົກສູງບົດບາດຍິງ-ຊາຍ ໃຫ້ເຂັ້ມແຂງ ເພື່ອເປັນພື້ນຖານໃຫ້ແກ່ການພັດທະນາໃນຍຸກໃໝ່ ຄຽງຄູ່ກັບການເຂັ້ມງວດໃນການຄຸ້ມຄອງ ແລະ | | - ກະຊວງ, ອົງການ ກ່ຽວຂ້ອງ | |

| | | | | |
|---|---|---|---|---|
| | ບໍລິຫານລັດດ້ວຍກົດໝາຍ ພ້ອມທັງສືບຕໍ່ຈັດຕັ້ງປະຕິບັດວຽກງານຂົງເຂດອື່ນໆ ຢ່າງເປັນເຈົ້າການ ແລະ ມີຄຸນນະພາບສູງຂຶ້ນ. | | - ແຂວງ, ນວ | |
| 2 | ຊຸກຍູ້ ແລະ ສົ່ງເສີມການຜະລິດສິນຄ້າ ຕາມທ່າແຮງແຕ່ລະທ້ອງຖິ່ນ ຕິດພັນກັບຂະບວນການ ຮັກຊາດ ແລະ ພັດທະນາ ຢ່າງກວ້າງຂວາງ ແລະ ເປັນຮູບປະທຳຫຼາຍຂຶ້ນ. | | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ຊຸກຍູ້ປຸກລະດົມສ້າງສະຕິໃຫ້ທຸກພາກສ່ວນທົ່ວສັງຄົມ ປະຕິບັດນະໂຍບາຍປະຢັດ, ພັດທະນາຕົນເອງໃຫ້ເຂັ້ມແຂງ. | | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| **19)** | **ແບ່ງຄວາມຮັບຜິດຊອບໃນການແກ້ໄຂຜົນການກວດສອບ** | | | |
| 1 | ມອບໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຊີ້ນຳ-ນຳພາການແກ້ໄຂຜົນການກວດສອບ ໃຫ້ເປັນຮູບປະທຳຂຶ້ນກວ່າເກົ່າ ແລະ ຖືເອົາການແກ້ໄຂຜົນການກວດສອບ ເປັນມາດຕະຖານໃນການປະເມີນ ບຸກຄະລາກອນ ທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ; | | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 2 | ມອບໃຫ້ ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເກັບກູ້ລາຍຮັບທີ່ກວດເຫັນເພີ່ມ ເຂົ້າງົບປະມານ ປີ 2024; ປະສານສົມທົບ ກັບ ອົງການກວດສອບແຫ່ງລັດ ວິເຄາະ-ວິໄຈ, ໄຈ້ແຍກ ລາຍຮັບ-ລາຍຈ່າຍ, ໜີ້ຕ້ອງຮັບ, ຈ່າຍລ່ວງໜ້າຄັງເງິນແຫ່ງຊາດ ທີ່ສະສົມໃນໄລຍະຜ່ານມາໃຫ້ລະອຽດ ອັນໃດຍັງສາມາດເກັບກູ້ຄືນໄດ້ ແລະ ອັນໃດບໍ່ສາມາດເກັບກູ້ຄືນໄດ້ ຫຼື ບໍ່ມີຕົວຕົນແລ້ວ ໃຫ້ລາຍງານລັດຖະບານຄົ້ນຄວ້າ ເພື່ອສະເໜີ ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ; | ກະຊວງການເງິນ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 3 | ມອບໃຫ້ ກະຊວງການເງິນ ຄົ້ນຄວ້າກຳນົດ ການແກ້ໄຂຜົນການກວດສອບ ເປັນແຫຼ່ງລາຍຮັບໜຶ່ງ | ກະຊວງການເງິນ | - ກະຊວງ, ອົງການ | |

| | | | | |
|---|---|---|---|---|
| | ເຂົ້າໃນສາລະບານ ງົບປະມານແຫ່ງລັດ; | | ກ່ຽວຂ້ອງ<br>- ແຂວງ, ນວ | |
| 4 | ມອບໃຫ້ ກະຊວງການເງິນ ຄົ້ນຄວ້າງົບປະມານໃຫ້ອົງການກວດສອບແຫ່ງລັດ ຈຳນວນ 14 ຕື້ກີບ (ຕື່ມເຂົ້າໃສ່ໃນງົບປະມານປົກກະຕິ ປີ 2024 ຈຳນວນ 42,19 ຕື້ກີບ, ລວມເປັນ 56,19 ຕື້ກີບ) ເພື່ອນຳໃຊ້ເຂົ້າໃນວຽກງານທີ່ຈຳເປັນ; ພ້ອມທັງ ສະໜອງເຄື່ອງມື ແລະ ອຸປະກອນ ເພື່ອຍົກສູງຄຸນນະພາບ, ເຕັກນິກ ແລະ ມາດຕະຖານຕ່າງໆ, ການຕິດຕາມຊຸກຍູ້, ກວດຄືນຜົນການແກ້ໄຂການກວດສອບ ແລະ ການເຄື່ອນໄຫວກວດສອບ ໃຫ້ມີປະສິດທິພາບ, ປະສິດທິຜົນ; | ກະຊວງການເງິນ | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 5 | ຄົ້ນຄວ້າເພີ່ມງົບປະມານໃຫ້ອົງການກວດກາແຫ່ງລັດ ຈຳນວນ 13 ຕື້ກີບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານກວດກາ; | | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |
| 6 | ມອບໃຫ້ ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ເພີ່ມຄວາມຮັບຜິດຊອບ ໃນການຮ່ວມມື, ປະສານສົມທົບ, ອຳນວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນ ແລະ ເຂົ້າຮ່ວມວຽກງານກວດສອບແຫ່ງລັດ ແລະ ຕັ້ງໜ້າແກ້ໄຂຜົນການກວດສອບຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ລັດໄດ້ວາງອອກໃຫ້ເຂັ້ມງວດ. | | - ກະຊວງ, ອົງການ ກ່ຽວຂ້ອງ<br>- ແຂວງ, ນວ | |

<u>ໝາຍເຫດ</u>: 1). ກຳນົດເວລາຈັດຕັ້ງປະຕິບັດແມ່ນຮອດ ວັນທີ 31 ທັນວາ 2024 ແລະ ມີການສະຫຼຸບການຈັດຕັ້ງປະຕິບັດໃນໄລຍະ 06 ເດືອນຕົ້ນປີ 2024 ແລະ ສະຫຼຸບທ້າຍປີ 2024.

2). ການສະຫຼຸບການຈັດຕັ້ງປະຕິບັດຂອງແຕ່ລະແໜງການ ແມ່ນໃຫ້ສະຫຼຸບຕາມໜ້າວຽກທີ່ໄດ້ກຳນົດໃນຕາຕະລາງສະບັບນີ້.

ນະຄອນຫຼວງວຽງຈັນ, ວັນທີ 21.12.2023

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ